ນິທານພື້ນເມືອງ

# ຍີ່ປຸ່ນ



## ນິທານພື້ນເມືອງ

# ຍີ່ປຸ່ນ



ຄະນະຈັດທຳ :

- ປະທານ, ຜູ້ແປ — ທຸມພັນ ລັດຕະນະວົງ
- ກ່າຍຄຳແປ — ນ. ທຸມມິວັນ 11 ປີ
  ແລະ
  ມລາງ ທ. ທຸ່ມມິອຽງ(ນຸດ) 7 ປີ
- ຈັດໜ້າ, ກວດຄຳຜິດ — ສຸຣິຍັນ ສີແສງຣັດ
- ພິມດີດ — ນ. ຈິດຕາ ຈັນທະນັນ


ຜູ້ຈັດພິມ :

ສະຖາບັນສິລະປະວັນນະຄະດີ ແລະ ພາສາສາດ

ຄະນະກຳມະການວິທະຍາສາດສັງຄົມ

ດ້ວຍຄວາມຮ່ວມມືຈາກ ກອງທຶນໂຕໂຢຕາ, ຍີ່ປຸ່ນ

ພິມຄັ້ງທີ 1, ຈຳນວນ 2.000 ຫົວ

# ສາລະບານ


| ລ/ດ | ຊື່ເລື່ອງ | ໜ້າ |
|---|---|---|
| 1 | ເມື່ອນົກກາເວົ້າງຽບສຽງ | 1 |
| 2 | ພິຍັກທີ່ພູກິໂຢຊາ | 15 |
| 3 | ໄຖ່ເຂົ້າບິນ | 21 |
| 4 | ພະຍາຂວານຟ້າ ລູກເຂີຍຄົນຂາຍເຂົ້າປຸ້ນ | 23 |
| 5 | ພະພຸດທະຣຸບ ອິມະມິຢະ | 26 |
| 6 | ນັກຊວາດນ້ຳ | 28 |
| 7 | ບຳເນັດຈາກສົງ | 30 |
| 8 | ສິບຫົກງອກ "ວະ" | 32 |
| 9 | ເດັກນ້ອຍຕາຍດິກນ້ຳ | 34 |
| 10 | ແມ່ນ້າ | 35 |
| 11 | ນົກຈອກແລະຫອນ | 38 |
| 12 | ເຣືອຕາອ່ຽວ | 40 |

| | | |
|---|---|---|
| 13 | ລູກໝາສວງ | 43 |
| 14 | ເຊັນໂກໂຣະຂຶ້ນຟ້າ | 45 |
| 15 | ແສງໄຟປະຫລາດ | 48 |
| 16 | ເສດຖີຍ້ອນປາສະໝ່ອຍ | 50 |
| 17 | ຫໍຜາສາດເຕົ່າ | 51 |
| 18 | ອາກະຕະໂລ ທ້າວຂີ້ໄຄ. | 53 |
| 19 | ຜີ່ກອງກ່ອຍມືໄວ | 56 |
| 20 | ນິທານເຖົ້າຕາບອດ | 59 |
| 21 | ເຈົ້າອາຣັກສະໝຸດ | 61 |
| 22 | ທ້າວເດນເບະກັບຜີສາດ | 65 |
| 23 | ຜີເສື້ອນ້ຳ | 69 |
| 24 | ໄປນະຣົກ | 71 |
| 25 | ບ່ອນບໍ່ສັກສິດ | 74 |
| 26 | ເຣັດຄືອາຈານກໍແລ້ວກັນ | 76 |
| 27 | ນິທານໝັດແລະເມັນ | 78 |
| 28 | ຕ້າບອດກິນເຂົ້າໜົມ | 81 |
| 29 | ນົກຈິກນ້ອຍແລະແຫລວ | 82 |
| 30 | ການແຂ່ງຂັນ | 84 |
| 31 | ເຫງັນນອງອາລະວາດ | 87 |

| | | |
|---|---|---|
| 32 | ໄລ່ຫນີຈາກນະຣົກ | 91 |
| 33 | ຜີສາດຮ້າຍ ແຫ່ງພູເຂົາອະມິດະ | 93 |
| 34 | ອ້າຍສາມໄຫ | 96 |
| 35 | ແຖນດຳ ແລະ ແຖນແດງ | 97 |
| 36 | ປາສະຫນ່ອຍ | 98 |
| 37 | ເປັນຫຍັງກຸ້ງຈຶ່ງຫລັງຫົບ | 101 |
| 38 | ກະໂຫລກຫົວຫລ້ອນຊ່າງລຳ | 104 |
| 39 | ແມວນ້ອຍກາຍເປັນຕ່ອນຄຳ | 107 |
| 40 | ເຕົ້ານ້ຳຊາຄຳ | 111 |
| 41 | ແມວຂອດໂມກກຶຈ | 113 |
| 42 | ກົ້ນຫມໍ້ແລະກົ້ນຄົນ | 117 |
| 43 | ຫມາ ແມວ ແລະງູ | 119 |
| 44 | ຫນ້າກະດົ້ງສີແດງ | 122 |
| 45 | ມ້າແຫ່ງມິຫະຣຸ | 124 |
| 46 | ພະຍິໂຊະຜັດແປ້ງ | 126 |
| 47 | ນ້ຳບົມ | 127 |
| 48 | ເປັດພະຍາ | 128 |
| 49 | ແມວສີແດງຂອງໂຊເບເອະໂດນ | 130 |
| 50 | ເທວັນແຕ່ງດອງ | 132 |

| | | |
|---|---|---|
| 51 | ຖ້ວຍຈານທາຍ | 135 |
| 52 | ຂັ້ນໄດພິຍັກ | 138 |
| 53 | ຕາທິບ | 141 |
| 54 | ປີງສົບໂປກ | 144 |
| 55 | ນັກຫລິ້ນສຳນອນ ແລະ ມ້າແປດໂຕ | 146 |
| 56 | ຫອຍສັງ | 149 |
| 57 | ນົກໄຟ | 152 |
| 58 | ພິ່ຍາຮ້າງ | 155 |
| 59 | ເມືອງບາດານ | 158 |
| 60 | ນົກຕູ້ | 161 |
| 61 | ກົກເຕົ້າຂອງບຸນຕະນະບະຕະ | 162 |
| 62 | ທ້າວລັນຕະປາ | 165 |
| 63 | ສາຫຸວັດໂງ່ງ່າວ · ແລະ ທ່ານໝໍຕັງຕິດໂປະ | 167 |
| 64 | ສ່ຽວພໍ່ລຸນ | 169 |
| 65 | ການພິດຖຽງກັນລະຫວ່າງມັນດ້າງແລະເຕົ້າຮູ້ | 171 |
| 66 | ກິຮາຊິ ຕຶກບັດເອົາດອນ | 173 |
| 67 | ຂາໃຫມ່ | 175 |
| 68 | ຈື່ໂກະ ແລະ ກະປູ | 177 |

| | | |
|---|---|---|
| 69 | ທວງເອົາເມຍ | 178 |
| 70 | ກົບໂອສະກະ ກັບ ກົບກຽວໂຕ | 180 |
| 71 | ພະຍື່ໂຊະປວດັກ | 182 |
| 72 | ຂີ້ກະເດືອນຕ່ຳເສື້ອ | 184 |
| 73 | ກອງເກົ່າ | 185 |
| 74 | ນົກຕ່າງຕີນ | 187 |
| 75 | ຜົວຂອງຜີຍ່າຮ້າງ | 188 |
| 76 | ນົກເຂົາຊາຍແລະນົກກາງແກ ປັນຄຳກັນ | 191 |
| 77 | ຂີ້ຢ້ານເກີດເປັນດີ | 193 |



ລູກຂອງພໍ່ທາວ... ຫົວຢ່າງຈະນ ຊອດຍົນນາມ.
(ມຸດອາຍຸ 5 ປີ)

# ເພື່ອນັກກາເອົາງບສູງ

ລູກເອີຍ ! ເມື່ອພໍ່ແລະແມ່ຂອງລູກ ຫອບເອົາລູກເຂົ້າ ເຮືອບິນເດີນທາງຈາກບ້ານເກີດເມືອງນອນຂອງລູກ ໄປເຖິງ ປະເທດຕ່າງເມືອງໄກ ພໍ່ແລະແມ່ຂອງລູກ ພ້ອມທັງອ້າຍເອື້ອຍແລະຍາດ ຕິ ວົງວານ ເພື່ອນສະຫນິດມິດສະຫາຍໃຜໆກໍ່ຮູ້ສຶກສະເຫມືອນ ມີນ້ຳທິບປາດລົງມາອາບໂລມຫົວໃຈທີ່ແຫ່ວແຫ້ງແລະຕີບຕັນ, ສະເຫມືອນ ມີແສງປະທີບດວງປະເສີດມາຊ່ອງຍວງຄວາມອັດອັ້ນຕັນໃຈ ໃຫ້ສະຫວ່າງສະໄຫວກັບມີຊີວິດຊີວາ ແລະສົດຊື່ນລື່ນເລີງຄືນ. ລູກຂອງ ພໍ່ໄດ້ມີໂອກາດໄປກອບກູ້ເອົາຊີວິດໄວ້ໃນສະຖານທີ່ແຫ່ງ ຄວາມຫວັງຄວາມຫມັ້ນໃຈ ແລະຄວາມສັກສິດ ສະຖານທີ່ ທີ່ມີຊື່ສຽງ ສູງເດັ່ນແລະພຽບພ້ອມດ້ວຍເຕັກໂນໂລຢີ ວິທະຍາສາດ ທາງດ້ານການແພດຢ່າງບໍ່ຫນ້ອຍຫນ້າແກ່ໃຜໃນອາຊີອາຄະເນ ເພື່ອນທັງຄົນລາວ ຄົນຟະລັ່ງ ຄົນໄທ ຄົນວຽດນາມ ຄົນໂຊວຽດ ຄົນກຳປູເຈຍ ຄົນອາເມ

ລິກາ ຄົນອິນເດຍ... .ຕະຫຼອດມູນນິທິເດັກໄທ ເດັກຝະລັ່ງ ແລະ ໂຮງພະຍາບານເອງໄດ້ໃຫ້ການອຸດໜູນຊ່ອຍຊູເອົາຊີວິດຂອງລູກໄວ້ ແລະຕ່າງກໍໝັ້ນໃຈນຳດວງຊະຕາອັນດີຂອງລູກ.

ເດືອນໜຶ່ງຜ່ານໄປ ອາການຂອງລູກດີຂຶ້ນ ອັນນຳເອົາຄວາມເບີກບານສຳລານໃຈມາສູ່ພໍ່ແມ່ຢ່າງລົ້ນເຫຼືອ ຈົນພໍ່ເອງໄດ້ຖາມ ໝໍວ່າ : " ອາການດີຂຶ້ນເຊັ່ນນີ້ ຄົງພໍ່ຈະກັບລາວໄດ້ໃນບໍ່ຊ້າ "ແລະ ທ່ານໝໍກໍຕອບວ່າ : " ອີກຈັກສອງອາທິດຄົງຈະກັບລາວໄດ້ແລ້ວ, ເພື່ອຮັກສາຍາວນານ "

ຄືນນັ້ນເອງເມື່ອຂອນຈະແຈ້ງ ເລີຍມີສຽງຮ້ອງຂອງນົກພໍ່ເຮີຍ ( ກາເວົາ ) ດັງມາຈາກບໍລິເວນໃກ້ຄຽງ. ສຽງຂອງມັນ ເປັນຽງ ເຊິ່ງເມື່ອໄດ້ຍິນແລ້ວ ກໍ່ອົດເຮັດໃຫ້ພໍ່ຄິດໄປຮອດລູກທີ່ນອນຢູ່ໂຮງໝໍຜູ້ດຽວ. ພ້ອມກັນນັ້ນພໍ່ກໍນຶກຊົມໃນໃຈຂອງພໍ່ວ່າ : " ໂບ ! ຄົນໄທນັ້ນຄິດຖືກອີຫຼີເອົານົກທີ່ປ່າໃຫຍ່ດົງດິບມາລ້ຽງໄວ້ໃນຕົວເມືອງ ຕົວນາ ເພື່ອຟັງສຽງຮ້ອງ ຂະນະທີ່ລາວພວກເຮົາຈະໄດ້ຍິນສຽງ ຮ້ອງຂອງນົກປະເພດນີ້ ຕ້ອງແມ່ນແຖບພູແຄຊ່ຳເໜືອບ່ອນທຸລະກັນດານ ".

ວັນນັ້ນເມື່ອພໍ່ແມ່ມາຫາລູກທີ່ໂຮງໝໍ ລູກຍິ້ມຫົວ ມີໃບໜ້າສົດຊື່ນສາມາລົງຈາກຕຽງໄປຫ້ອງນ້ຳໄປເບິ່ງໂທລະທັດ ແລະມາສົ່ງພໍ່ແມ່ ຢູ່ຈົນຈຳລິຟໄດ້.

" ພໍ່ແມ່ເມືອດີເນີ້ ນ້ອນຈົ່ງມາຫາລູກໄວ້ເນີ " ຄືນວັນ ຕໍ່ມາ

ຕອນຂ້ອນແຈ້ງ ສຽງນົກພໍ່ເຮີຍກໍ່ຍັງດັງຢູ່ໄກໆຕາມເຄີຍ.

" ພໍ່ເຮີຍ ! ພໍ່ເຮີຍ ! ພໍ່ເຮີຍ... " ແລ້ວກໍ່ງຽບຫາຍໄປ

ແມ່ຂອງລູກຖາມພໍ່ວ່າ :

" ແມ່ນສຽງນົກຫຍັງຮ້ອງ ຫຍັງມາສຽງເຢັນແທ້ "

ພໍ່ຮູ້ສຶກຕື່ນເຍືອກບາດໜຶ່ງ ເມື່ອຮູ້ວ່າແມ່ຂອງລູກກໍ່ມີຄວາມ ຮູ້ສຶກ ເໝືອນພໍ່.

" ແມ່ນນົກພໍ່ເຮີຍ ຕາມພາສາພື້ນບ້ານ ທາງຫລວງພະບາງ ເພາະສຽງມັນຮ້ອງວ່າ ພໍ່ເຮີຍ ພໍ່ເຮີຍ... ມັນມີນິທານ ພື້ນບ້ານ ພື້ນເມືອງເກົ່າແກ່ໜ້າເສົ້າໃຈເລື່ອງໜຶ່ງ ພໍ່ໄດ້ຕາຍຈາກລູກໄປ ຜູ້ລູກຄິດເຖິງພໍ່ເລີຍດັ້ນດອນຊອນປ່າ ຊອກເອີ້ນຫາພໍ່ຢູ່ຈົນຕາຍ. ເມື່ອຕາຍໄປແລ້ວ ກໍ່ເລີຍເກີດເປັນນົກພໍ່ເຮີຍ ເອີ້ນຫາພໍ່ຢູ່ບໍ່ຂາດ. ມັນແມ່ນນົກເຂົາລ້ຽງ "

ວັນຮຸ່ງຂຶ້ນມາ ເມື່ອພໍ່ແມ່ມາພົບລູກ ລູກມີໃບໜ້າສົດຊື່ນ ຂຶ້ນກ່ວາເດີມ ລູກແຕ້ມຮູບ ຫຼິ້ນເຄື່ອງຫຼິ້ນທເອອຍນົກເອົາມາຕອນ ເອົາສະເກັດລົດລູກຮັກແລະຫວງໄວ້ເວລາຫາຍເຈັບ ແລ້ວລູກຈະຫຼິ້ນ ໃຫ້ສົມໃຈມາສູບດ້ວຍຄວາມພູມໃຈ.

" ຢ່າສູບລູກ ຈັກໜ່ອຍຈະລົ້ມ ລູກຍັງບໍ່ທັນມີແຮງເທື່ອ "

" ບໍ່ລົມດອກ ລູກສຸບເບິ່ງຊຸ່ງ " ແລ້ວລູກກໍ່ຍິ້ມຫົວດ້ວຍຄວາມພໍໃຈ.

ເວລາຜ່ານໄປອາທິດກວ່າໆ ອາການຂອງລູກຍັງຢູ່ໃນສະພາບດີເໝືອນເດີມ. ພໍ່ແລະແມ່ກໍ່ໄດ້ມີໂອກາດໄປຮ້ານຄ້າຫາເຄື່ອງ ຫາຂອງ ເພື່ອກຽມໂຕພາລູກກັບບ້ານ ແລະຄ່ຳມາກໍ່ໄປກິນເຂົ້າ ເຮືອນອາວໄຊມະລົງແລະອາວະດີ. ແຕ່ຕອນຂອນແຈ້ງສຽງນົກກາເວົ້າໂຕເກົ່ານັ້ນ ໄດ້ຍາຍສະຖານທີ່ມາຈັບຢູ່ກະໂຕກົກມ່ວງເທິງຫ້ອນອນຂອງພໍ່ແລະແມ່ຮ້ອງ " ພໍ່ເຮີຍ ! ພໍ່ເຮີຍ " ສຽງດັງໆ ຈົນເຮັດໃຫ້ໃຈສົ້ນ.

" ຄືດວ່າແມ່ນນົກລຽງ ທີ່ແທ້ແມ່ນນົກປ່າອີຫຼີ ມັນມາຈາງໃດປ່າ" ພໍ່ຖາມປ້າເຈົ້າຂອງເຮືອນພາຍຫລັງທີ່ພໍ່ແອບກາຍະບໍລິຫານ ແລະກວາດເດີ່ນບ້ານແລ້ວ.

ວັນນັ້ນພໍ່ແມ່ໄປຫາລູກທີ່ໂຮງໝໍ ເຫັນອາການຂອງລູກຜິດ ປົກກະຕິຈັກໜ່ອຍ ມີຈຸດໃສ່ພອງທີ່ຕອມນ້ຳລາຍ ແລ້ວລູກຈົ່ມເຈັບຫູແຮງແຕ່ອາການຍັງບໍ່ຮ້າຍແຮງທີ່ໃດ ລູກກິນເຂົ້າໄດ້ ແລະຫຼິ້ນໄດ້ດ້ວຍອາລົມແຈ່ມໃສປົກກະຕິ.

ຄືນນັ້ນນົກເຈົ້າເວນໂຕນັ້ນ ຍັງມາຈັບຕົ້ນມ່ວງບ່ອນເດີມ ຮ້ອງໃສ່ຫູຂອງພໍ່ ເຮັດໃຫ້ໃຈສົ້ນ ແຕ່ພໍ່ກໍ່ປັດປ່າຍຄວາມສົງໄສນົມວາຍ

ທັງຫຼາຍໃຫ້ອອກໄປຈາກແນວຄິດຂອງພໍ່ ເພາະພໍ່ຢຶດໝັ້ນຢູ່ຢ່າງດຽວ ຄືລູກຕ້ອງຫາຍ. ຕື່ນເຊົ້າມາ ພໍ່ແມ່ກໍ່ມາຫາລູກ ພ້ອມດ້ວຍເຂົ້າຂອງ ສາລະພັດຕາມເຄີຍ ຄາວນີ້ເລືອດອອກມາທຫູເບື້ອງຂວາ ຂອງລູກ ພ້ອມທັ້ງອອກຕາມແຂ້ວແລະດັງ, ແພດຈຳຕ້ອງໃສ່ເລືອດ ແລະເກັດ ເລືອດ ພ້ອມກັນນັ້ນກໍເພີ່ມຢາຕ່າງໆຫຼາຍຢ່າງ ເຊິ່ງລ້ວນແຕ່ແມ່ນຊະນິດແພງໆ. ວັນນັ້ນພໍ່ເຂົ້າໄປຫາແພດເພື່ອຖາມເຖິງອາການແລະໂອກາດທີ້ຕ່ອງກັບປະເທດລາວ. ແພດຕອບວ່າ :

" ອາການໜັກເຂົ້າ ເລືອດຂາວບໍ່ຜະລິດ. ໄຂມັນ ກະດູກ " ພໍ່ " ຈະຕ້ອງຂໍໃຫ້ທ່ານຊ່ວຍຊື້ຢາຊະນິດທີ່ໂຮງໝໍພວກເຮົາບໍ່ສາມາດຣັບໄດ້ "

ພໍ່ຮູ້ສຶກກັງວົນໃຈແຮງ ຈົນກາຍເປັນກະວົນກະວາຍ ແຕ່ພໍ່ກໍຍັງເຫັນໃນແງ່ດີສະເໝີ " ອາການນີ້ຄົງຈະບໍ່ເຫຼືອວິໄສຂອງທ່ານ ໝໍຂັ້ນອາຈານ.

ຄືນນັ້ນນົກກາເວົາເຈົ້າທໍລະມານ ຍັງມາຮ້ອງໃນຕອນ ຂ້ອນແຈ້ງເໝືອນເດີມ ແລະປະກົດວ່າຮ້ອງແຮງຂື້ນກວ່າເກົ່າ.

ຕົກມື້ໃໝ່ມາພໍ່ແມ່ກໍໄປເຝົ້າລູກຕາມເຄີຍ. ລູກຮູ້ສຶກອ່ອນເພັຽເຂົ້າ ສຽງເວົ້າເຍອນໆແກມໄຫ້.

" ແພດມາດູດເອົາເລືອດແຂນເຮົາ ແທງໄປແທງມາ ຫຼາຍ

ເທື່ອ ແຂນເຮົາໃຄ່ຂ້ອນ ລູກເຈັບແຮງ "

ແຂນທ່ອນກົກຂອງລູກໃຄ່ພອງ ມີສີແດງຮືດຂຶ້ນ. ເມື່ອເຫັນດັ່ງ ນ້ຳມັນຂຽວໃສ່ຢາແຮງໆ ທັງທີ່ 2 ອາທິດຜ່ານມາບໍ່ໄດ້ໃສ່ເລືອດ. ເມື່ອເຫັນຢາຊະນິດດີແພງໆ ພໍ່ແມ່ກໍ່ຍິ່ງມີຄວາມອຸ່ນໃຈ ແລະເຊື່ອໝັ້ນນຳທ່ານໝໍ.

ຕົກມື້ໃໝ່ຕໍ່ມາ ເຊິ່ງກໍ່ຍັງມີນົກເຈົ້າຂອງສຽງສະໜອງຫົວໂຕນັ້ນ ມາຮ້ອງຢູ່ຫົວນອນຂອງພໍ່ຕອນຂ້ອນແຈ້ງຄືເກົ່າ, ພໍ່ແມ່ກໍ່ຮີບ ມາຫາລູກຕາມເຄີຍ ດ້ວຍຄວາມຫວັງວ່າອາການລູກຈະດີຂຶ້ນ.

" ແມ່ບານມາແທ້ " ລູກທັງເວົ້າທັງໄຫ້ຂຶ້ນທັງທີ່ແມ່ມາຮອດໂຮງໝໍຕາມເວລາເກົ່າ. ອາການແຂນອັກເສບໜັກເຂົ້າສີແດງໃນບ່ອນບວມກາຍເປັນສີຊ້ຳ ແລະພອງໃຫຍ່ ລູກນຸດເກືອບຕິງແຂນບໍ່ໄດ້.

" ລູກເຈັບຫູບ່ອງນອກ " ນຸດເອົາມືແຕະໃສ່ຫູບ່ອງ ຊ້າຍເຊິ່ງເຫັນພອງຂຶ້ນ ແລ້ວກໍ່ສົ່ງສຽງໄຫ້ອອກມາ. ແມ່ໄດ້ເວົ້າປອບໃຈລູກດ້ວຍຄວາມສັ່ນເຊັນ.

" ແມ່ຫຍັງເວົ້າຄ່ອຍແທ້ ເວົ້າແຮງແດ່ແມ່ ລູກບໍ່ໄດ້ຍິນ ! " ພໍລູກເວົ້າສຸດຄວາມ ແມ່ຍິ່ງກະວົນກະວາຍແລະແປກໃຈທີ່ຫູລູກໜວກ

" ຕັ້ງແຕ່ມື້ໄປ ຫູລູກບໍ່ໄດ້ຍິນແລ້ວໄດ້ແມ່ "

ອາການລູກໜັກເຂົ້າ ໜັກເຂົ້າອາການໄຂ້ສູງບໍ່ລົດຈົນພິກຄິງ

ເກືອບບໍ່ໄດ້, ຄວາມກັງວົນຂອງພໍ່ແລະແມ່ເພີ່ມທະວີຂຶ້ນ ເປັນຮ້ອຍເທົ່າພັນທີ.

- 30-1-90: ສົງສານລູກແດ່ ! ອົດທົນລູກໃຈຈະຂາດ... ເຮັດແນວໃດແດ່ຈຶ່ງຈະຫາຍ. ໝົດປັນຍາ ແນວໃດກໍ່ຕົກລົງໄປ ຫາຫຼວງພໍ່ທີ່ລບບູລີ ວັດເຂົາສົມໂພດ. ບາງທີຫວ່ານຢາຂອງເພິ່ນຈະສາມາດຊ່ວຍເອົາຊີວິດລູກໄວ້ໄດ້ບໍ່ຮູ້. ແລ້ວມື້ນີ້ພໍ່ໄດ້ໄປຫາໝໍຢາຈີນໝໍບອກວ່າ ນົບພະເຈົ້າເອົາ " ຕາມບຸນຕາມກຳເດີ " ພໍ່ອຸກໃຈຫຼາຍ

" ແມ່...ແມ່...ລູກຄິດຮອດແມ່ " ລູກບໍ່ຢາກໃຫ້ແມ່ໄປ, ລູກໄຫ້ຫົວຄືນ ລູກເອົາຮູບແມ່ມາເບິ່ງ ເຫັນຮູບແມ່ແລ້ວ ລູກແຮງ ຄິດຮອດ. ລູກຢາກກັບຄືນເມືອບ້ານເຮົາ ຢາກອອກໂຮງໝໍ ເພື່ອເມືອປົວຢາພື້ນເມືອາເອົາ. ລູກຢາກອອກໂຮງໝໍໄປຈັກສອງສາມມື້ແລ້ວຈຶ່ງກັບມາອີກ. ລູກຢາກເມືອຫາອ້າຍເອື້ອຍ " ໂອ້ສົງສານ. ສົງສານລູກແທ້ແດ່. ຢາກເວົ້າກັບລູກກໍ່ໄດ້ແຕ່ຂຽນໜັງສືໃຫ້.

" ແມ່...! ຮອດ ເຈັດ ໂມງ ແລ້ວແດ່ ແມ່ຫຍັງບໍ່ເມືອຈັກໜ່ອຍເພິ່ນຈົ່ວາໃຫ້ " ( ໂຮງໝໍໃຫ້ພໍ່ແມ່ຢູ່ເພື່ອນໄດ້ຮອດແຕ່ ຫົກໂມງແລງ )

" ແມ່-ເມືອ-ດີ-ເນີ " ລູກເວົ້າທັງກະຊຶກໄຫ້ນ້ຳຕາໄຫຼອອກມາພ້ອມທັງຍໍມືນົບແມ່.

31-1-90: ພໍ່ຕົ້ມຢາຈີນ " ຕາມບຸນຕາມກຳ " ໃຫ້ລູກກິນ ພໍ່ຕັດສິນໃຈຂຽນ ຈ.ໝ ຂໍການຊ່ວຍເຫຼືອຈາກອົງການ ອູນິແຊບ.. ເພື່ອຂໍໃຫ້ຊ່ວຍເອົາລູກໄປປົວທີ່ອື່ນ. ພໍ່ບໍ່ຢາກຈະເຫັນໜ້າລູກ ເລີຍ ເພາະນ້ຳຕາພໍ່ອອກ ເພາະສອງວັນຜ່ານມາ ນ້ຳຕາພໍ່ອອກບໍ່ເຊົາ ! ເຈັບໃຈໃນຊະຕາຂອງພໍ່ແມ່ເອງແລະຂອງລູກ.

1-2-90: ອາການຂອງລູກໜັກ ! ນົກເຈົ້າເວນໂຕນ້ອຍຍັງ ຮ້ອງ ພໍ່ເຮີຍ...ພໍ່ເຮີຍ...ຢູ່ເທິງຫົວບ່ອນຕອນເດິກຕາມເຄີຍ. ໝໍ ບອກໃຫ້ພໍ່ແມ່ຊື້ຢາ " ໂອໂຕ " ຫຼື " ວີໂນ " ອີກສອງກ້ອງ ລູກ ກິນເຂົ້າບໍ່ໄດ້ ມີອາການເຈັບຫູໜັກ ເຈັບຄໍໜັກ ເລືອດອອກແຂວຫູ ໜວກິວນວຽນ ຕົວຮ້ອນແຮງ. ໝໍສັ່ງຊື້ຢາອີກ 6 ຫຼອດ. ຊະຕາ ກຳຂອງລູກແລະພໍ່ແມ່ຈະເປັນຈັ່ງໃດເດ. ພໍ່ໄດ້ໄປຊື້ໝາກສົມມໍແຫ້ງ ພ້ອມທັງຮາກຢາອື່ນໆ ເພື່ອມາຕົ້ມໃຫ້ລູກກິນ.

ແລ້ງນກ່ອນຈະຈາກລູກກັບໄປບ່ອນພັກ ລູກເວົ້າວ່າ :

" ພໍ່ຈິໄປແລ້ວ. ລູກຄິດຮອດພໍ່ " ເວົ້າແລ້ວລູກຍື່ນມືມາໃຫ້ພໍ່ ກຳມາລູບໆຄຳໆ ແລະເອົາແປະໃສ່ແກ້ມ ແລ້ວພໍ່ກໍກັ້ນນ້ຳຕາ ແລະ ຄວາມສະອຶກສະອື້ນບໍ່ໄດ້.

ວັນຕໍ່ມາ ແມ່ຂອງລູກ ໄດ້ດວງຕົນໄປຫາຢາທານ ໄປບະພະ ໄປຂໍຢາດີໆມາໃຫ້ລູກ ຂໍມອບລູກໃຫ້ເປັນລູກພະ. ແມ່ນານ ມາຮອດ

ລູກເອີ້ນຫາແມ່. ພໍ່ລະດົມໃຈລູກ ອາການຂອງລູກໜັກເຂົ້າທຸກເມື່ອ

( ມາຮອດໜີ້ ພໍ່ຂຽນບອກລູກເຮີຍ ພໍ່ຕ້ອງປະໄປເປັນ 6 ເດືອນ ຈຶ່ງມາຂຽນລັດຕອນເອົາ ).

ແລງວັນທີ 6/2/90 ລູກຂໍຮ້ອງໃຫ້ພໍ່ ໄປຊື້ຂອງກິນ ມາກິນເຂົ້າຮ່ວມກັນໃຫ້ລູກເຫັນຈັກເທື່ອ ແຕ່ພໍ່ກໍ່ໄດ້ຝືນໃຈລູກ ເພາະ ລ່ວງເວລາອັນເປັນລະບຽບຂອງໂຮງໝໍ ເຊິ່ງເຮັດໃຫ້ພໍ່ກິນແໜງ ແຄງໃຈມາເທົ້າທຸກມື້. ຄືນນັ້ນເອງ ທ່ານໝໍໄດ້ອະນຸຍາດໃຫ້ແມ່ນອນດູ່ນຸດແຕ່ນຸດບໍ່ນອນເລີຍ ຂັດໃຫ້ແມ່ນອນຫຼັບສຳບາຍ ແລ້ວນຸດຈຶ່ງຈິນອນນຸດບອກວ່ານຸດອິຕົນແມ່ ເພາະແມ່ອິດເມື່ອຍຫຼາຍ. ຄືນນັ້ນເອງ ນົກເຈົ້າກຳໂຕນັ້ນກໍ່ຍັງຄົງມາຮ້ອງໄຫ້ ກະໂຕຫົວນອນພໍ່ເຊັ່ນເຄີຍ. ພໍ່ຮູ້ສຶກໃຈຂວ້າໃຈຫວາຍ ຕື່ນເຊົ້າມາພໍ່ຂຽວຕົ້ມຢາຈີນ ທີ່ພໍ່ຫາຊົມາໄວ້. ໄປຫາໃຜໆກໍ່ໃຫ້ກຳລັງໃຈພໍ່ໜ້ອຍທີ່ສຸດໃນຊະຕາກຳຂອງລູກ. ແລ້ວພໍ່ກໍຮີບມາຫາລູກ ເພື່ອປ່ຽນໃຫ້ແມ່ກັບເມືອພັກເນື້ອແຕ່ງຕົວ. ສຽງຫາຍໃຈຂອງລູກໄວຈົນເຂົ້າພ້ອມທັງສຽງຄາງແຮງອອກມາກ່ວາເກົ່າທ້ອງຂອງລູກເບັ່ງແລະຕາທັງສອງກ້ຳຂອງລູກເຫຼືອງຈົນພໍ່ບໍ່ຢາກເບິ່ງເລີຍແມ່ເມື່ອໄດ້ປະມານຊົ່ວໂມງໜຶ່ງ ລູກເລີຍຖາມຫາແມ່ ຮ້ອງຫາແມ່ ບອກໃຫ້ພໍ່ໄປເອີ້ນແມ່ມາໄວ. ພໍ່ຂຽນໜັງສືບອກລູກວ່າບຶດດຽວແມ່ຈະມາ. ພໍ່ລະດົມໃຈລູກ ພໍ່ຮູ້ໃນໃຈວ່າລູກຕ່າງຫຼາຍແລ້ວ ພໍ່ເຂົ້າ

ຫາໝໍ ແຕ່ໝໍກໍຍັງອຳຄວາມຈິງໄວ້ຄືເກົ່າ ພໍ່ເອົານ້ຳຢາໃຫ້ລູກ ກິນ ລູກດູດບໍ່ພໍ່ສອງກືນ ປະກົດວ່າໃຈຈະຂາດກ່ອນ. ພໍ່ຮ້ອງໃຫ້ແມ່ ມາ ດ້ວຍໃຈຈົດໃຈຈໍ່. ພໍ່ແນມໜ້າລູກ ເອົາໜ້າຟຸບໃສ່ຕັບເອິກລູກເອົາ ມືລູບໆຄາງໃບໜ້າຫົວຜົມແຂນຂາເລົາຄິງ ທີ່ພໍ່ຖະໜອມ ຫອມຮັກ ຂອງລູກ ນ້ຳຕາພໍ່ໄຫຼອອກມາ. ພໍ່ຫຼຽວໜ້າເບິ່ງປະຕູເລື້ອຍໆ ເພື່ອ ຈະເຫັນແມ່ຂອງນຸດມາຫານຸດໂດຍໄວ. ຄາວໜຶ່ງນຸດເອົາມື ຄວາ ເອົາແຄມຜ້າຫົ່ມມາໃສ່ສົບແລ້ວກັດ ເຮັດໃຫ້ພໍ່ແປກໃຈ.

" ພໍ່ ! ພໍ່ ! ລູກກິນບໍ່ໄດ້ ມັນແຂງ "

ແລ້ວລູກເລີຍເດີນມາຈັບມືພໍ່ແລ້ວດຶງໄປຫາສົບລູກ ເພື່ອຈະກັດກິນ.

" ມາພໍ່ ! ລູກຈິກິນອັນອ່ອນນີ້ "

ພໍ່ເຂົ້າໃຈທັນທີວ່າລູກຈິກິນເນື້ອອ່ອນຂອງເຂົ້າຈີ່ ທີ່ພໍ່ເຄີຍບອກລູກກິນ ແຕ່ລະເທື່ອ " ລູກເຮີຍ ! ເອົາ ! ກິນບ່ອນອ່ອນນີ້ "

ພໍ່ຮີບໄປເອົາເຂົ້າເນື້ອອ່ອນໆຂອງເຂົ້າຈີ່ມາໃຫ້ລູກ ລູກກໍກິນ ຢ່າງ ແຊບຊ້ອຍໝົດສອງປ່ຽງ ແລ້ວກໍດູດກິນນ້ຳແບບປົກກະຕິ. ພໍ່ເຂົ້າໃຈ ແລ້ວວ່າສະຕິຂອງລູກເສັຽແລ້ວ. ພໍດີເວລານັ້ນແມ່ມາຮອດພໍ່ທັງດີໃຈ ເພາະແມ່ມາທັນເວລາທີ່ລູກຍັງພໍມີສະຕິ. ເມື່ອແມ່ຮູ້ຂ່າວທີ່ພໍ່ບອກໃຫ້ ແມ່ກໍສັ່ນເຊັນຂຶ້ນ ພ້ອມທັງຮ້ອງຫາລູກກອດລູກຈູບລູກນົບໄຫວ້ ຫາຄຸນ ພະສີລັດຕະນະໄຕ ໃຫ້ມາຊ່ອຍຊີວິດລູກ, ແຕ່ອາການຂອງລູກເລີ່ງ

ລ່າງໄປແລ້ວ. ລູກແນມງວາກເບິ່ງແສງສະຫວ່າງເທິງຢ່າງບໍ່ພົບຕາ ເໝືອນດັ່ງວ່າລູກຈະເບິ່ງໃຫ້ມັນສົມໃຈໃນຄັ້ງສຸດທ້າຍ ລູກຖ່າຍກັບທີ ລູກພະຍາຍາມລຸກຂຶ້ນສຸດກຳລັງ ພໍ່ແມ່ໂຊມລູກລຸກແລ້ວນອນລົງຄາວເທິງໜຶ່ງກໍ່ລຸກຂຶ້ນອີກ ລູກເວົ້າຄວາມໃດຄວາມໜຶ່ງອອກມາກະຕຸກກະຕັກຢ່າງຟັງບໍ່ໄດ້ຂໍ້ຄວາມຄົງຈະເປັນ :

" ລູກບໍ່ຢາກຕາຍ .... "

ແຕ່ສຽງບໍ່ອອກ ລູກຈຶ່ງເຫຼືອໃຈໄຫ້ສະອຶກສະອື້ນຂຶ້ນແທນ. ທັນໃດນັ້ນລູກຮີບໂຮມກຳລັງສຸດທ້າຍຂອງລູກ ພິກຕົວເອົາມືກອດຄໍແມ່ແໜ້ນ..

ຄ່ຳວັນນັ້ນ ວັນທີ 7/2 ວັນທີ່ລູກສິ້ນລົມຫາຍໃຈໄປຢ່າງບໍ່ພົບຕາ ສຽງຮ້ອງ " ພໍ່ເອີຍ " ຂອງນົກກາເວົ້າກ່ຽວບເຊັ່ນກັນ....ພໍ່ຮູ້ແລ້ວວ່າຂວັນຂອງລູກໄດ້ມາສະແດງຄວາມອາໄລອາວອນ ບອກລາງໃຫ້ແກ່ພໍ່ແມ່ຮູ້ມາຕັ້ງແຕ່ດົນ.

ບຸດເອີຍ ລູກຮັກຂອງພໍ່ ! ລູກຈາກພໍ່ແມ່ໄປແລ້ວ ປະໄວ້ ແຕ່ອະນຸສອນແຫ່ງຄວາມຮັກ ຄວາມຊື່ນໃຈກັບລູກໃນເມື່ອກ່ອນ ແລະຄວາມເຈັບປວດລວດລ້າວຫົວໃຈໃນປັດຈຸບັນຢ່າງບໍ່ມີຍາມຫາຍ. ພໍ່

ແລະແມ່ບໍ່ມີບຸດລູກຮັກອີກແລ້ວ. ສົບຂອງລູກພໍ່ແມ່ໄດ້ເອົາ ກັບມາເມືອງລາວເຮົາ ແລະໄດ້ມາມ້ຽນຄາບອາບຝຸ່ນທີ່ເມືອງເຮົາ. ພໍ່ແມ່ໄດ້ກິນທານຫາລູກລຸງຊຽງ ພຸມມາ ຂອງລູກ ເນື່ອງຈາກທຸກໃຈ ນຳລູກຫຼາຍເພິ່ນເລີຍສະຫຼະຄວາມເປັນຄະລືຫັດອອກບວດ ອຸດທິດ ແດ່ສ່ວນບຸນທັງປວງຫາລູກຕະຫຼອດຊົ່ວຊີວິດເລີຍ ໃນພິທີຊາປະນະກິດ ສົບຂອງລູກກໍ່ຄືງານກອງບຸນກອງບວດຫາລູກນັ້ນ ຍາດຕິວົງວານ ພີ່ນ້ອງໝູ່ຄູ່ໄດ້ພາກັນມາອະນຸໂມທະນາທານນຳລູກຢ່າງໜາແໜ້ນ.

ລູກຈາກພໍ່ໄປແລ້ວ ພໍ່ເສັຽໃຈທີ່ບໍ່ທັນໄດ້ໃຊ້ໜີ້ລູກໝົດພໍ່ຍັງຕິດລູກຢູ່ 400 ກີບ ຈາກຜົນງານການຈັດພິມທານຍີ່ປຸ່ນຂອງລູກ. ບໍ່ເປັນຫຍັງລູກເຮີຍພໍ່ຈະທານຫາລູກຜົນງານ ແລະລາຍມືຂອງລູກ ພໍ່ໄດ້ພິມໄວ້ໃນປຶ້ມຫົວນີ້. ເຄື່ອງຂອງ ຂອງລູກຕະຫຼອດເຄື່ອງຫຼິ້ນເຄື່ອງຮຽນພໍ່ຮັກສາໄວ້ໃຫ້ລູກເໝືອນເດີມ.

ລູກຈາກພໍ່ໄປແລ້ວ ພໍ່ບໍ່ມີຜູ້ຊວນພໍ່ໄປທ່ຽວເບິ່ງທາດຫຼວງ ເບິ່ງຮູບນາກກຽວຄຸດທີ່ວັດສີເມືອງ ເບິ່ງແຄມຂອງແລະຫຼິ້ນຫາດຊາຍດອນຈັນອີກເລີຍ ແລະກໍ່ບໍ່ມີໃຜຈະຊວນພໍ່ໄປອາບນ້ຳທ່າໃສ່ນ້ອງ ເພື່ອຈະໄດ້ປາມາປີ້ງກິນຍາມເຊົ້າ ກ່ອນລູກຈະໄປໂຮງຮຽນ ພໍ່ບໍ່ມີລູກທີ່ຂົມຂີຫຼັງພໍ່ອີກ ບໍ່ມີຜູ້ເອົາມືນ້ອຍໆເກົາຫຼັງໃຫ້ພໍ່ອີກ ແລະກໍບໍ່ມີຜູ້ມາຫຼົກວອກໃຫ້ພໍ່ອີກແລ້ວ. ລູກເວົ້າວ່າ : " ບໍ່ຢາກໃຫ້ພໍ່ເຖົ້າໄວ ຢາກໃຫ້ພໍ່ມີ

ຊີວິດຢູ່ກັບລູກເທິງໆ". ພໍ່ບໍ່ມີມູດແລ່ນຫັດກາຍຍາມເຊົ້ານຳພໍ່ ບໍ່ມີມູດຊວນຕີປີກໄກ່ແລະຕະບານອີກເລີຍ. ພໍ່ບໍ່ໄດ້ເຫັນມູດຊູກລີ້ ເອົາຟືນແລະເອົາຂີ້ເລື່ອຍມາໃຫ້ອ້າຍເອື້ອຍດັງໄຟ, ແລະກໍ່ບໍ່ເຫັນມູດ ມາຂໍເຫຼັກເສດນຳພໍ່ເພື່ອຂາຍເອົາເງິນທ້ອນໄວ້ກະເປົ໋ານ້ອຍຂອງລູກ ອີກເລີຍ. ໝາກໄມ້ໃນສວນບ້ານເຮົາສຸກທຸກລະດູແລ້ວ ບໍ່ມີມູດລູກພໍ່ມາຈ້ຳໝາຍໄວ້ອີກແລ້ວ ແລະພໍ່ກໍບໍ່ຢາກຈະໄປປິດມັນ ເພາະແຕ່ກ່ອນທຸກເທື່ອທີ່ພໍ່ປິດມັນມາ ພໍ່ກໍມີລູກເປັນຜູ້ຮັບເອົາໄປສະເໝີ ແຕ່ບັດນີ້.

......

ລູກເອີຍ ! ເນື່ອງຈາກລູກໄດ້ມີຜົນງານເຍື່ອງໜຶ່ງ ເຍື່ອງດຽວນ້ອຍໆໃນຊີວິດອັນແສນຈະສັ້ນຂອງລູກ ດັ່ງນັ້ນໃນປຶ້ມຫົວນີ້ ພໍ່ຈຶ່ງໄດ້ເອົາເລື່ອງລາວໃນວາລະສຸດທ້າຍ ແຫ່ງຊີວິດຂອງລູກ ພ້ອມທັງລາຍມືຈົດໝາຍຂອງລູກ ລົງພິມແທນຄຳປາລົບໃດ ໆ ທັງໝົດ ເພື່ອອຸທິດໃຫ້ເພື່ອນ ໆ ຂອງລູກ ໃຫ້ເດັກນ້ອຍລາວແລະເດັກນ້ອຍໃນທົ່ວໂລກ, ມິດຕະພາບລະຫວ່າງເດັກນ້ອຍລາວແລະເດັກນ້ອຍຍີ່ປຸ່ນ ຜູ້ເຊິ່ງມີຊີວິດຢູ່ ແລະຈະຍັງມີຊີວິດຢູ່ຢ່າງມີຄວາມສຸກ ໃນໂລກນີ້ ສືບຕໍ່ໄປຕະຫລອດການ.

ຂໍໃຫ້ເດັກນ້ອຍທຸກຄົນໃນໂລກ ຈົ່ງຢ່າປະສົບເຄາະກຳເໝືອນມູດເລີຍ.

ຈາກພໍ່ຂອງລູກ



ລູກາ ມຸດ (ຫຸນ ມ້ຽງ) ແຕ້ມໄດ້ກ່ວນປ່ອຍ

# ຜີຍັກທີ່ພູກີໄຢຊາ

1

ຜີຍັກທີ່ພູກີໄຢຊາ.

ຜູ້ເຖົ້າຜູ້ແກ່ເລົ່າເວົ້າສືບຫາລຸ້ນພວກເຮົາຟັງວ່າ
ບູເຕົ່າກີ ແຕ່ກ່ອນທີ່ພູເຂົາກີໄຢຊາເປັນທີ່ຜີຍັກ
ຮ້າຍໂຕໜຶ່ງເປັນເຈົ້າຢູ່ພູແຫ່ງນັ້ນ.
ທຸກໆປີເມື່ອຮອດລະດູບໍ່ໃນເຮືອງຍາມ ຜີ
ຍັກກໍລົງຈາກພູຂອງມັນໄປທີ່ບ້ານຄົນທີ່
ຢູ່ຕີນພູກໍ່ຈ່າວ ເພື່ອຂໍເອົາປາ ໝາກ
ເຜັດ ໝາກເຂືອ ແລະ ເດັກນ້ອຍ. ປະຊາຊົນບ້ານ
ດັ່ງກ່າວເປັນຄົນທຸກຈົນຫລາຍ ເຈົ້າເຮັດໃຫ້
ເຂົາເຈົ້າບໍ່ພໍໃຈຕໍ່ຜີຍັກເປັນທີ່ສຸດ ຈຶ່ງຄິດ

ຫາວິທີຂ້າພະຍັກນັ້ນເສຍ. ເຂົາເຈົ້າໄດ້ປຶກສາ
ກັນວ່າ ລະຕອງເກືອເຫົ້າພະຍັກຫຼາຍໆ / ຈົນໃຫ້
ມັນເມົາແລ້ວກໍ່ຂ້າມັນເສັຍ.

ແຕ່ວ່າແມ່ນໃຜຈະເປັນຜູ້ອາສາໄປຂ້າມັນ.
ປະຊາຊົນຜູ້ໃດກໍ່ມີຄວາມຢ້ານ / ລຽງເບິ່ງໜ້າກັນ
ບໍ່ກ້າລະໄປຂ້າມັນ / ເພາະວ່າຕາມເສັ້ນທາງ
ໄປສູ່ພູກີເຍີຊານັ້ນ ມີຄວາມທຸລະກັນດານ
ແລະອັນຕະລາຍຫຼາຍ / ລະຕອງ / ພ່າຍ

ນັ້ນ ຕອນນັ້ນ ແມ່ຫ້າງ ຄວາມຈື່ນຊວນແລະ
ໜ້າຜາກເຫງື່ອຊຸ່ມ ທາສັກເອົາວື ອີດດີນ /
ຊະນະນັ້ນຍັງມີສອງອ້າຍນ້ອງ / ສູ ສາ ຮະ ເມັດ
ເຜົ່າປະຕິບັດພາລະກໍາອັນສໍາຄັນນີ້ (ໄດ້)
ທັງສອງພາກັນເປົ້າເອົາເຫົ້າແລ້ວກໍ່ມຸ່ງໜ້າ
ໄປຍັງພູພະຍັກຕໍ່ໄປ. ຕາມເສັ້ນທາງເດີນ
ໃຫ້ທັງສອງອ້າຍນ້ອງຮູ້ສຶກອິດເມື່ອຍທີ່ສຸດ ຈົນ
ຢາກໄປເກືອບບໍ່ໄດ້ / ແຕ່ພວກເຂົາກໍ່ຕັ້ງ

ໃຈອົດທົນ ບໍ່ໃຈ ຈົບພົ້ນ ແຫ່ງ ຄັ້ງສາວ / ເລີກ
ໜ່ອຍ ເຂົາກໍ່ [illegible] ໄປເຖິງ ໜາມ ຜ້າຮູ້ມ /
ພວກເຂົາເຫັນ ຮຸ້ງ ອີກທິດ ຂຸດໃຕ້ ເກືອບຈະຕາຍ
ແຕ່ພວກເຂົາ ກໍ່ອົດທົນ ຈົນໄປເຖິງປາກ
ຖ້ຳ ພ່ອນທີ່ ຜີ ຍັກໃຫຍ່ ໂຕນັ້ນຢູ່. ສອງອ້າຍ
ນ້ອງ ເອີ້ນໃສ່ຍັກວ່າ: ແມ່ ຜີຍັກເຮີຍ ເຊີນອອກ
ມາ ກິນເຫຼົ້າ ນຳກັນແດ່. ຄອຍບໍ່ແລ້ວ

ຜີຍັກກໍ່ອອກມາຫາກິນທີ່ໂຄດ ແລ້ວກໍ່ ຫຼຸບ
ໂຖ ໃຫ້ເຂົ້າໃຫ້ (ພ້ອມກັບ) ນຸກິນ / ຫຼຸບກິນຈົນໝົດ -/

ຈັກໜ່ອຍ ຜີຍັກກໍ່ເລີຍເມົາສີ້ນໜ້າ

ເສດ ເມົາເຫຼົ້າ ທັນທີ ໂລດ. ແມ່ນແລ້ວ ນອນ

ລົງ ກິນ ກັກໃຫ້ ທັນທີ. ເວລານັ້ນ ສອງອ້າຍ

ພ້ອງພາກັນ (ອີ) ຄານຫາ ຕົກ ຄ ພິຍັດ
ຕາຍກາບຂ່ອນ

ມຸດ (ຫນຸ່ມນ້ອງ) 7 ປີ ຈັດ
ປີ 1981





14/11/89

Nuth



ທຸມບືວຽງ (ບຸດ) ແຕ້ມກ່ອນປ່ວຍ

# ໄດ່ເຂົ້າບິນ

ແຕ່ກີ້ແຕ່ກ່ອນ ຍັງມີເສດຖີຜູ້ໜຶ່ງທີ່ແຂວງເຊັດສູ ມີເຂົ້າ ຈຳນວນນັບບໍ່ຖ້ວນໄຖ່. ມື້ໜຶ່ງຂະນະທີ່ເຂົ້າກຳລັງປີ້ນແຍງ ກອງເຂົ້າຂອງເຂົ້າຢູ່ ເລີຍມີຖ້ວຍໃບໜຶ່ງບິນມາ ແລ້ວກໍ່ລົງຈອດຢູ່ຕໍ່ໜ້າເສດຖີຄົນນັ້ນ. ເມື່ອເຫັນດັ່ງນັ້ນເສດຖີຄົນນັ້ນເລີຍເວົ້າໃສ່ຖ້ວຍວ່າ :

" ກູຮູ້ມຶງແລ້ວ ຢ່າມາຂໍທານນຳກູ ກູບໍ່ເອົາໜ້ຽງໃຫ້ ມຶງດອກ ກັບໄປ່ສາ ! "

ຄັນເວົ້າຄວາມນັ້ນ ສຽງຟ້າກໍ່ຮ້ອງດັ່ງຂຶ້ນ ແຜ່ນດິນໄຫວ ໄປມາກອງໄຖ່ເຂົ້າຂອງເສດຖີເລີຍຂະໂຍງຂຶ້ນ ແລ້ວຖ້ວຍໃບນັ້ນ ເລີຍສະລຸບເຂົ້າກອງກອງເຂົ້າກອງນັ້ນ. ບໍ່ພໍ່ບຶດ ຖ້ວຍເລີຍພາເຂົ້າ ທັງໝົດບິນຂຶ້ນເວຫາໄປວ່ອງໆ. ຖ້າເສດຖີເຫັນດັ່ງນັ້ນ ຈຶ່ງຮ້ອງອື່ເລີ

ເປີເສີ ແລະໄລ່ຕາມ. ຖ້ອຍໄດ້ພາເຂົ້າບິນໄປຮອດວັດຫຼັງໜຶ່ງ ທີ່ຈອມພູຊິດ. ນະທີ່ນັ້ນຍາຄູເຈົ້າທຳມາດ ກຳລັງຢືນຍິ້ມສະງ່າ ແນມເບິ່ງກອງເຂົ້າດັ່ງກ່າວ. ພໍດີເວລານັ້ນເສດຖີກໍແລ່ນສີ່ປູ່ສີ່ຍ່າ ເມືອຮອດ.

" ສາທຸ ! ເຮັດແນວນີ້ຮ້າຍກາດຫຼາຍ ! ບໍ່ຄວນປະພຶດແບບນີ້ ຈົ່ງສົ່ງເຂົ້າໃຫ້ຂະນ້ອຍຄືນ "

ສາທຸວັດຕອບວ່າ :

" ເອີ ! ອັດຕະມາເກີນວ່ານ້ອຍໃຈທີ່ບໍ່ມີກອງເຂົ້າກອງໜຶ່ງກອງໃດ. ບັດນີ້ຟ້າແຖນໄດ້ນິມິດມາໃຫ້ແລ້ວ. ຈະເອົາທານ ໃຫ້ພໍອອກກໍໄດ້ "

ເຖົ້າເສດຖີຕົກສະເງີ້ :

" ສາທຸ ! ເຮັດແນວໃດ ຂະນ້ອຍຈຶ່ງຈະຂົນເອົາເຂົ້າ ຈຳນວນນີ້ໄປໄດ້ໝົດ ເພາະມັນກອງເປັນພູ ? " ສາທຸວັດຮຽກ ເອົາຖ້ອຍມາ ແລ້ວກໍບອກໃຫ້ຖ້ອຍໄປສົ່ງ. ຖ້ອຍບິນໄປ ແລ້ວໄຖ່ເຂົ້າທັງຫຼາຍກໍພາກັນບິນເປັນສາຍກັນໄປ ເໝືອນດັ່ງໝູ່ນົກໝູ່ກາ ປານນັ້ນ ເສດຖີຄົນນັ້ນ ຍັງບໍ່ຍອມປະກອບສ່ວນສ້າງກຸສົນຕໍ່ວັດຊິດ ຂອງສາທຸດັ່ງກ່າວນັ້ນເລີຍ.

# ພະຍາຂວານຟ້າ ລູກເຂີຍຄົນຂາຍເຂົ້າປຸ້ນ

ແຕ່ປາງກ່ອນຢູ່ທີ່ກິ່ວພູແຫ່ງໜຶ່ງ ຍັງມີຄົນຂາຍເຂົ້າປຸ້ນຜູ້ໜຶ່ງມີລູກສາວງາມ. ມື້ໜຶ່ງຟ້າເລີຍແຜດຮ້ອງ ຝົນຕົກ ຟ້າຜ່າ ເປັນແສງເຫຼືອມມາບມີບແລະສຽງຄະລຶງຄວນຄາງແບບກ້ອງຟ້າສະເທືອນດິນ. ເຫດການດັ່ງກ່າວເຮັດໃຫ້ລູກສາວຄົນງາມຂອງຄົນຂາຍເຂົ້າປຸ້ນຢ້ານສິ້ນສາຍ ນາງຮີບເຂົ້າໄປລີ້ຢູ່ໃນເຮືອນຂອງນາງປະແຕ່ ກະຕ່າເຂົ້າປຸ້ນໄວ້ໜ້າເຮືອນ. ເວລານັ້ນຟ້າເລີຍຜ່າລົງດິນຕໍ່ໜ້າຕູບຂອງນາງຢ່າງແຮງ ເຮັດໃຫ້ມີເຝືອອາຍກົ້ວໄປທົ່ວບໍລິເວນ. ເມື່ອເຝືອອາຍເຫີຍຫາຍໄປແລ້ວ ພະຍາຂວານຟ້າເລີຍເຫັນກະຕ່າເຂົ້າປຸ້ນອັນໜ້າແຊບຊ້ອຍລຽນລາຍກັນຢູ່. ພະຍາຈຶ່ງຄິດວ່າ "ກ່ອນຈະຂຶ້ນເມືອສະຫວັນ ກໍ່ຕ້ອງກິນເຂົ້າປຸ້ນໃຫ້ອີ່ມທ້ອງສາກ່ອນ" ແລ້ວພະຍາເລີຍ

ເຂົ້າໄປເຄະປະຕູ :

" ເຣີຍ ! ອອກມາເຣັດເຂົ້າປຸ້ນໃຫ້ກິນຈັກຖ້ວຍແດ່ " ນາງລູກສາວຜູ້ຂາຍເຂົ້າປຸ້ນຢ້ານກົວ ເລີຍຣີບອອກມາເຣັດເຂົ້າປຸ້ນໃຫ້ກິນ ພະຍາຂວານຟ້າເຫັນນາງເປັນຄົນງາມຫຼາຍ ຈຶ່ງຂໍເອົາເປັນ ເມັຽ.

ນາງສາວຂືນບໍ່ໄດ້ ເພາະມີຄວາມຢ້ານກົວຈຶ່ງຕອບຣັບທັນທີ. ເມື່ອພະຍາຂວານຟ້າໄດ້ມາເປັນເຂີຍຢູ່ແຫ່ງນັ້ນແລ້ວ ຊື່ສຽງ ຂອງຣ້ານເຂົ້າປຸ້ນ ເລີຍດົງດັງຂຶ້ນທັນທີ ໃຜໆກໍຢາກມາເບິ່ງມາເຫັນ ພະຍາຂວານຟ້າລູກເຂີຍຂອງເຈົ້າຂອງຣ້ານ ພ້ອມກັນນັ້ນກໍທັງຢາກຊີມ ລົດຊາດອັນແຊບຊ້ອຍຂອງເຂົ້າປຸ້ນຊ່າງໃໝ່ດ້ວຍ. ຊື່ສຽງຂອງ ຣ້ານເຂົ້າປຸ້ນນີ້ ໄດ້ກະຈາຍໄປທົ່ວສາລະທິດ ດັງຂຶ້ນເມືອຣອດຫູຂອງນາງເທພະຈັນ. ເມື່ອຣູ້ຂ່າວນີ້ແລ້ວ ນາງເລີຍລົງມາ :

" ເອ ! ພະຍາຂວານຟ້າເຣີຍ ! ເຣັດໃຫ້ກິນຈັກ 3 ຖ້ວຍໜຶ່ງດູ " ພະຍາຂວານຟ້າຈັດແຈງເຣັດໃຫ້ນາງກິນ, ເມື່ອກິນ ອິ່ມແລ້ວນາງເລີຍຈ່າຍເງິນມາໃຫ້ 30 ອັດ ແລ້ວກໍທະຍານກັບຂຶ້ນເມືອສູ່ຫ້ອງຟ້າ. ສຽງຊ່າລືໄປຣອດນາງເທພາທິດ ເຣັດໃຫ້ນາງອົດບໍ່ໄດ້ຈຶ່ງລົງມາຊີມ.

" ເຣີ ! ຂວານຟ້າ ! ເຣັດໃຫ້ຊີມຖ້ວຍໜຶ່ງແດ່ " ພະຍາຂວານຟ້າເຣັດໃຫ້ຊີມໄປ ແຕ່ນາງເທພາທິດເຫັນວ່າແຊບຫຼາຍ ເລີຍ

ສົ່ງມາສົ່ງມາຈົນຮອດ 30 ຖ້ວຍ.

" ອີ່ມຫຼາຍແລ້ວ ! ເຮົາເມືອກ່ອນເນີ " ເວົ້າແລ້ວ ນາງເທພາທິດເລີຍວາງເງິນໃຫ້ອັດດຽວ. ພະຍາຂວານຟ້າບໍ່ຢາກ ຫ້ວງເພາະໃຫ້ຫນ້ອຍໂພດ ບໍ່ມີຄວາມເປັນທຳ ແຕ່ສັນຊາດຍານຂອງພໍ່ຄ້າເລີຍບັນຊາໃຫ້ເວົ້າອອກໄປວ່າ :

" ອ໊າວ ! ເທພາທິດເຮີຍ ! ເງິນຫນ້ອຍໂພດບໍ່ເປັນ ທຳເລີຍ ນາງເທພະຈັນກິນສາມຖ້ວຍຍັງໃຫ້ຕັ້ງ 30 ອັດ "

" ເອີ ! ແມ່ນແລ້ວ ກໍເປັນທຳມະດາລະບໍ ເພາະ ເດືອນຫມາຍເຖິງ 30 (ມື້). ສ່ວນຂ້ອຍເອງແມ່ນຕາເວັນ (ເວັນດຽວ) ໃຫ້ອັດຫນຶ່ງກໍພໍ. ນາງຫົວຂັນ ຮາ-ຮາ- ແລ້ວກໍທະຍານຂຶ້ນໄປ.



# ພະພຸດທະຮູບອິມະນີຍະ

ແຕ່ກ໋ແຕ່ກ່ອນ ປະຊາຊົນຊາວນາແຄມທະເລທີ່ໝູ່ບ້ານ ອິມະນິຍະ ເຂດໂອສະກະ ຂະນະທີ່ຂຸ້ນຂ້ຽວເຮັດວຽກໄຮ່ການນາຢູ່ ເລີຍພົບເຫັນພະພຸດທະຮູບອົງໜຶ່ງໃຫຍ່ມາ ອັນນຳເອົາຄວາມຕື່ນຕາຕື່ນໃຈມາສູ່ເຂົາເຈົ້າເຫຼືອທີ່ສຸດ. ທຸກຄົນພາກັນເຊົາວຽກຊົ່ວຄາວ ເພື່ອມາພິຈາລະນາເບິ່ງສິ່ງປະຫຼາດດັ່ງກ່າວ. ໃນເບື້ອງຕົ້ນ ເຂົາເຈົ້າປຶກສາກັນວ່າຈະເອົາໄປບັນຈຸໄວ້ທີ່ວັດ ອອບິສຸ ແຕ່ເມື່ອຄິດໄປ ຄິດມາແລ້ວເລີຍສົງໃສ່ວ່າແມ່ນພະພຸດທະຮູບຂອງວັດ ປີເຣົງ ແຫ່ງ ນະຄອນກຽວໂຕ ຈຶ່ງໄດ້ສົ່ງຄົນໄປຖາມລາຍລະອຽດທີ່ວັດປີເຣົງ ແຫ່ງນະຄອນກຽວໂຕ. ທາງອະທິການວັດດັ່ງກ່າວຕອບວ່າ ພະທີ່ວັດດັ່ງກ່າວຫາຍໄປອົງໜຶ່ງ ໃນເວລາເອົາໄປຫົດສົງອາບຊ່ວຍທີ່ແມ່ນ້ຳກາໂມະ ຂະ

ນະທີລາວຊ່ວຍຢູ່ນັ້ນ ນ້ຳເລີຍນອງມາກະທັນຫັນ ຈຶ່ງເຮັດໃຫ້ ພະພຸດທະຣູບອົງນັ້ນຖືກນ້ຳພັດເສັຽໄປ.

ຈາກນັ້ນ ຊາວບ້ານອິມະມິຢະ ພ້ອມດ້ວຍຊາວເມືອງໂອສະກາ ຈຶ່ງພາກັນທຳພິທີແຫນແຫ່ເອົາພະພຸດທະຣູບອົງນັ້ນ ກັບຄືນ ໄປສະຖິດໄວ້ທີ່ວັດຢີຣົງ ແຫ່ງນະຄອນກຽວໂຕ.

ທຸກໆປີເມື່ອຮອດເດືອນ ມິຖຸນາ ຄືໃນວັນທີ່ 14 ເຖິງ 16 - ຊາວເມືອງໂອສະກະ ຈຶ່ງພາກັນເຮັດພິທີແຫ່ພະແຕ່ ໂອສະກະ ໄປສູ່ນະຄອນກຽວໂຕ.



# ນັກຊອດນ້ຳ

ແຕ່ກ່ອນຢູ່ເຂດໂຊມະ ມີຊາຍຜູ້ໜຶ່ງຊື່ວ່າ ການາຊາວະ ກັບຕະໂຣ ນັກດຳນ້ຳຜູ້ລືຊື່.

ຄັ້ງໜຶ່ງຢູ່ໃຕ້ບ້ານໂຊມະ ມະການູລະລົງໄປ ຝູງປາພາກັນມາອື່ງອໍ່ຢູ່ຈຳນວນຫຼວງຫຼາຍ. ແຕ່ມື້ນ ເປີ ! ບໍ່ເຫັນປາຈັກໂຕມາຖືກໂຕ່ງຖືກມອງ. ມີຫຍັງມາກີດກັນຢູ່ຫັ້ນບໍ່ຮູ້ ? ແນວໃດກໍ່ດີຊາວບ້ານກໍ່ພາກັນເຊີນເອົາກະນະຊະວະມາມຸດເບິ່ງ. ປະຕິໂຫປະຕິຫາຍ ມີຫອຍໂຕມະຫຶມາ ມາຕັ້ນບ່ອນທ່ອງທ່ຽວຂອງປາຢູ່. ການາຊາວະໄດ້ດຳລົງຫຼາຍເທື່ອເພື່ອກົ້ງມັນອອກໄປ ໃນທີ່ສຸດກໍ່ເລີຍສຳເລັດ.

ຕໍ່ຈາກນັ້ນມາບໍ່ພໍ່ທໍໃດ ກໍ່ມີເຫັດການໃໝ່ເກີດຂຶ້ນນົມດີສະພາບດິນຟ້າອາກາດແຫ້ງແລ້ງ. ເຂົ້າໃນນາຕາຍດັບ. ອາໄສນ້ຳຫ້ວຍ ກໍ່

ຂາດວັງ. ຕາດນ້ຳຕົກກໍ່ຖືກອັດ ນ້ຳບໍ່ສາມາດຈະໄຫຼໄດ້. ຜູ້ຄົນພາກັນ
ດຳລົງໄປເບິ່ງ ແຕ່ແລ້ວກໍ່ຫາຍຈ້ອຍ ບໍ່ເຫັນກັບຄືນ. ອີກເທື່ອໜຶ່ງ ຜູ້
ຄົນໄດ້ໄປເຊີນເອົາ ການາຊາວະ ມາດຳ. ເຂົາເອົາດາບນ້ອຍດວງ
ຊື່ວ່າ : "ພູເຂົາໃຕ້ພະຈັນ" ຂອງເຂົາໄປນຳ. ພໍດຳລົງໄປເຂົາ ກໍ່
ພົບສິ່ງປະຫຼາດ ມີສິ່ງເປັນຄືຂອນໄມ້ນຂວາງກັ້ນອັດຮູນ້ຳຢູ່. ການາຊາ
ວະ ຮູ້ວ່າແມ່ນເງືອກໂຕສາມານ ຈຶ່ງສະແດງຄວາມຄຽດແຄ້ນຫມື່ນກິນ
ຜູ້ຄົນບໍ່ຈັກວ່າທີ່ໃດແລ້ວນັ້ນ ອອກມາ. ເຂົາຖອດດາບຟັນ ເລວກັນກັບ
ເງືອກ ໃນທີ່ສຸດເຂົາກໍ່ແພ້ ນ້ຳກໍໄຫຼ ຊາວບ້ານ ຊາວເມືອງກໍ່ຊົມເຊີຍ
ງູດັ່ງກ່າວນັ້ນ ນຳເອົາໄປຝັງທີ່ເປັນພູ. ຕັ້ງແຕ່ນັ້ນມາແຫ່ງ ດັ່ງກ່າວ
ໝາກເຊີຣີ ແຖບນັ້ນກໍ່ຈາກສີຊົມພູຈືດໆມາເປັນສີແດງເຂັ້ມ ເຊິ່ງຜູ້ຄົນ
ໃຊ້ຊື່ວ່າ "ເຊີຣີເລືອດ" ມັນເປັນດອກປີລະສາມເທື່ອ ແລະເມື່ອຄົນຕັດ
ກິ່ງວ່າມັນກໍ່ຈະເຫັນຢາງແດງໆຄືເລືອດນ້ອອກມາ.



# ບຳເນັດຄາກາສິງ

ມື້ຫນຶ່ງໃນລະດູບານໃຫມ່ທີ່ໃສແຈ້ງ ຢູ່ຕາມນ້ຳແມ່ ຈິກຸໂກະ ມີຊາວຫາປາທີ່ມີໃຈບຸນຜູ້ຫນຶ່ງແລະຄົນຂ້າມເຮືອຄົນຫນຶ່ງທີ່ຄອງ ຖ້າລູກຄ້າຢູ່. ເມື່ອສົງອົງນັ້ນມາຮອດແຄມນ້ຳແລ້ວຄົນຂ້າມເຮືອເລີຍ ເວົ້າໃສ່ວ່າ :

" ອາວ ! ເຂົ້າມາແມ່. ຖ້າຫຍັງອີກ ! "

" ອັດຕະມາບໍ່ມີເງິນອັດນ້ອຍ ເພື່ອຈະຈ່າຍຄ່າຂ້າມຂອງອອກເລີຍ "

" ເອີ ! ຄັນຊັ້ນກໍແກ້ຜ້າຄຸມອອກ ລອຍເອົາຫນັ້ນແລ້ວ ຂ້ອຍບໍ່ກ່ຽວດອກ "

ຊາວຫາປາເຫັນເຫດການດັ່ງກ່າວເລີຍຂໍຊ່ອຍ.

---

" ຖ້າຍາທ່ານຫາກບໍ່ຕິເຮືອນ້ອຍ ຂະນ້ອຍຈິໄປສົ່ງ "

" ອັດຕະມາບໍ່ມີເງິນຈັກອັດນ້ອຍພໍຈິ່ຈ່າຍຄ່າຂ້າມໄດ້ "

" ບໍ່ເປັນຫຍັງ ! ຂະນ້ອຍບໍແມ່ນພໍຄ້າ "

ເມື່ອຍາທ່ານຂ້າມໄປຮອດເບື້ອງນັ້ນແລ້ວ ກໍ່ເຂົ້າໄປໃນພຸ່ມໄມ້ ແລ້ວກັບອອກມາດ້ວຍກິ່ງໄມ້ອັນໜຶ່ງ. ຍາທ່ານເອົາມອບໃຫ້ຊາວ ຫາປາພ້ອມທັງເວົ້າວ່າ :

" ເອົາອັນນີ້ໄປໄວ້ນຳ ມັນຈະຊ່ອຍເຈົ້າເວລາຈຸຈົນ " ຊາວຫາປາເອົາກິ່ງໄມ້ນັ້ນໄປໄວ້ ເລີຍໃຫ້ກຳເນີດແກ່ປາຈຳນວນ ຫຼວງຫຼາຍຢ່າງບໍ່ຂາດສາຍກິ່ງໄມ້ດັ່ງກ່າວຊື່ວ່າ ໂປຊິ ແລະປາດັ່ງກ່າວ ຊື່ວ່າ ເອດສຸ ( Coilia Mystus Linne ) ຕັ້ງແຕ່ ນັ້ນມາຄົນຫາປາຄົນນັ້ນເລີຍມີຄວາມອຸດົມສົມບູນບໍ່ອົດບໍ່ຢາກແລ.



# ສິບຫົກງອກ "ວະ"

ແຕ່ກ່ອນ ຢູ່ແຫ່ງໃດແຫ່ງໜຶ່ງທີ່ປະເທດຍີ່ປຸ່ນ ຍັງມີເສດຖີ ຜູ້ໜຶ່ງ ຢາກຈະໄດ້ລູກເຂີຍໃນຈຳນວນພວກໂຢຊິ ( ພວກເສັຽສິ່ງແສ ໄປແລ້ວ ) ເລີຍອອກຫົວຄິດເປັນບັນຫາອອກມາ ແລ້ວຂຽນ ບັນຫານັ້ນ ຕິດໄວ້ຕໍ່ໜ້າປະຕູບ້ານຂອງຕົນ. ບັນຫານັ້ນມີຂໍ້ຄວາມດັ່ງນີ້ :

" ຜູ້ໃດສາມາດຂະຫຍາຍງອກ "ວະ" ນີ້ໃຫ້ເປັນ 16 ຄຳ ໄດ້ ຈະເອົາມາເປັນລູກເຂີຍສືບມູນມັງສັງຂະຫຽາ "

ບັນດາຫົວສະໝອງຕ່າງໆຢູ່ອ້ອມແອ້ມນັ້ນ ຕ່າງກໍ່ບີບ ຂະໝັບ ເພື່ອຊອກຫາຄຳຕອບ ແຕ່ກໍ່ຈ້ອຍວັບ ບໍ່ໄດ້ເລື່ອງລາວຫັຍງເລີຍ ຂະນັ້ນ ຍັງມີຊາຍໜຸ່ມຄົນໜຶ່ງຂານອາສາ. ເຂົາຍ່າງເຂົ້າປະຕູ ບ້ານໄປ ຮອດເດີ່ນ "ໂດມະ" (ຫ້ອງດິນຮາບ) ເຊິ່ງທັງເປັນເດີ່ນ "ນິ

ວະ" ຂ້າງໃນພ້ອມ. ແລ້ວຊາຍໜຸ່ມກໍເວົ້າຂຶ້ນວ່າ :

" ຢູ່ໃນ "ນິວະ" ນີ້ມີ "ກູວະ" (ຈຸກ) ດວງໜຶ່ງນອກນັ້ນ ແມ່ເຈົ້າຂອງເຮືອນຍັງມີ "ຊິວະ" ( ເສັ້ນໜ່ຽວໃບໜາ ) ບວກ ກັບ "ອິຈິວະ" ເຊິ່ງຂ້ອຍຮັກສາໄວ້ດີເກົ່າຂ້ອຍກໍຈະໄດ້ເຊັ່ນ :

" ນິ (2)+ ກູ (9)+ ຊິ (4)+ ອິຈິ (1)= 16 ໝາຍ ຄວາມວ່າ 16 ວະ ) ແລ້ວຊາຍໜຸ່ມກໍເລີຍໄດ້ລູກສາວເສດຖີ.



# ເດັກນ້ອຍຕາຍດິກນ້ຳ

ແຕ່ຄັ້ງກ່ອນຍັງມີໝໍຢາຜູ້ໜຶ່ງ ເດີນທາງມາພັກທີ່ວັດຫລັງໜຶ່ງ ຕອນກາງຄືນມາ ລາວເລີຍຕື່ນສະເດີດຂຶ້ນ ຍ້ອນຄວາມລົມກັນຂອງຜີແຖນສອງໂຕ. ເຂົາທັງສອງຖົກຖຽງກັນວ່າ ຕ້ອງໃຫ້ເດັກນ້ອຍ ທີ່ເກີດໃໝ່ຄືນນັ້ນ ຢູ່ເຮືອນໃກ້ຄຽງນັ້ນຕາຍດິກນ້ຳ ເມື່ອອາຍຸ 16 ປີ ຕື່ນເຊົ້າມາ ໝໍຢາຜູ້ນັ້ນເລີຍຮີບແລ່ນໄປບອກຜູ້ເປັນພໍ່ແມ່ຂອງ ເດັກນ້ອຍທີ່ເກີດໃໝ່ເຖິງອັນຕະລາຍຂອງລູກຜູ້ເກີດໃໝ່ເມື່ອອາຍຸໄດ້16 ປີ. ເມື່ອພໍ່ແມ່ໄດ້ຍິນດັ່ງນັ້ນ ກໍເອົາຈິດໃສ່ໃຈເສັຽພະຍາຍາມ ບໍ່ໃຫ້ລູກໄປໃກ້ນ້ຳເວລາອາຍຸເຖິງ 16 ປີ. ແຕ່ວັນໜຶ່ງ ເວລາທີ່ ທ້າວລູກຊາຍມີອາຍຸເຖິງ 16 ປີ, ເມື່ອພໍ່ແມ່ກັບມາແຕ່ນາ ເລີຍເຫັນລູກຕາຍຢູ່ໃນເຮືອນ ໂດຍມີຜ້າກັ້ງຫົ່ມຮູບຟອງທະເລພັນຢູ່.

# ແມ່ນ້າ

ແຕ່ກ່ອນຍັງມີຄອບຄົວຜົວເມັຽໜຶ່ງມີລູກອ່ອນ 3 ຄົນ, ທັງ 3 ພ້ອມພາກັນດຳລົງຊີວິດຢູ່ຢ່າງມີຄວາມສຸກ. ຢູ່ມາບໍ່ພໍທໍ່ໃດ ຜູ້ເປັນແມ່ເລີຍລົ້ມປ່ວຍຫມົດກຳໄປ ປະໃຫ້ຜູ້ເປັນຜົວລ້ຽງລູກນ້ອຍທັງສາມດ້ວຍຄວາມລຳບາກ. ເພື່ອບັນເທົາຄວາມຫຍຸ້ງຍາກໃນເຮືອນ ຜູ້ເປັນຜົວເລີຍຊອກຫາເມັຽໃໝ່ມາຢູ່ນຳ. ເມັຽໃໝ່ເປັນຄົນຖອຍ ບໍ່ຮັກລູກຂອງຜົວ. ວັນໜຶ່ງກ່ອນທີ່ມັນຈະອອກໄປເຮັດວຽກນອກບ້ານ ແລະ ສວຍເອົາໂອກາດທີ່ຜູ້ເປັນຜົວບໍ່ຢູ່ ມັນເລີຍມອບໜ້າທີ່ເຊິ່ງບໍ່ມີໃຜປະຕິບັດໄດ້ໃຫ້ລູກທັງ 3 ເຊັ່ນ : 1. ຈົ່ງຟັ້ນເຊືອກຂີ້ເຖົ່າ, 2. ຈົ່ງເອົາຄ້ອນຕີກວາດກາງບ້ານ, 3. ຈົ່ງເອົາຊາຕັກນ້ຳສາງໃຫ້ ເຕັມອຸ່ມເຕັມໄພ.

ເມື່ອໄດ້ຮັບໜ້າທີ່ດັ່ງກ່າວແລ້ວ ເດັກນ້ອຍທັງສາມກໍເລີຍມີແຕ່ໄຫ້ເບິ່ງໜ້າກັນ. ຂະນະນັ້ນຍັງມີຍາຍເຖົ້າຜູ້ໜຶ່ງກາຍມາ ແຖບນັ້ນ ພໍມາບເຫັນເດັກທັງສາມຮ້ອງໄຫ້ຢູ່ເລີຍເຂົ້າໄປຖາມ. ເມື່ອຊາບຕົ້ນສາຍປາຍເຫດຂອງຄວາມທຸກໂສກຂອງພວກເຂົາແລ້ວ ຍາຍເຖົ້າເລີຍອິຕົນຊາດ ຈຶ່ງແກ້ບັນຫາຊ່ອຍພວກເຂົາ. ຍາຍເຖົ້າເອົາເຊືອກມາຈູດກອງໄວ້ເປັນເຖົ່າ ແຕ່ຍັງຄົງຮູບປະພັນຂອງເສັ້ນເຊືອກຢູ່.

ຍາຍເຖົ້າເອົາຍູມາກວາດກາງບ້ານ ແລ້ວກໍເອົາຄ້ອນຕີມາທຸບໃຫ້ເປັນຮອຍ, ຍາຍເຖົ້າເອົາເຈັ້ຽນ້ຳມັນມາຕິດພົມກະຊາ ແລ້ວກໍເອົາລົງຕັກນ້ຳໄດ້. ເມື່ອເຮັດ 3 ຢ່າງນີ້ຊ່ອຍເດັກນ້ອຍແລ້ວເຖົ້າກໍເລີຍໄປ.

ເມື່ອແມ່ນ້າກັບມາເຮືອນ ພົບວ່າໜ້າທີ່ບໍ່ສາມາດເປັນ ໄປໄດ້ທີ່ຕົນມອບໃຫ້ນັ້ນ ເດັກນ້ອຍສາມາດປະຕິບັດໄດ້ໝົດ ມັນເລີຍໂມໂຫຂຶ້ນ ຈັບເອົາເດັກນ້ອຍທັງ 3 ໄປຂ້າ ແລ້ວເອົາໄປຝັງຢູ່ກອງກົກໄຜ່ແຄມບ້ານຂອງເຂົາ. ເມື່ອຜູ້ເປັນພໍ່ກັບມາແຕ່ກິດທຸລະ ບໍ່ເຫັນລູກຢູ່ເຮືອນເລີຍເປັນຮ່ວງ. ລາວຖາມເມັຽວ່າ "ລູກໄປໃສ" ຜູ້ເປັນເມັຽຕອບວ່າ : "ບໍ່ຮູ້ ! ພວກເຂົາອອກໄປນອກບ້ານ" ຜູ້ເປັນພໍ່ຄອງຄອຍຈົນຮອດແລງ ເມື່ອບໍ່ເຫັນລູກກັບມາ ເລີຍໄປຊອກ. ເຂົາຍ່າງກາຍໄປກອງພຸ່ມໄມ້ໄຜ່ ເດັດເອົານໍ່ດວງໜຶ່ງ ນໍເລີຍເວົ້າວ່າ:

"ພໍ່ງ ! ລູກຝັ້ນເຊືອກດ້ວຍຂີ້ເຖົ່າ" ລາວຫັກອີກດວງໜຶ່ງ ບໍ່ເລີຍເວົ້າວ່າ : "ພໍ່ງ ! ລູກກວາດເດີ່ນບ້ານດ້ວຍຄ້ອນຕີ" ລາວຫັກອີກດວງໜຶ່ງໜໍ່ເລີຍເວົ້າວ່າ: "ພໍ່ງ ! ລູກຕັກນ້ຳດ້ວຍກະຊາ"

ຈາກນັ້ນພໍ່ຈຶ່ງເອົາສ້ຽມມາຂຸດລົງກອງກໍໄຜ່ ເລີຍພົບສົບລູກ 3 ຄົນ. ເຂົາກັບມາເຮືອນດ້ວຍຄວາມເຈັບໃຈທີ່ສຸດ ຈຶ່ງໄລ່ຜູ້ເປັນເມັຽໜີ. ຈາກນັ້ນມາເພື່ອເປັນສີລິມຸງຄຸນແກ່ລູກ ລາວເລີຍເຫຼື້ອມໃສໃນພຸດທະສາສະໜາ ອ່ານກຳພີດີກາ ຈຳສິນພາວັນນາຈົນຕະຫຼອດຊີວິດຂອງຕົນ.



# ນົກຈອກ ແລະ ຫອນ

ແຕ່ກ່ອນເພິ່ນເວົ້າວ່າ ນົກຈອກແລະຫອນເປັນອ້າຍນ້ອງ ກັນ. ມື້ຫນຶ່ງພໍ່ແມ່ຂອງພວກເຂົາເຈັບ ເລີຍບອກຂ່າວໃຫ້ພວກລູກຮູ້. ເມື່ອນົກຈອກຮູ້ຂ່າວດັ່ງກ່າວ ຈຶ່ງຟ້າວຟັ່ງມາເບິ່ງພໍ່ແມ່ ຢ່າງບໍ່ທັນໄດ້ ກິນຫຍັງລົງທ່ອງຈັກຫນ່ອຍເລີຍ. ສ່ວນຫອນນັ້ນ ຍັງໃຊ້ເວລາຂອງ ຕົນໄປຊົມສວນດອກກຸຫຼາບຢູ່ ເມື່ອມາຮອດ ພໍ່ແມ່ເລີຍຂາດໃຈຕາຍແລ້ວ

ດັ່ງນີ້ເອງ ທີ່ຕັ້ງແຕ່ບາດນັ້ນມາ ເຮືອນຄົນຈຶ່ງເປັນບ່ອນ ເພິ່ງພາອາໄສຂອງນົກຈອກຜູ້ມີຄວາມກະຕັນຍູ ຕະກະເວທີ.

ສ່ວນຫອນຜູ້ຂີ້ບໍ່ຮູ້ ບໍ່ມີຄວາມກະຕັນຍູຕໍ່ພໍ່ແມ່ນັ້ນ ຈຶ່ງໄດ້ຮັບບາບກຳ ໂດຍເລາະເລັ້ມໄປຕາມປ່າຕາມນາ ເພື່ອຊອກຈະກິນຫມາກໄມ້ຫົວມັນແລະບົ້ງແມງ. ພໍຮອດຄ່ຳມາ ກໍ່ມາເຂົ້າຮູເຂົ້າຮັງຢູ່ ຕາມ

ໂກນໄມ້ ພ້ອມທັງຮອງໄຫ້ຮ່ຳໄຮຢູ່ເປັນປະຈຳ ເພາະຂົມຫນານຂອງ ຕີນຂອງແຫງໂຕຂອງ.



# ເລືອຕາງ່ຽວ

ແຕ່ກີ້ແຕ່ກ່ອນ ຢູ່ຕີນພູ ອຸນແຊນ (ເຟີ້ອອະມະຕະ) ເຂດທະເລສາບສຸວະຂອງພູເຂົາ ກີຕະບຸຊິ ຍັງມີເງືອກສອງໂຕພາກັນ ອອກມາຈາກທະເລສາບດັ່ງກ່າວ. ຂະນະນັ້ນ ເຈົ້າຊາຍຂອງເມືອງ ຊິມມາບາຣາ ໄດ້ໄປປະພາດປ່າ ພ້ອມດ້ວຍທະກາທະຫານທີ່ຖືນາດຖືປືນໄປນຳພ້ອມ. ເມື່ອເຫັນເຫດການແນວນັ້ນ ທະຫານເລີຍຍົກປືນ ຂຶ້ນຍິງຖືກງູໂຕຜົວຕາຍແລະໂຕເມັຽບາດເຈັບ ໜີໄປ.

ຕົກມາມື້ໜຶ່ງຂະນະທີ່ຝົນຕົກໜັກ ນາງສາວຜູ້ໜຶ່ງທີ່ຖືກ ບາດເຈັບທີ່ຕີນ ກໍ່ມາຕ່ອຍປະຕູຂອງເຮືອນນາຍໝໍໜຸ່ມຜູ້ໜຶ່ງ ຊື່ ຮິອັນ ນາຍແພດໜຸ່ມຜູ້ນັ້ນມີຄວາມສົງສານ ຈຶ່ງໄດ້ປິ່ນປົວນາງຈົນດີ ແລ້ວກໍສະເໜີໃຫ້ນາງຢູ່ນຳເຂົາ ເພາະເຂົາຢູ່ຄົນດຽວກັບແມ່. ຕໍ່ມານາຍ

ໜໍ່ຫນຸ່ມຜູ້ນັ້ນເລີຍມັກກັບນາງ ຈຶ່ງເອົານາງເປັນເມັຽແລະໄດ້ລູກນໍາກັນຜູ້ຫນຶ່ງຊື່ວ່າ ໂກຕາໂຣ.

ຕົກມາແລງຫນຶ່ງ ຜູ້ຜົວອອກໄປນອກບ້ານ ເມື່ອກັບມາເລີຍພົບງູບັກໃຫຍ່ກໍ່ຽວກອດລູກຂອງຕົນຢູ່ ສະພາບດັ່ງກ່າວເຮັດໃຫ້ເຂົາຢ້ານກົວທີ່ສຸດ ຈັກຫນ່ອຍງູໃຫຍ່ເລີຍມີ້ນຕາຂຶ້ນ ແລວກໍກັບຮ່າງ ມາເປັນເມັຽຂອງຕົນຄືນພ້ອມທັງເວົ້າຕໍ່ຜົວວ່າ :

" ຂ້ອຍເສັຽໃຈທີ່ສຸດ ທີ່ໄດ້ໃຫ້ເຈົ້າເຫັນຮ່າງແທ້ ຂອງຂ້ອຍ ຂ້ອຍຈະຕ້ອງໄດ້ຈາກຜົວແລະລູກໄປ "

ນາງເຈາະເອົາແກ່ນຕາຂອງຕົນຫນ່ວຍຫນຶ່ງຍື່ນໃຫ້ຜົວພ້ອມທັງເວົ້າວ່າ :

" ຈົ່ງມອບອັນນີ້ໃສ່ມືໃຫ້ລູກເມື່ອ ເວລາລູກໄຫ້ " ແກ່ນຕາທີ່ເຂົາເຈາະເອົາອອກມານັ້ນ ແມ່ນຫນ່ວຍເພັດບັກໃຫຍ່.

ຢູ່ຕໍ່ມາພາຍຫຼັງວັນທີ່ຫນຶ່ງ ເມສາ 1792 ພູໄຟ ຟູເຄນ ເລີຍລະເບີດ ເຮັດໃຫ້ພູເຂົາອຸນແຊນພັງທະລາຍລົງເຄິ່ງຫນຶ່ງ ກໍໃຫ້ເກີດມີຫນ້າຜາສູງຊື່ວ່າ ມາຍຸຍາມາ ແລະເກາະດອນ 99 ຫນ່ວຍໃນທະເລສາບແຫ່ງນັ້ນ.

ຄອບຄົວຂອງ ອິອົນ ພາກັນຕື່ນຕະຫນົກຕົກໃຈຈາກ ການລະເບີດດັ່ງກ່າວ ເລີຍພາກັນອອກຈາກເຮືອນ ເຫັນງູໃຫຍ່ກໍາລັງ ເລືອ

ເຂົ້າເຮືອນ ເຮັດໃຫ້ຄອບຄົວຂອງເຂົາພ້ອມທັງຄຸ້ມບ້ານທັງໝົດປອດ ໄພ ສ່ວນຊາວເມືອງທັງເມືອງຈຳນວນຫຼາຍໝື່ນຄົນ ພາກັນລົ້ມຕາຍ ຫາຍສາບໄປໝົດ. ຈາກນັ້ນມາ ຕົວເມືອງດັ່ງກ່າວເລີຍໄດ້ ຊື່ວ່າ ເຮບິບາຈິ (ປັດຈຸບັນເປັນ ເຮນບາຈິ) ແປວ່າ ນາຄະນະຄອນ.

ເລີ່ມແຕ່ນັ້ນມາ ເມື່ອຮອດຕອນແລງລະດູຮ້ອນຂອງແຕ່ລະຂວບ ປີມາ ຊາວເມືອງພາກັນເຮັດເຮືອເຟືອງ ເອົາເຂົ້າຂອງໝາກເຜັດ ໝາກເຂືອ ໝາກແຕງ ໃສ່ໄວ້ໃນເຮືອຫັ້ນແລວ ກໍປ່ອຍໄປຕາມທະ ເລສາບດັ່ງກ່າວ ເປັນການບູຊາປູ່ຍ່າຕານາຍທີ່ຕາຍໄປ ແລະ ເຈົ້າ ອາຮັກຫຼັກເມືອງ. ເຮືອດັ່ງກ່າວນັ້ນໃຫ້ຊື່ວ່າ ກະຕະເມ ແປວ່າ : " ຕາອ່ຽວ ".



# ລູກໝາສວງ

ຍັງມີຊາວນາຄອບຄົວໜຶ່ງ ບໍ່ເຄີຍມີລູກນຳເພິ່ນຈັກເທື່ອຜູ້ເປັນເມັຽມີຄວາມຫງ່ວມເຫງົາ ຈຶ່ງໄປໄຫວ້ເຈົ້າອາຣັກຢູ່ພູຣັດຕັນຄະຕະເກາະ ເພື່ອຂໍລູກນຳ. ຕອນກາງຄືນມາເມື່ອລາວນອນ ເລີຍຝັນວ່າໝາສວງໂຕບັກໃຫຍ່ ມາໝູບໃສ່ທ້ອງຂອງລາວ. ຈາກນັ້ນມາບໍ່ພໍທໍ່ໃດ ລາວເລີຍຮູ້ສຶກມີທ້ອງ ແລ້ວກໍ່ເກີດລູກຊາຍຜູ້ໜຶ່ງອອກມາ. ລູກຊາຍຄົນນັ້ນ ເມື່ອໃຫຍ່ກ້າໜ້າບານມາແລ້ວ ກໍໄປຕັດຫຍ້າທີ່ພູ ຣັດຕັນຄະຕະເກາະ ທຸກໆມື້ ເພື່ອເອົາມາໃຫ້ສັດກິນ. ໝາສວງທີ່ຢູ່ໃນພູໜ່ວຍນັ້ນ ໄດ້ສິດສອນວິຊາອາຄົມໃຫ້ແກ່ທ້າວນ້ອຍຜູ້ນັ້ນ ຈົນກາຍເປັນຄົນເກັ່ງກ້າທີ່ສຸດ. ຜູ້ເປັນພໍ່ແມ່ໄດ້ແຮກຊື່ໃຫ້ທ້າວວ່າ : ອິນາສູມະ (ສາຍຟ້າແລບ). ມື້ໜຶ່ງທີ່ນະຄອນຫຼວງ ເຢໂດ ໄດ້ມີປະກາດ

ແຂ່ງຂັນມວຍປ້ຳກັບ ໂອນິຄະຕະເກະ ເພື່ອຍາດເອົາຜູ້ຊະນະ ເລີດຂອງຈັກກະພົບຍີ່ປຸ່ນ. ທ້າວ ອິນາສຸມະ ໄດ້ເດີນທາງດ້ວຍຕີນ ເປັນໄລຍະ 300 ໂຍດກ່ວາຈະເຖິງນະຄອນຫຼວງ. ເຂົາໄດ້ ເຂົ້າຮ່ວມພິທີມວຍອັນຍອດຢ້ຽມຄັ້ງນີ້. ຝູງຜູ້ຊົມພາກັນຮ້ອງໂຮໂອທະການ ສະແດງຄວາມພໍໃຈເມື່ອສອງສິງສອງເສືອໃຫ້ພົບກັນ. ທັງສອງ ສູ້ຊິງໄຊກັນ ຈົນປິ້ນລ້ວາງຄ້ວາງ ລ້ວາງຄ້ວາງ. ທັນໃດນັ້ນ ແລະຢ່າງບໍ່ຄາດຝັນເລີຍ ທ້າວອິນາສຸມະ ເລີຍຄາບເອົາປັ້ນເກົ້າຂອງ ໂອນິຄະຕະເກະ ແລ້ວກໍ່ທັກເບື້ອງຫຼັງ ແລ້ວກໍໂຍນພົ້ນໄປນອນເອາະເຍາະຢູ່ກັບພື້ນ. ອິນາສຸມະ ເລີຍໄດ້ກຽດຕິນາມ ເປັນຜູ້ຊະນະເລີດ ຂອງຍີ່ປຸ່ນ. ໂອນິຄະຕະເກະ ຮູ້ວ່າໂຕເອງຕົກເປັນຮອງ ເລີຍພະຍາຍາມໃສ່ປາເບື້ອ ທ້າວອິນາສຸມະ ແຕ່ກໍບໍ່ໄດ້ຮັບຜົນ, ມັນຈຶ່ງຂໍ້ອອນ ວອນທ້າວອິນາສຸມະວ່າ ຂໍໃຫ້ປ່ອຍໃຫ້ມັນແພ້ອີກເທື່ອໜຶ່ງ. ທ້າວ ອິນາສູມະ ຄົນໃຈດີແລະໃຈອ່ອນ ເລີຍຕົກລົງປະຕິບັດຕາມ ໂດຍປ່ອຍ ໃຫ້ທ້າວ ໂອນິຄະຕະເກະ ແພ້ໃນການແຂ່ງຂັນຊຸດໜ້າ. ໃນທີ່ສຸດທ້າວໂອນິຄະຕະເກະ ກໍໄດ້ກາຍມາເປັນຜູ້ຊະນະເລີດຄືນ. ຈາກນັ້ນມາບໍ່ວ່າໃນການແຂ່ງຂັນເທື່ອໃດ ທ້າວອິນາສຸມະ ເລີຍບໍ່ແພ້ທ້າວໂອນິຄະຕະເກະ ຈັກເທື່ອເລີຍ. ເລີ່ມແຕ່ນັ້ນມາ ເຂົາກໍເລີຍເຊົາການແຂ່ງຂັນ ກັບມາຢູ່ບ້ານເກີດຂອງເຂົາຄືນດ້ວຍຄວາມອັບອາຍ.

ພະລິດຕົກລົງມາໃສ່ຫນອງ ບີວາ ກາຍເກີດເປັນປາໃນທີ່ໃສ່ຊື່ວ່າ : ເຊັນໂກໂຣະ ບູນາ.



# ເຊັນໂກໂຣະຂຶ້ນຟ້າ

ມີເທື່ອຫນຶ່ງທ້າວ ເຊັນໂກໂຣະ ຍ່າງເລາະຫຼິ້ນຕາມຫາດຊາຍ ເລີຍໄປພໍ້ຄ້ອງວິເສດຫນ່ວຍຫນຶ່ງ. ມັນຕີຄ້ອງຂອງມັນພ້ອມ ທັງເວົ້າວ່າ : " ດັງແຫນບເຂົ້າ " ແລ້ວດັງມັນກໍ່ແຫນບເຂົ້າອີກ.

ຢູ່ບ້ານຂອງມັນມີຄອບຄົວມັ່ງຄັ່ງຜູ້ຫນຶ່ງຊຶ່ງມີລູກສາວ ທີ່ຊົງຄວາມງາມຫາທີ່ປຽບບໍ່ໄດ້. ທ້າວນ້ອຍຄົນນັ້ນ ຄ່ອຍໆຍັບເຂົ້າ ໄປໃກ້ນາງ ແລ້ວກໍ່ຕ່ອຍຄ້ອງຂຶ້ນພ້ອມທັງເວົ້າວ່າ : " ດັງແຫນບເຂົ້າ" ແລ້ວດັງຂອງນາງເລີຍແຫນບລົງ ຈົນເກືອບບໍ່ເຫຼືອຫຍັງເລີຍອັນເຮັດໃຫ້ນາງເສັຽໂສມຫມົດ. ຜູ້ເປັນພໍ່ແມ່ມີຄວາມອຸກອັ່ງຄັ່ງແຄ້ນ ເຫຼືອທີ່ສຸດ ຈຶ່ງປ່າວເອົາແພດຫມໍມາປົວ. ແຕ່ກໍ່ບໍ່ມີໃຜສາມາດປົວໄດ້. ຂະນະນັ້ນ ທ້າວນ້ອຍກໍ່ນຸ່ງເຄື່ອງແບບຊົນນະບົດຜ່ານມາ ພ້ອມທັງ ບອກ

# ແສງໄຟປະຫຼາດ

ແຕ່ລະປີ ເມື່ອເຖິງທ້າຍປີມາ ຜູ້ຄົນມັກຈະເຫັນແສງໄຟ ປະຫຼາດເຮືອງຮອງຢູ່ນ່ານນ້ຳທະເລ ອະຣິອະເກະ ສະເໜີ. ເລື່ອງລາວຂອງມັນເປັນມາດັ່ງນີ້ :

ແຕ່ກີ້ແຕ່ກ່ອນຍັງມີຍາຍເຖົ້າຜູ້ໜຶ່ງກັບລູກຊາຍ ພາກັນ ຕັ້ງຕູບຕັ້ງຢູ່ແຄມຝັ່ງ ຢານາຢີຄາວະ ດ້ວຍຄວາມທຸກຍາກ. ມື້ໜຶ່ງ ແມ່ເຈັບໜັກ ຜູ້ເປັນລູກທີ່ຊື່ວ່າ ໂຢກິຈິ ໄດ້ໄຫວ້ວອນເຈົ້າອາຮັກ ຫຼັກເມືອງ ຜີໄທ້ຜີແຖນໃຫ້ຄຸ້ມຄອງຊີວິດຂອງແມ່ໄວ້. ແຕ່ວ່າ ອາການຂອງແມ່ຍັງບໍ່ກະເຕື້ອງດີຂຶ້ນເລີຍ. ໃນສະພາບຄັບຂັນແນວນັ້ນ ໂຢກິຈິ ເລີຍຄິດອອກວ່າ :

" ຢ່າງນ້ອຍ ກ່ອນຈະຕາຍກໍຂໍໃຫ້ແມ່ໄດ້ກິນປາປົ້ງແຊບໆ ໂຕ



[illegible]
ເຂົ້າບ່ອນທີ່ຖືກມັດຕິດ. ເມື່ອພະເຈົ້າແຫ່ງກະແສຟ້າມາບເຫັນກໍເລີຍເອົາທ້າວນ້ອຍນັ້ນໄວ້ນຳເລີຍ ເພື່ອຮັບໜ້າທີ່ຕີຄ້ອງຂອງມັນ ເວລາຢາກໃຫ້ມີແດດມີຝົນ. ມື້ໜຶ່ງມັນຍ່າງໄປຕາມກ້ອນເມກສີດຳ ເລີຍ

ໜຶ່ງຈະເປັນການດີ " ຄ້ອນຄິດແລ້ວ ທ້າວເລີຍອອກໄປຫາປາ ເວລານັ້ນແມ່ນກາງຄືນ ເຮືອນ້ອຍຂອງເຂົາຄ່ອຍເຄື່ອນໄປ ເຄື່ອນໄກອອກໄປຕາມກະແສຂອງນ້ຳຢ່າງບໍ່ຮູ້ສຶກຕົວ. ຢູ່ຂ້າງໜ້າ ຂອງເຂົາມີແສງໄຟຮຸ່ງມິບມຽງຢູ່ ອັນໄດ້ດູດດຶງໃຈທ້າວໃຫ້ເຂົາໄປຫາ. ເມື່ອເຂົ້າໃກ້ແລ້ວ ທ້າວເລີຍພົບເຫັນເຮືອລຳໜຶ່ງເຊິ່ງກຳລັງປີ້ງປາ ໂຕໃຫຍ່ດັງຊາດຊິດຢູ່. ໂຢກິຈິ ໃຈເຕັ້ນຂຶ້ນທັນທີ ຄວາມຢາກໄດ້ປາໂຕນັ້ນເມືອໃຫ້ແມ່ກິນໄດ້ມາສະກົດຈິດໃຈຂອງເຂົາ ເຮັດໃຫ້ເຂົາ ກ້າເຮັດທຸກສິ່ງທຸກຢ່າງ ໂດຍລືມສາວ່າ ແມ່ນຂອງຜູ້ອື່ນເຂົາ. ຂະນະທີ່ເຂົາເດີ່ນເຂົ້າຫາປີ້ງປາດ້ວຍຄວາມສົ່ນໆເຊັນໆນັ້ນ ກໍເລີຍ ມີສຽງທ້ວງອອກມາ :

" ເອ ! ມຶງເຮັດຫຍັງ ? " ແລ້ວມືທີ່ມີຂົນຊຸກສຸ້ຍກໍຄວາມາຈັບເອົາແຂນຂອງທ້າວໄວ້ແໜນ.

ແຕ່ຄືນນັ້ນມາທ້າວໂຢກິຈິ ບໍ່ໄດ້ກັບມາຫາແມ່ແລະເຮືອນ ຂອງເຂົາອີກເລີຍ ແລະກໍຕັ້ງແຕ່ບັດນັ້ນເປັນຕົ້ນມາ ເມື່ອຮອດຂວບປີຂອງວັນຕາຍຂອງເຂົາ ຜູ້ຄົນທັງຫຼາຍກໍເຫັນມີແສງໄຟຮຸ່ງມິບມຽງ ຢູ່ກາງທະເລ ອາຣິອາເກະ ອັນກວ້າງໃຫຍ່ໄພສານ.





# ອາກະຕະໂລ
# ທ້າວຂີ້ໄຄ

ແຕ່ກີ້ແຕ່ກ່ອນຍັງມີສອງຜົວເມັຽເຖົ້າຄູ່ໜຶ່ງ ບໍ່ອາບນໍ້ານຳເພິ່ນມາໄດ້ກ່ວາສິບປີແລ້ວ ຈົນຂີ້ໄຄໂອບຕົນໂຕປານຄວາຍ ເກືອກບວກ. ສອງເຖົ້າດັ່ງກ່າວບໍ່ມີລູກນຳເພິ່ນຈັກຄົນເລີຍ ມື້ໜຶ່ງຜູ້ເປັນຜົວ ເລີຍເວົ້າກັບເມັຽວ່າ : " ຂູດເອົາຂີ້ໄຄຂອງພວກເຮົາມາໂຮມກັນ ປັ້ນຮູບເດັກນ້ອຍເທາະ " ຄອນວ່າແລ້ວສອງເຖົ້າຜົວເມັຽເລີຍ ພາກັນເຮັດ. ເດັກນ້ອຍທີ່ເອົາຂີ້ໄຄປັ້ນຂຶ້ນມານັ້ນເລີຍໃຫຍ່ຂຶ້ນທັນທີ ທັນໃດແລະກິນໄດ້ບັກຫຼາຍໆ. ຄາບເຂົ້າຄາບດ່ຽວຂອງມັນຊ່ຳກັບ ອາຫານເປັນປີໆ. ຜູ້ເປັນພໍ່ເລີຍເວົ້າກັບມັນວ່າ : " ມຶງກິນຫຼາຍໂພດ ຈົນບໍ່ເຂົ້າເຫຼືອຈັກເມັດເລີຍ ມຶງຈົ່ງໄປສະແດງແຜ່ງລິດຢູ່ບ່ອນອື່ນໄປ" ທ້າວຂີ້ໄຄເລີຍອອກເດີນທາງພ້ອມທັງແບກເອົາຄ້ອນຕະບອງໜັກຊ່ຳເສົາເຮືອນນ້ໄປນຳຄອນໜຶ່ງ. ເມື່ອໄປຕາມທາງມັນເລີຍໄປ ພົບທ້າວມີປະຕະໂລະ ເຊິ່ງແມ່ນນັກການກິດຄັນ. ເຂົາທັງສອງໄດ້ຕໍ່ສູ້

ລອງແຮງກັນໄປມາ ໃນທີ່ສຸດກໍເລີຍບໍ່ແພ້ທ້າວຂີ້ໄຄ. ທ້າວ ມີປະຕະໂລະ ຈຶ່ງຍອມເປັນລູກນ້ອງຂອງທ້າວຂີ້ໄຄ. ຕໍ່ຈາກນັ້ນມັນເລີຍ ໄປພົບກັບທ້າວ ອີສິຕະໂລະ ອີກ ເຊິ່ງເຂົາກໍໄດ້ລອງແຮງກັນ ແຕ່ ກໍບໍ່ຊະນະທ້າວຂີ້ໄຄ ຈຶ່ງໄດ້ຍອມເປັນລູກນ້ອງທ້າວຂີ້ໄຄອີກ. ທ້າວຂີ້ໄຄພ້ອມດ້ວຍລູກນ້ອງຂອງມັນທັງສອງໄດ້ພາກັນໄປເຖິງຕົວເມືອງ ແຫ່ງໜຶ່ງ. ເວລານັ້ນປະຕູເຮືອນທຸກຫຼັງອັດແຈບສະໜິດ ເຮັດໃຫ້ ພວກເຂົາແປກໃຈ. ພວກເຂົາໄດ້ໄປເຄາະປະຕູຂອງເຮືອນເສດຖີ ຫຼັງໜຶ່ງ ພ້ອມທັງຖາມວ່າ : " ເປັນຫຍັງຈຶ່ງອັດປະຕູເຮືອນ ເສດຖີເລີຍຕອບວ່າ : " ມື້ນີ້ຜີຍັກຈະມາເອົາລູກສາວຂອງຂ້ອຍໄປເພາະເຖິງຮອບຂອງມັນແລ້ວ " ເຂົາທັງສາມຄົນພາກັນພັກຢູ່ໃນເຮືອນດັ່ງກ່າວ ຄອງຖ້າໃຫ້ຍັກມາ. ຄາວເທິງໜຶ່ງມື້ສຽງດັງຂຶ້ນ ຄືແຜ່ນດິນໄຫວ ບອກໃຫ້ຮູ້ວ່າ ຜີຍັກມາຮອດແລ້ວ. ມີມັນຄວາຈັບເອົາ ອິສິຕະໂລະ ຜູ້ເຝົ້າຍາມຢູ່ປາກປະຕູຍັດເຂົ້າປາກມາບລີມບາດດຽວ. ເມື່ອເຫັນເປັນແນວນັ້ນ ທ້າວຂີ້ໄຄກໍເລີຍຮີບຄວາຈັບເອົາຄ້ອນ ຕະບອງຂອງຕົນແກ່ວງວິດໆ. ສ່ວນຜີຍັກເລີຍຮີບຫຼຸບຄວາໃສ່ຫີບ ທີ່ມີ ປະຕະໂລະປອມຕົວຢູ່ແທນບ່ອນຂອງລູກສາວເສດຖີ. ຂະນະນັ້ນທ້າວຂີ້ໄຄເລີຍຄວາເອົາຄົກຫີນແກ່ວງຕິດເຂົ້າໃນຕາຂອງຜີຍັກ ເຮັດໃຫ້ມັນລົ້ມລົງກັບບ່ອນ. ທ້າວຂີ້ໄຄແລະທ້າວມີປະຕະໂລະ ພາກັນຊ່ອຍດຶງເອົາ

ອິສິຕະໂລະ ທລີ້ຢູ່ໃນຮູດັງຂອງພີຍັກນັ້ນອອກມາຢ່າງປອດໄພ ຈາກນັ້ນອາກະຕະໂລະ ທ້າວຂີ້ໄຄ ເລີຍໄດ້ແຕ່ງງານກັບລູກສາວ ເສດຖີຢ່າງມີຄວາມສຸກສຳລານດ້ວຍກັນ.



# ຜີກ່ອງກ່ອຍພີໄອ

ຟູກູເອຈິ ເປັນທ້ອງຖິ່ນຂອງຫົວເມືອງ ອາມາກຸສະ ຕັ້ງຢູ່ຕອນເໜືອຂອງແມ່ນ້ຳ ຊິໂມດະ. ນະແຫ່ງດັ່ງກ່າວ ມີປ່າໃຫຍ່ ດົງດິບໃນນັ້ນມີຕົ້ນກໍເຊິງເພິ່ນໃຊ້ໄວ້ເຮັດຄັນທອກຄັນທວນສະໄໝ ນະຄອນຫຼວງເອໂດ. ຕາມຮ່ອມຫ້ວຍພູເຂົາ ເຊິ່ງມີນ້ຳໂຕນຕາດໄຫຼແຮງວ່າກັນວ່າມີພວກຜີກ່ອງກ່ອຍ ຫຼາຍຂະໜາດເລີຍ. ລະດູຮ້ອນ ມາແລ້ວພວກມັນກໍ່ພາກັນລ່ອງລົງມາຕາມຫ້ວຍນ້ຳລຳທານ ແຕ່ພໍຮອດ ລະດູໜາວມາ ພວກເຂົາກໍກັບຂຶ້ນເມືອລີ້ຊ່ອນຢູ່ຮູຖ້ຳຜາຫີນທີ່ທຶບໜາ. ຜີກ່ອງກ່ອຍ ໝາແຕ່ໃສ ? ມີພົນເລົ່າສືບກັນມາວ່າ : ແຕ່ກີ້ແຕ່ກ່ອນຍັງມີຊາຍໜຸ່ມນັກຕັດໄມ້ສ້າງເຮືອນຜູ້ໜຶ່ງ ມີຄວາມກ້າກັ້ນ ໄປມາຢູ່ເລາະຕັດໄມ້ຢູ່ຕາມແຖບນັ້ນ. ມື້ໜຶ່ງຜູ້ເປັນນາຍຂອງເຂົາເລີຍ ຮ້ອງດ່າວ່າດັ່ງໃສ່ເຂົາ ຫາວ່າເຂົາເປັນຄົນຂີ້ຄ້ານ ບໍ່ເຮັດວຽກເຮັດການຊາຍໜຸ່ມຜູ້ນັ້ນຄຽດແຮງ ເລີຍກາຍເກີດເປັນ " ຜີກ່ອງກ່ອຍ "

ຕໍ່ຈາກນັ້ນມາ ມີພນາຜູ້ໜຶ່ງຊື່ວ່າສິນເບະ ອອກໄປຕັດຫຍ້າ ຢູ່ແຖບນັ້ນລາວຮູ້ຈັກດີວ່າແຖບນີ້ພີ່ກ່ອງກ່ອຍມັກຈົກກິນຄົນ ເຊິ່ງຕາຍໄປແລ້ວຫຼາຍຄົນເຖົ້າຈຶ່ງມີອຸບາຍເອົາໝາກຫົວແຂວນໃສ່ກົ້ນ. ບັນດາພີກ່ອງກ່ອຍ ( ເຊິ່ງດຽວນີ້ເກີດແມ່ແພ້ລູກອ່ອນຫຼາຍໂຕ ) ໄດ້ພາກັນມາຈອບຜົກເບິ່ງການເຄື່ອນໄຫວຂອງຊາວນາຜູ້ນັ້ນ ເຊິ່ງເຖົ້າ ກໍຍັງໄດ້ຍິນສຽງດັງຊັບໆແຊບໆກັນຢູ່. ເຖົ້າຄິດວ່າມັນຕ້ອງແມ່ນ ພີກ່ອງກ່ອຍ ແນ່ນອນ ຈຶ່ງເພີ່ມຄວາມລະມັດລະວັງໂຕໄວ້. ພນາຜູ້ນັ້ນ ຍັງທູ່ນທ່ຽວຢູ່ແລະກົ້ມຕັດຫຍ້າຢູ່ຕໍ່ໄປ ພ້ອມທັງເອົາມືວັນເບິ່ງໝາກຫົວຢູ່ກົ້ນໂຕເອງເຫັນວ່າຍັງຢູ່ໃນສະພາບດີເກືອກ່ອນຸ່ນອຽນໃຈ. ຄາວໜຶ່ງເລີຍມີຍິງສາວຜູ້ໜຶ່ງໂປ່ໂລ່ຂຶ້ນຈາກນ້ຳແລ້ວຍ່າງມາຫາພນາພ້ອມທັງເວົ້າວ່າ :

" ຂ້ອຍຕັດຫຍ້າຊ່ອຍເຈົ້າໄດ້ບໍ່ ? "

" ບໍ່ຈຳເປັນດອກ ! ມື້ອື່ນຄ່ອຍມາຊ່ອຍ ເພາະມື້ນີ້ຂ້ອຍຕ້ອງກັບເວັນ "

ແຕ່ນາງກໍຍັງອ້ອນນ່ຽວຢູ່.

" ຢ່າເຮັດແບບນັ້ນເທາະ ຕ້ອງຕອບສະໜອງຄວາມ ກວ້າງຂວາງຂອງຜູ້ອື່ນແດ່ ! "

ເວົ້າແລ້ວນາງເລີຍເຂົ້າມາໃນເດີ່ນຫຍ້າ ຈ້ອນແຂນເສື້ອຂຶ້ນ.

ຂະນະນັ້ນຊຸນເບະ ເອົາມີວົນໆເບິງກົ້ນຕົນເອງອີກຢ່າງບໍ່ຕັ້ງໃຈ ແຕ່ກໍ່ຍັງເຫັນເປັນປົກກະຕິ. ແລ້ວເອົາກໍ່ຕົກລົງໃຫ້ນາງຊ່ອຍ ໃນເງື່ອນໄຂທີ່ນາງຕ້ອງຢູ່ເບື້ອງໜ້າສະເໝີ.

" ບໍ່ໄດ້ ! ແມ່ຍິງໃຜຈະໄປກ່ອນ ຜິດທຳນຽມ ຖ້າຂືນ ເຮັດ ຂ້ອຍຕ້ອງຖືກລົງໂທດແນ່ນອນ "

" ຄັນຊັ້ນກໍ່ຕົກລົງ " ພໍ່ນາເຫັນດີ.

ເອົາກົ້ນລົງຕັດຫຍ້າຢູ່ ປະໃຫ້ນາງນັ້ນຢູ່ທາງຫຼັງ. ທັນໃດນັ້ນ ນາງເລີຍມັບມິບ ຫຍວານໃສ່ກົ້ນຂອງເອົາ ຄວາໄດ້ໝາກຫິງ ແລ້ວກໍ່ຣີບຫາຍຕົວດຳນ້ຳວັບໄປ ປະໃຫ້ພໍ່ນາຫົວຈັບທ້ອງຈັບໄສ້ ຍ້ອນກົນວິທີ ທີ່ປະສົບຄວາມສຳເລັດດີງາມຂອງຕົນ.



# ນິທານເຖົ້າຕາບອດ

ແຕ່ກ່ອນຍັງມີເສດຖີຜູ້ຫນຶ່ງ ເມື່ອອາຍຸຮອດ 60 ປີ ມາແລ້ວ ເລີຍເສັຽຕາ ພ້ອມທັງເສັຽເມັຽຮັກຂອງຕົນໄປພ້ອມ. ລູກສາວສອງຄົນກໍໄປຢູ່ນຳຜົວ ມີແຕ່ລູກຊາຍສາມຄົນຢູ່ນຳເຖົ້າ. ພວກລູກທັງສາມເປັນຄົນບໍ່ດີ ຄົນຊົ່ວ ຈຶ່ງຂົ່ມເຫັງຜູ້ເປັນພໍ່ ໂດຍຈຳໃຫ້ພໍ່ໄປເຝົ້າລານຕາກເຂົ້າ. ແຕ່ຍ້ອນຕາບໍ່ຮຸ່ງ ເຖົ້າກໍ່ເລີຍບໍ່ສາມາດສະກັດກັ້ນຝູງນົກຝູງກາໄດ້ເລີຍ. ໃນທີ່ສຸດເຂົ້າກໍ່ໝົດໄປແລະເຖົ້າກໍ່ຖືກຕົບຕີຈາກລູກຄົນຊົ່ວ. ເພື່ອກຳຈັດຜູ້ເປັນພໍ່ ພວກເຂົາເລີຍເອົາພໍ່ໄປໄວ້ແຄມ ຝັ່ງທະເລ ເວລານ້ຳກຳລັງມາກມາໂດຍອ້າງວ່າໃຫ້ພໍ່ເກັບຫອຍ. ແລ້ວພວກເຂົາທັງສາມກໍ່ເຂົ້າເຮືອກັບຄືນບ້ານ. ເມື່ອນ້ຳມາກມາ ຖ້ວມຜູ້ເປັນພໍ່ ພໍ່ກໍຮ້ອງຫາລູກ ແຕ່ກໍ່ບໍ່ເຫັນຈອຍ ແລ້ວເຖົ້າກໍ່ຖືກນ້ຳລືບ ຈົມນ້ຳໄປ.

ຕົກມື້ອື່ນມາ ລູກສາວທັງສອງກັບມາຢາມພໍ່ ບໍ່ເຫັນຜູ້ເປັນພໍ່ຢູ່ທີ່

ເຮືອນ ຈຶ່ງຖາມຊາວບ້ານວ່າພໍ່ໄປໃສ ຊາວບ້ານຈຶ່ງບອກວ່າ ວານນີ້ພວກອ້າຍທັງສາມເອົາເພິ່ນໄປເກັບຫອຍ ແຕ່ກໍ່ບໍ່ເຫັນເພິ່ນ ກັບມາເລີຍ. ຮູ້ດັ່ງນັ້ນພວກລູກສາວທັງສອງເລີຍຮີບແລ່ນໄປແຄມ ທະເລໂດຍຫວັງວ່າຈະໄດ້ສືບຂອງພໍ່. ທັງສອງຮ້ອງໄຫ້ ເອີ້ນຫາພໍ່ ໄປມາພ້ອມທັງຊອກຕາມຫຼີບຫີນ ແຕ່ກໍ່ບໍ່ເຫັນຊາກຂອງພໍ່ເລີຍ. ແຕ່ຄາວໜຶ່ງ ຢ່າງບໍ່ຄາດຝັນເລີຍ ຜູ້ເປັນພໍ່ເລີຍຢືນຂຶ້ນ ຢູ່ຕໍ່ໜ້າທາງ ໄປຂອງລູກທັງສອງ ເຮັດໃຫ້ຜູ້ເປັນລູກບໍ່ຢາກເຊື່ອຕາຕົນເອງ ພໍ່ເວົ້າສູ່ລູກທັງສອງຟັງວ່າ :

" ພວກອ້າຍທັງຫຼາຍຂອງພວກເຈົ້າ ໄດ້ເອົາພໍ່ມາປະໄວ້ກາງແປວນ້ຳ ເພື່ອໃຫ້ພໍ່ຕາຍ ແຕ່ແລ້ວປາສະໝ່ອຍແຂ້ ກໍ່ເອົາຫຼັງ ມາຊູເອົາພໍ່ຂຶ້ນມາໄວ້ແຄມຝັ່ງ. ລູກເຮີຍຈຶ່ງເອົາຂອງຕອບໃຫ້ເພິ່ນແດ່ໄວ

ລູກທັງສອງເອົາຂອງຂວັນສິ່ງໃຫ້ປາສະໝ່ອຍແຂ້ທັນທີ ແລ້ວທັນໃດນັ້ນ ຕາຂອງພໍ່ທີ່ບອດມາດົນນານເລີຍເຫັນແຈ້ງຄືນ.

ພວກລູກຊາຍທັງສາມ ເມື່ອແນ່ໃຈວ່າພໍ່ພວກຕົນຕາຍແລ້ວ ກໍ່ເລີຍປັນເຂົ້າຂອງກັນ. ຈາກນັ້ນກໍ່ພາກັນລົງທະເລໄປຫາປາ ຈັກໜ່ອຍ ຟ້າກໍ່ມືດຄຶ້ມເຂົ້າລົມພາຍຸພັດມາເຮັດໃຫ້ພວກເຂົາຈົມນ້ຳຕາຍສ່ວນຜູ້ເປັນພໍ່ກໍ່ກັບມາຢູ່ບ້ານເຮືອນຂອງຕົນຮ່ວມກັບລູກສາວຄືນຢ່າງມີຄວາມສຸກສຳລານ.

# ເຈົ້າອາຣັກສະໝຸດ

ແຕ່ກແຕ່ກ່ອນທີ່ເກາະໂອກິນາວາ ມີລົມພາຍຸພັດແຮງພວກຊາວຫາປາຂອງບ້ານອິໂຕມັນ ບໍ່ສາມາດລົງຫາປາໃນທະເລໄດ້. ເພື່ອເປັນການຂ້າເວລາອັນຕຶງຕ່ຽວນັ້ນໃຫ້ຜ່ານໄປ ພໍ່ບ້ານເຊິ່ງເປັນຄົນຮ້າຍຂາດແລະໂອຫັງ ໄດ້ເອີ້ນເອົາຊາວຫາປາມາໂຮມທີ່ບ້ານເພິ່ນແລ້ວຕັ້ງຄຳຖາມນຳແຕ່ລະຄົນວ່າ :

" ໃນໂລກນີ້ແມ່ນຫຍັງແຊບກວ່າເພິ່ນ ? "

" ແມ່ນປາ " ຜູ້ໜຶ່ງຕອບ.

" ແມ່ນອນ ຖືກຕອງ " ພໍ່ບ້ານເນັ້ນ.

" ແມ່ນໝູ " ອີກຜູ້ໜຶ່ງຕອບ.

" ດີຫຼາຍ " ພໍ່ບ້ານເນັ້ນ.

" ໝູປ່າ " ຜູ້ທີສາມຕອບ.

" ດືອກ " ພໍ່ບ້ານເນັ້ນ.

" ແມ່ນແກະ " ຜູ້ທີສີ່ຕອບ.

" ຄັກຫຼາຍ " ພໍ່ບ້ານເນັ້ນ.

" ແມ່ນເກືອ " ຜູ້ທີຫ້າເວົ້າ.

" ມຶງລ້ວນກັບກູວ່າ ? " ພໍ່ບ້ານຕວດຂຶ້ນ " ເອີ້ຖາມຶງເຫັນວ່າເກືອແຊບມຶງຈະໄດ້ກິນເກືອດ້ຽວນໂລດ "

ຄັນພໍ່ເວົ້າແລ້ວ ພໍ່ບ້ານຄົນໂຫດຫ້ຽມເລີຍສັ່ງໃຫ້ຄົນຄຸມນັກຫາປາຜູ້ນັ້ນເຂົ້າເຮືອ ແລ້ວໄລ່ໃຫ້ມັນອອກໄປສູ່ກາງທະເລທີ່ມີລົມ ພາຍຸແຮງແລະຄື້ນຟອງ. ເມື່ອສຳເລັດແລ້ວ ພໍ່ບ້ານກໍ່ຫົວກາກຂຶ້ນ ດ້ວຍຄວາມຊື່ນໃຈ ເພາະຮູ້ແລ້ວວ່າແນວໃດເຮືອຂອງມັນຕ້ອງໂຫຼ້ມ ແລະມັນເອງຕ້ອງຈົມນ້ຳຕາຍ.

ຈາກນັ້ນມາເຖິງນານພໍ່ສົມຄວນ ລົມກໍ່ບໍ່ເຊົາ ຝົນກໍ່ລິນ ແລະແດດກໍ່ບໍ່ອອກ ຊາວບ້ານບໍ່ມີເກືອກິນ ປູປານ້າກໍ່ບໍ່ມີເກືອເອືອບເຮັດໃຫ້ຈືດຈາງ ແລ້ວໃຜໆກໍ່ຄ່ອຍຮູ້ສຶກເຖິງຄຸນຄ່າຂອງເກືອ ໝໍ່ພໍ່ບ້ານກໍ່ຮູ້ເມື່ອເຖິງຄວາມຜິດຂອງຕົນ ຈຶ່ງສັ່ງໃຫ້ຄົນອອກນຳຊອກ ຫານັກຫາປາຜູ້ທີ່ເຂົາໄລ່ລົງທະເລກາງໂດຍຫວັງວ່າ ເຂົາອາດຈະຍັງບໍ່ຕາຍ ແລະຍັງຈະຄົງຢູ່ໃນເກາະດອນໃດໜຶ່ງ ເພາະເຂົາລອຍນ້ຳ

ເກ່ງ. ຝູງຊາວຫາປາພາກັນໄປຊອກຕາມເກາະດອນ ເລີຍເຫັນຄວັນໄຟພຸ່ງອອກມາຈາກຖ້ຳແຫ່ງໜຶ່ງ ຈຶ່ງເຂົ້າໄປຫາແລະກໍເຫັນຜູ້ທີ່ພວກຕົນຊອກ. ເຂົາເຈົ້າຈຳໃຫ້ລາວກັບຄືນນຳພວກຕົນ ແຕ່ລາວປະຕິເສດ ພໍ່ບ້ານຈຶ່ງຈຳໃຫ້ບັງຄັບໃຫ້ເຂົ້າເຮືອ. ແຕ່ເມື່ອເດີນທາງມາໃກ້ຈະຮອດບ້ານອິໂຕໝັນ ລາວເລີຍໂຕນລົງນ້ຳ ແລ້ວກໍຫາຍໄປ. ພໍ່ບ້ານຮູ້ສຶກລະອາຍໃຈຈຶ່ງເວົ້າອອກມາວ່າ :

" ອາດຈະແມ່ນເຈົ້າອາຮັກສະໝຸດ ພວກເຮົາຕ້ອງເຮັດ ບຸນສິນກິນທານໄປທາແຕ່ລະປີ ພາຍຫຼັງສິ້ນລະດູຝົນ " ເປັນອັນວ່າ ນັບຕັ້ງແຕ່ນັ້ນມາ ເມື່ອຮອດລະດູນັ້ນຂອງແຕ່ລະປີ ຊາວເກາະໂອກິນາວາ ພາກັນຈັດງານບຸນບູຊາເຈົ້າອາຮັກສະໝຸດ ພ້ອມທັງຈັດງານແຂ່ງຂັນຊ່ວງເຮືອນຳດວຍ.










手形を切りおわってほう丁を差しあげて合図する。



# ທ້າວເດນເບະກັບຜີສາງ

ແຕ່ດັ້ງແຕ່ເດີມ ຍັງມີທ້າວເກເລຄົນໜຶ່ງຊື່ວ່າເດັນເບະ ເຂົາເປັນຄົນຂີ້ດື້ບໍ່ຫາຣ່ອມ ມັກກິນເຫຼົ້າເມົາສຸລາ ຫຼິ້ນເບັ້ຽເຈັ້ຽໄພ້ ມັກສົກມັກຕີ ຄົນໃກ້ຄຽງໃຜໆກໍຊັງໜັງໜ້າມັນ. ມື້ນັ້ນແມ່ນມື້ກ່ອນ ວັນຂຶ້ນລະດູບານໃໝ່ ເຊິ່ງຕາມປະເພນີທີ່ເຄີຍມີມາ ຜູ້ຄົນພາກັນຫວ່ານກ້າໝາກຖົ່ວ ພ້ອມທັງຈົ່ມຄໍາອະທິຖານໄປພ້ອມວ່າ : "ຜີສາງນາງຮ້າຍໃຫ້ເວັ້ນຫຼີກເສັ້ຽໄກ ຄວາມສະຫວັດສະດີໃຫ້ປີ້ວມາພ້ອມ"

ແຕ່ທ້າວເດັນເບະ ຄົນຈັງໄຣ ພັດເວົ້າທາງປີ້ນ : " ຜີສາງນາງຮ້າຍໃຫ້ປີ້ວມາຄອບ ຄວາມສະຫວັດສະດີໃຫ້ຣີບໜີອອກໄປ "

ພໍເວົ້າສຸດຄວາມ ເຜດສອງໂຕກໍປະກົດຕົວອອກມາໃຫ້ ເຫັນ. ໂຕໜຶ່ງແມ່ນເຜດໜ້າດໍາ ແລະອີກໂຕໜຶ່ງແມ່ນເຜດໜ້າແດງ ທັງສອງເຜດເວົ້າວ່າ : " ຂອບໃຈພໍ່ເດັນເບະ ທີ່ໄດ້ເຊີນ ພວກເຮົາມາ ເຈົ້າເປັນຄົນດີຫຼາຍແລະກໍມີແຕ່ເຈົ້າຜູ້ດຽວໜັ້ນທີ່ເປັນຄົນດີກ່ວາ

ເພິ່ນ. ເອີ... ແລ້ວກໍ່ມີອັນຫຍັງອື່ນກິນແດ່ບໍ່ ? ຫາຂອງ ມາໃຫ້
ພວກລູກກິນແດ່ດູ ! " ເດັນເບະຕອບໄປວ່າ : " ດີຫຼາຍທີ່ໄດ້ມາ
ເຂົ້າສຸກເຮົາຢູ່ໃນປ່າກໍ່ມີ ເຊີນແຊບຕາມສຳບາຍ "

ເມື່ອພວກເຂົາຫຼ້ອມມາບໝົດທຸກເບື້ອງຂອງກິນແລ້ວ ກໍ່ຂໍກິນ
ເຫຼົ້ານຳ ເດັນເບະ ໄດ້ເອົາເຫຼົ້າສະລອນມາໃຫ້ເຂົາໄຫໜຶ່ງ ພວກ
ເຂົາກໍ່ພາກັນກິນຈົນເມົາໜ້າດຳໜ້າແດງ ແລ້ວພວກເຂົາກໍ່ສະເໜີ
ໃຫ້ເດັນເບະ ໄປຫຼິ້ນການພະນັນເພື່ອຈະໄດ້ເງິນຫຼວງຫຼາຍ ພີເຜດ
ໜ້າດຳ ໜ້າແດງ ພາກັນກັບເພດເປັນໝາກເລກ ເພື່ອໃຫ້ ເດັນ
ເບະ ນຳເອົາໄປຫຼິ້ນນຳວົງໃຫຍ່. ທ້າວເດັນເບະຫຼິ້ນແນວໃດ ກໍ່ໄດ້
ເງິນຄຳຫຼັ່ງໄຫຼມາຫາເຂົາ ຈົນພວກຂາຄູ່ທັງຫຼາຍ ເກີດຄວາມສົງໄສ
ພວກເຂົາເວົ້າວ່າ ໝາກເລກປອມ ແລ້ວພວກເຂົາກໍ່ພາກັນໄລ່ໄລ່ຕີ
ທ້າວເດັນເບະ ໝາກເລກຢູ່ໃນຖົງເສື່ອ ຂອງເຂົາ ອັນແມ່ນ
ເຜດສອງໂຕນັ້ນເອງ ກໍ່ບອກໃຫ້ເດັນເບະປ່ອຍພວກເຂົາອອກ ຈາກ
ຖົງເສື່ອ. ທັນທີນັ້ນພວກເຂົາກໍ່ມີຮູບຮ່າງເຜດ ປະກົດຕົວມົ້ງກົ້ງ ຢູ່ຕໍ່
ໜ້າຝູງຄົນ. ຝູງຄົນຜູ້ໄລ່ຕາມພາກັນຢ້ານກົວເລີຍແຕກກັບຄືນ. ທ້າວ
ເດັນເບະເລີຍກັບມາບ້ານໄດ້ເງິນໄດ້ຄຳຫຼວງຫຼາຍແລະຮັ່ງມີ. ພວກ
ພີເຜດມີຄວາມດີໃຈຫຼາຍ ຈຶ່ງອຳລາທ້າວເດັນເບະກັບເມືອງ ຂອງ
ເຂົາ ພ້ອມທັງບອກໃຫ້ເດັນເບະເຊີນພວກເຂົາມາອີກໃນປີໜ້າ ແຕ່

ພໍຮອດປີໃໝ່ເວລາດຽວກັນນີ້ ທ້າວເດັນເບະກໍໄປວ່ານໝາກຖົ່ວອີກ ແລະເວົ້າແບບເກົ່າ. ຄາວນີ້ພວກຜດບໍ່ປະກົດຕົວມາເລີຍເດັນເບະ ຮູ້ສຶກວິຕົກ. ຕໍ່ມາຈາກພະຍາດບາດເຍົາທີ່ຫຼີກລ້ຽງບໍ່ໄດ້ ເດັນເບະ ເລີຍສິ້ນຊີບໄປ. ເຂົາໄດ້ເດີນທາງໄປນຳຝູງພວກຄົນຕາຍ ທັງຫຼາຍ ຈົນໄປຮອດທາງແຍກແຫ່ງໜຶ່ງ. ທາງເສັ້ນໜຶ່ງນັ້ນມີຂໍ້ຄວາມທີ່ເຜິນ ຂຽນໄວ້ວ່າ " ທາງຂຶ້ນໄປສູ່ສະຫວັນ " ແລະອີກເສັ້ນໜຶ່ງຂຽນໄວ້ ວ່າ " ທາງຊ້າຍໄປສູ່ນະຮົກ " ນະແຫ່ງນັ້ນ ມີຍາຍເຖົ້າ ໂຊສູກະ ເຝົ້າ ຈັດແບ່ງຄົນໄປໃຫ້ຖືກຕາມບາບບຸນຄຸນໂທດທີ່ຜູ້ນັ້ນສ້າງມາເມື່ອ ຍາຍມາບເຫັນເດັນເບະຍ່າງມາ ຍາຍເລີຍຫ້ອງຂຶ້ນວ່າ : "ເອີ ! ໜັ້ນເນເດັນເບະ ! ເວລາເຈົ້າຢູ່ເມືອງຄົນ ເຈົ້າໄດ້ປະພຶດແຕ່ແນວ ຊົ່ວຮ້າຍທີ່ສຸດ. ດັ່ງນັ້ນເຊີນເຈົ້າໄປທາງຊ້າຍ " ເດັນເບະຈຳເປັນ ຕ້ອງໄດ້ປະຕິບັດຕາມ. ເຂົາໄດ້ໄປເຖິງໜ້ານະຮົກແລະໄດ້ ສະເໜີ ໂຕຕໍ່ຈາຍົມພິບານທີ່ຊື່ວ່າແອັມມາ. ເຜິນຜູ້ເລີຍຕັດສັ່ງໃຫ້ໂຍນເດັນ ເບະລົງໝໍ້ແປດທູໂລດ. ແຕ່ຂະນະນັ້ນຜດໜ້າດຳແລະ ຜດໜ້າ ແດງທີ່ໄປຢາມເຂົາໃນເມື່ອກ່ອນມາບເຫັນ ເລີຍຫ້ອງຂຶ້ນ :"ໂອ ! ເດັນເບະມາວ໋າ ?" ແລ້ວເຂົາເລີຍຊຶມໃສ່ຫູວ່າ " ເຈົ້າຈະໄດ້ຮັບ ການປະຕິບັດນະໂຍບາຍພິເສດອຸ່ນອ່ຽນເທາະ " ແອັມມາ ເຫັນວ່າ ຜດໜ້າດຳໜ້າແດງບໍ່ທັນປະຕິບັດຄຳສັ່ງເລີຍຮ້ອງໃສ່ : " ເປັນ

ຫຍັງບໍ່ໂຍນລົງ " ແຕ່ນ້ຳໃນໝໍ້ນະຣົກຍັງເປັນຢູ່ຄືເກົ່າ. ແອັມມາຈຶ່ງສັ່ງໃຫ້ເອົານ້ຳຊຶມເຊື່ອມຖອກໃສ່ສົບຂອງດັນເບະ ແຕ່ຜີຫນ້າດຳຫນ້າແດງທັງສອງພັດເອົາເຫຼົ້າສະເກມາໃສ່ໝໍ້ຫນັ້ນແທນນ້ຳຊຶມເຊື່ອມ ເມື່ອດັນເບະເມົາແມວໄປແດ່ ກໍ່ເວົ້າຂຶ້ນວ່າ :"ຈົ່ງແມ່ນຊາບເວີຍນ້ຳຊຶມເຊື່ອມນັ້ນມາ" ແອັມມາຮູ້ສຶກໂກດເຄືອງທີ່ສຸດ ເຂົາເລີຍຕັດສັ່ງວ່າ :" ໃຫ້ເຜດຫນ້າດຳກືນເມັ້ນລົງໄປ " ເຜດຫນ້າດຳກໍ ປະຕິບັດຕາມ ແຕ່ບໍ່ພໍຄາວເອັ້ນທ້ອງຂອງມັນພັດເຄັ່ງຂຶ້ນເຄັ່ງຂຶ້ນເພາະບັງທົວກຳລັງຈິແຕກອອກ. ແລວເຜດຫນ້າດຳເລີຍຂໍທູນລາຍງານ ຕໍ່ແອັມມາບອກວ່າ :" ຄົນຜູ້ນັ້ນ ບໍ່ສາມາດຈະປະພຶດຮ້າຍຕໍ່ມັນໄດ້ " ແອັມມາຈົ່ມໃຈ ຈຶ່ງຕັດສັ່ງໃຫ້ເອົາດັນເບະມາປ່ອຍໄວ້ໂລກ ດິນຄືນດັ່ງນີ້ເອງທີ່ດັນເບະ ໄດ້ມາເປັນຄົນສອງເທື່ອ.



# ຜີເສື້ອນ້ຳ

ຢູ່ແປພູເທິງບ້ານ ຢູ່ໂນມາຈິແລະໂອບາມາ ມີທະເລສາບໃຫຍ່ອ່າງຫນຶ່ງ ເຊິ່ງມີຜີເສື້ອນ້ຳ. ແຕ່ລະປີພະຍາຂອງພວກເຂົາ ໄດ້ສົ່ງກອງທະຫານມາກຸກວນປະຊາຊົນໝູ່ບ້ານດັ່ງກ່າວ ຂົ່ມຂືນແມ່ຍິງແລະຕັດລິງຄະຂອງຜູ້ຊາຍ. ພວກຊາວບ້ານທົນຕໍ່ຄວາມໂຫດຮ້າຍດັ່ງກ່າວບໍ່ໄດ້ ກໍ່ເລີຍພາກັນໄປໄຫວວອນຍາຄູ ເຊກິໂຣ ຢູ່ວັດມັນພິໂອຊິເຊິ່ງມີລິດເດດດ້ານເວດມົນກົນຄາຖາ. ເມື່ອຮູ້ຂ່າວດັ່ງກ່າວນັ້ນແລ້ວ ຍາທ່ານເລີຍເດີນທາງໄປສູ່ເຂດແດນທະເລສາບດັ່ງກ່າວ ແລ້ວກໍ ທຳການທ້າທາຍຫຼາຍປະການ ຈົນເຮັດໃຫ້ພະຍາຂອງຜີເສື້ອນ້ຳພວກນັ້ນອອກມາ. ການສູ້ຮົບກັນຂຶ້ນ ຢ່າງຟ້າຮ້ອງດິນໄຫວ ດ້ວຍລິດເດດແລະເວດມົນກົນຄາຖາລະຫວ່າງກັນ. ແຕ່ກໍ່ບໍ່ມີໃຜເອົາຊະນະໃຜໄດ້ເລີຍ. ເມື່ອເປັນດັ່ງນັ້ນ ຍາທ່ານເຊິ່ງຖືພຸດທະສາສະຫນາ ເລີຍໃຊ້ກົນອຸບາຍ ໃຊ້ຍຸດທະວິທີຕີຖອຍອອກຈາກເຂດແດນຂອງ ທະເລສາບ

ດັ່ງກ່າວ ເພາະຮູ້ວ່າຜີເສື້ອນ້ຳຈະຢູ່ໄດ້ກໍ່ຕໍ່ເມື່ອມີນໍ້າໜັ້ນ ການສູ້ຮົບກັນດຳເນີນໄປຢ່າງດຸເດືອດ ແລະຖອຍຍັບເຂົ້າໄປຫາໜ້ໍນະຣົກບອນທີ່ມີເກົ້າເຫຼັກນ້ຳຂາງຮອນໄໝ້ແລະນ້ຳມາດນ້ຳເຈັຽຟົດເດືອດຢູ່. ໄປຮອດແຫ່ງນັ້ນ ອາຍມ່າດເລີຍປົ້ວມາຕິດຕົວຂອງພະຍາຜີເສື້ອນ້ຳເຮັດໃຫ້ເປັນຫອນ ແລ້ວກໍໝົດກຳລັງວັງຊາ. ຍາຫານຈຶ່ງຕັດ ເອົາແຂນຂອງມັນ ກັບຄືນມາວັດນຳ.

ປະຈຸບັນແຂນດັ່ງກ່າວ ຍັງສະຖິດໃຫ້ຜູ້ຄົນເຫັນຢູ່ວັດ ມົນຫິໂອຊິເປັນສິ່ງປະດັບວັດນັ້ນໄປເລີຍ ແລະອີກແຂນໜຶ່ງ ຢູ່ແຫ່ງອື່ນ.



# ໄປພະຣົກ

ແຕ່ກີ້ແຕ່ກ່ອນ ປາງປະເທດຍີ່ປຸ່ນຍັງບໍ່ທັນຜະລິດລົດ ໂຕໂຍຕາ ເທື່ອ ຍັງມີນາຍໝໍຜູ້ໜຶ່ງ ນັກຕີລັງກາຜູ້ໜຶ່ງ ແລະນັກບວດ ກັນນຸສີ ( ສາສະໜາສິນໂຕະ ) ຜູ້ໜຶ່ງ.

ມື້ໜຶ່ງເພິ່ນໄດ້ຈັດງານບຸນຂຶ້ນໃຫ້ຊື່ວ່າ ບຸນກັນນົມ ອັນເປັນເຫດໃຫ້ທັງສາມຕາຍໄປຕາມໆກັນ. ນັກຕີລັງກາຕົກພຽງຕາຍ ທ່ານໝໍເປັນຫວັດຕາຍ ແລະຍາຄູແຄນເຂົ້າໜົມຕາຍ. ເມື່ອຕາຍ ໄປແລ້ວ ທັງສາມຕ້ອງຖືກໄປສອບສວນຄະດີນຳຈ່າຍົມພິບານທີ່ຊື່ວ່າແອັນມາ. ນັກຕີລັງກາປ້ອງກັນໂຕວ່າ : ເວລາຂ້ອຍຍັງຢູ່ດິນຂ້ອຍໄດ້ຫຼິ້ນກົນໃຫ້ຜູ້ຄົນຊົມເຂົາເຈົ້ານິຍົມຊົມຊອບຫຼາຍ ດັ່ງນັ້ນຂ້ອຍສົມຄວນ ຂຶ້ນສະຫວັນ.

ແອັນມາ : " ບໍ່ ! ການສະແດງລັງກາເຫາະຂອງມຶງ ຂີ້ຮ້າຍໂພດ. ເງິນທີ່ມຶງໄດ້ມາຈາກການສະແດງ ບໍ່ແມ່ນຂອງ ສູດຈະ

ຫຼຶດ. ນຶ່ງລົງໝໍ້ 8 ຫູດຽວນີ້ "

ທ່ານໝໍ : " ຂອຍໄດ້ປິ່ນປົວຄົນເຈັບ ສ້າງບຸນໄວ້ພາຍຂ້າງໜ້າ. ຂ້ອຍສົມໄປສະຫວັນ "

ແອັມມາ : " ບໍ່ ! ນຶ່ງກວດພະຍາດວາງຢາຜິດຫາແຕ່ເງິນ ເຫັນແກ່ໄດ້. ລົງໝໍ້ ! "

ຄູບາ : " ປູ່ເຫິງດິນ ອາຕະມາໄດ້ບຳເພັນກຸສົນສ້າງຄວາມດີ ຈຳສິນພາວັນນາ ໃຫ້ອາຕະມາໄດ້ໄປຕົກທີ່ດີເຖິງສຸກ ດັ່ງນັ້ນ ອາຕະມາຈຶ່ງຕ້ອງແລະຕ້ອງ ໄປສະຫວັນແນ່ນອນ "

ແອັມມາ : " ແມ່ນອີຫຼີບໍ່ ? ຕົວະເກ່ງອີຫຼີເນາະ ! ຄິດເຫັນບໍ່ວ່າ ເຈົ້າຫາແຕ່ວິທີຈະປອກລອກເອົາເງິນອອກຕົນເຮົ້ ? ໄປໄປລົງໝໍ້ ! "

ພາຍໃຕ້ການສັ່ງການຂອງແອັມມາ ທັງສາມຖືກແກ່ເອົາ ໄປສູ່ໝໍ້ 8 ຫູ. ພວກຍົມພິບານພາກັນສູມຟືນໃສ່ໄຟປານໃດນ້ຳກໍບໍ່ ຮ້ອນແລະບໍ່ຟົດ ເພາະພະຄູ ກັນບຸສີ ໄດ້ສູດກາຖາເສກໃຫ້ໄຟນັ້ນ ເພິກໄປ : " ເພິກໄປໄຟ " ພວກຍົມພິບານໄດ້ສູມຟືນໃສ່ຈົນໝົດ ແຕ່ໝໍ້ນະຣົກກໍບໍ່ຮ້ອນຈັກເທື່ອ. ພວກເຂົາໝົດປັນຍາ ຈຶ່ງຣີບແລ່ນເມືອລາຍງານແອັມມາຜູ້ເປັນຈ່າ ດ້ວຍຄວາມຮ້ອນຮົນ. ແອັມມາມີຄວາມໂມໂຫໂກດແຄ້ນເຫຼືອທີ່ສຸດຈຶ່ງຕັດສັ່ງໃຫ້ຍົມພິບານເອົາເຂົາ ທັງສາມ

ໄປໃສ່ພູຍົນງ້າວ. ເມື່ອໄປເຖິງພູດັ່ງກ່າວໜ້າງາວຊ້ອງຊ້ວພ້ງຢູ່ ນົກ ຕີ້ລັງກາລອຍພວກເຮົາກໍເລີຍ ຈັບບ່າຂອງເພື່ອນທັງສອງປີນຂຶ້ນ ປີ້ນໂຕຢູ່ກາງຫາວ ພ້ອມທັງຮ້ອງເພັງອອກມາ " ໂຢຣິ ໂຢຣິ ໂຢຣິ.. ຢາສະໂນສະ ໂກຣະສະ ໂກຣະສະ ໂກຣະສະໂນສະ " ແລ້ວບັນດາຫອກທັງຫຼາຍກໍຫຼຸບລົງໄປໃນດິນໝົດ. 3 ເສືອພາກັນຍ່າງເລາະຫຼິ້ນ ຊີມລົດຊາດຂອງສາຍລົມເຢັນຢ່າງສຳບາຍ. ພວກຍົມພິບານພາກັນອົກສັ່ນຂວັນຫາຍ ຣີບແລ່ນເມືອລາຍງານແອັມມາຜູ້ເປັນຈາ.

" ເອີ ! ເອົາພວກເຂົາມາໜີ້ ກູຈິຈົກແລະຄຽວກິນ ໃຫ້ພົ້ນແລ້ວເລື່ອງ "

ພວກເຂົາທັງສາມຖືກນຳມາຕໍ່ໜ້າແອັມມາ ທີ່ກຳລັງກ້າວໂກດຟຸ້ມໆຟ້າຍໆ. ແລ້ວກ່ອນທີ່ມັນຈະພ່າຂວານລົງໄປໃສ່ພວກເຂົາ ເຂົາທັງສາມກໍກະໂດດແລັດເຂົ້າໄປໃນປາກຂອງແອັມມາ. ພວກເຂົາພາກັນລົງໄປຮອດພຸງ. ແລ້ວຜູ້ເປັນທ້າວໜໍ່ກໍເລີຍໃຊ້ສີໄມ້ລາຍມື ແລະທຸກວິຊາທີ່ຕົນໄດ້ຮຽນມາເພື່ອບັງຄັບໃຫ້ໄສ້ພຸງຂອງແອັມມາ ເກີດປະຕິກິລິຍາ. ຕໍ່ມາບໍ່ດົນແອັມມາ ກໍຮູ້ສຶກປວດທ້ອງ ຢາກຈະໄປນອກ ພໍເຂົ້ານັ່ງກະໂຢ້ຕົວລົງ ສຽງສະບູກໍດັງລັ່ນສະນັ່ນເມືອງຂຶ້ນ ສຸເຂົາທັງສາມບິນໄປຕົກດິນແດນທີ່ປອດໄພ. ດ້ວຍເອງທີ່ຄົນທັງສາມ ໄດ້ພົ້ນຈາກເງື້ອມມືຂອງຈ່າຍົມພິບານໂຕໂຫດຮ້າຍ.

# ບ່ອນພໍ່ສັກສິດ

ແຕ່ກ່ອນຍັງມີສອງເຖົ້າຜົວເມັຍ ເດີນທາງໄປກິດທຸລະ ເມືອງອື່ນໄກ. ຜູ້ຜົວເປັນຜູ້ຊື່ອຖື ແລະເມັຍກໍ່ພໍເປັນທຳມະດາ ເມື່ອເດີນທາງໄປຜູ້ເປັນເມັຍປວດເບົາຈຶ່ງຍ່າງໄປທີ່ແຄມທາງ ຜູ້ຜົວ ເຫັນດັ່ງນັ້ນຈຶ່ງຮ້ອງໃສ່ວ່າ :

" ຈະເບົາຢູ່ຫັ້ນຫວາ ? ບໍ່ໄດ້ແມ່ນບ່ອນຕ້ອງຫ້າມ. ແມ່ນສະຖານທີ່ຂອງເຈົ້າອາຮັກ ສັນໂປໂກຈິນສະມາ "

ຜູ້ເປັນເມັຍອຶດໄວ້ ແຕ່ຄວາມປວດກໍ່ມາບີບຄັ້ນນາງຈຳໃຫ້ນາງໄປຖ່າຍເທອອກ. ນາງຈຶ່ງເລັ່ງໄປຫາອີກບ່ອນໜຶ່ງ.

" ນັ້ນກໍ່ບໍ່ໄດ້ເພາະເປັນບ່ອນສັກສິດຂອງເຈົ້າອາຮັກ 4 ລະດູ ໂກຊິນສາມະ "

" ຊັ້ນບ່ອນໃໜເດ ! ໄດ້ບໍ່ ? " ນາງຮູ້ສຶກອຶດບໍ່ໄດ້ ເພາະພົກຍ່ຽວຈະແຕກທັນທີ.

" ຫນ້ຳແຮ່ງຮ້າຍແລ້ວເພາະແມ່ນສະຖານທີ່ຂອງ ຊິວຍິນເຈົ້າອາຣັກແຕ່ງຫ້ວຍນ້ຳ "

ຜູ້ເປັນເມັຍຮ້ອງໄຫ້ຂຶ້ນເພາະປວດເບົາແຮງ. ຄາວຫນຶ່ງສາຍເກີບແຕະຂອງລາວພັດຫຼຸດ ວ່າຈະກົ້ມມັດຄື ພັດກົ້ມບໍ່ໄດ້ເພາະຈະບີບທ້ອງຕົນເອງແຮງຈະເຮັດໃຫ້ເບົາໄຫຼອອກມາຢ່າງບໍ່ຕ້ອງເບິ່ງ.

" ມາຊ່ວຍມັດເກີບນີ້ໃຫ້ແດ່ກູ ຂ້ອຍຈະເຊົາບໍ່ຍ່ຽວຊ້ຳດອກ " ເມຍເອີ້ນໃສ່ຜົວ.

ຂະນະທີ່ຜົວນັ່ງກະໂຢ້ລົງມັດເກີບຢູ່ ຜູ້ເປັນເມັຍກໍ່ຄ່ອຍໆ ໄຂປ່ອງບັງຊອນນ້ອຍຂອງຕົນອອກ ແລ້ວຮວາດເຕັມພຸ່ງຂອງມັນໃສ່ຫົວຂອງຜູ້ເປັນຜົວ ພ້ອມທັງເວົ້າວ່າ :

" ຢູ່ເຂດພູຜາປ່າໄພອັນນີ້ ທຸກໆແຫ່ງມີແຕ່ເຈົ້າອາຣັກ ມີແຕ່ບ່ອນສັກສິດ ທັງນັ້ນ ຍ່ຽວໃສ່ກໍ່ບໍ່ໄດ້. ມີແຕ່ບ່ອນດຽວຫັ້ນທີ່ບໍ່ມີເຈົ້າອາຣັກ ຄືຂົນຫົວຂອງເຈົ້ານີ້ແຫຼະ ພໍໃຈແລ້ວບໍ່ ?



# ເຮັດຄືອາຈານກໍແລ້ວກັນ

ຢູ່ທີ້ບ້ານຫ່າງໄກແຫ່ງໜຶ່ງທີ່ເທິງພູ ເພິ່ນໄດ້ຈັດພິທີ ແຕ່ງດອງຂັ້ນທີ່ເຮືອນຂອງພໍ່ບ້ານ. ຜູ້ຄົນພາຍໃນບ້ານທີ່ຖືກເຊີນເຂົ້າຮ່ວມ ນຳພາອາຫານງານລ້ຽງໃຫຍ່ໂຕ ເຊິ່ງບໍ່ເຄີຍໄດ້ພົບຈັກເທື່ອເລີຍ ໃນຊີວິດ ເລີຍຖາມພະອາຈານວ່າ : " ກິນເຂົ້າໃນງານລ້ຽງ ແບບນີ້ຕ້ອງເຮັດແນວໃດ ? " ພະອາຈານເລີຍຕອບວ່າ : " ໃຫ້ເຮັດຕາມພະອາຈານກໍ່ແລ້ວກັນ "

ໃນພາເຂົ້າມີຂອງກິນມາກມາຍຫຼາຍຊະນິດ ພະອາຈານເປັນຜູ້ລິ້ມກ່ອນ. ທຳອິດເພິ່ນກໍເອົາໄມ້ທູ່ຄີບເອົາມັນດ້າງມາກ່ອນ. ມັນດ້າງມັນກົມຫົວໃຫຍ່ ເວລາຄີບມາເລີຍຫຼຸດອອກຈາກໄມ້ທູ່ ແລ້ວກິ້ງໄປຕາມກ້ອງໂຕະ. ພະອາຈານເລີຍຄວາຄີເອົາມືງົມຈັບເອົາມາກັດ

ກິນ. ຝູງຄົນທັງຫຼາຍທີ່ຄອຍປະຕິບັດຕາມອາຈານກໍເລີຍພາກັນ ຄືບ ເອົາມັນດາວມາປະໃຫ້ມັນຕົກລົງຕາມກອງໂຕະແລ້ວກໍພາກັນງົມເອົາ ມາກັດກິນເປັນຂະບວນ. ພະອາຈານຫູບຈອກເຫຼົ້າສະເກສະໂຫຼຈອກ ໜຶ່ງເຮັດໃຫ້ພະອາຈານໄອພົ້ງໆອອກມາ ຜູ້ຄົນກໍປະຕິບັດຕາມໂດຍ ໂດຍພາກັນຫູບເຫຼົ້າແລ້ວກໍໄອຟົດສະໜັ່ນຫວັ່ນໄຫວ. ຂະນະນັ້ນ ພະ ອາຈານຢາກບອກໃຫ້ພວກເຂົາເຊົາວ່າຢ່າເຮັດຕາມຄວາມຜິດ ຂອງ ພະອົງໂດຍປິດຕາໃສ່ແລ້ວເອົາແຂນສອກຄະຜູ້ໜຶ່ງທາງຂ້າງ. ຝູງ ຄົນເຫັນກໍພາກັນປິດຕາແລະເອົາສອກຄະກັນອີກກະທີ.

( ນິທານລາວເຮົາແບບໃໝ່ຫຼາຍ ).



# ນິທານໝັດແລະເມັ້ນ

ແຕ່ກີ້ແຕ່ກ່ອນ ຢູ່ຮາວໄມ້ໃນຫ້ອງມວຍ (ໂມຍ) ກາຣາເຕແຫ່ງໜຶ່ງ ຍັງມີໝັດແລະເມັນສອງໂຕເປັນເພື່ອນກັນ. ມື້ໜຶ່ງພວກເຂົາທັງສອງເລີຍ ໄດ້ຍິນຄຳສັ່ງສອນຂອງອາຈານ ກາຣາເຕ ທີ່ມີຕໍ່ລູກສິດຂອງຕົນວ່າ :

" ຢ່າກິນເຫຼົ້າເບີ ! ຢ່າລືມວ່າກາຣາເຕນັ້ນ ແມ່ນ ສິລະປະມວຍປ້ອງກັນໂຕ ບໍ່ແມ່ນໂຈມຕີ "

ທັງສອງຢູ່ນຳກັນມາຈົນຮອດມື້ໜຶ່ງອັນເປັນວັນຂຶ້ນປີໃໝ່ ຈຶ່ງຕົກລົງພາກັນໄປໄຫວ້ພະໄຫວ້ເຈົ້າທີ່ວັດ. ອ້າຍເຈົ້າໝັດ ພູມໃຈນຳບາດເຕັ້ນໄກຂອງຕົນ ເລີຍອວດເພື່ອນຜູ້ເປັນເມັນວ່າ :

" ຈ໋າ ! ຊ້າງປານນັ້ນ ກູຕ້ອງໄປຮອດກ່ອນມຶງຄັກ "

ແຕ່ອ້າຍເຈົ້າເມັນ ເຖິງວ່າຈະຍ່າງຊ້າປານໃດກໍຕາມ ແຕ່ກໍໄດ້ ມາຮອດວັດກ່ອນໝັດ ອັນເຮັດໃຫ້ອ້າຍເຈົ້າໝັດບໍ່ພໍໃຈ. ເຂົາໄດ້ ໄປກິນເຫຼົ້າເມົາມາ ແລ້ວກໍເຂົ້າໂຈມຕີເມັນ. ຜູ້ເປັນເມັນ ໂດຍໃຊ້ຍຸດທະວິທີຂອງກາຣາເຕທີ່ເຂົາໄດ້ຍິນມາ ເຊັ່ນ ພະຍາຍາມປ້ອງກັນໂຕແລະໃຈເຢັນຮອບຄອບ ກໍເລີຍສາມາດສູ້ກັບໝັດໄດ້. ພາຍຫຼັງການສູ້ສີ້ນກັນດົນພໍສົມຄວນ ທັງສອງເລີຍອ່ອນເພຍ ໜ້າເນົ່າ ໜ້ານູມ ເລືນຕັງແຕ່ນໝາ ໝັດຈົ່ງມີຫຼັງກິ່ງ ສ່ວນເມັນນັ້ນເລີຍໂຕແພບເຂົ້າ ພ້ອມທັງມີຮອຍຊ້ຳຕາມຕົນໂຕຍ້ອນຖືກບາດທຳຂອງໝັດ.





湯女は指先の力であかをよじりとった。

大阪の風呂屋のざくろ口

京都、大阪では風呂場、江戸では、湯屋といった。京都の風呂は湯槽が大小二つあり、はじめ大槽に入り、垢をとりあがり湯の小槽に入浴する。京都、大阪は天保のおふれまで男女混浴で、江戸は寛政の改正によって男女別々にした。



江戸中の湯屋は約六百軒。湯をたくのは午前六時から午後六時まで、だが防火のため湯を落さないから、絶間なく営業できた。京都大阪の営業は昼から湯をたき、日暮にはしめた。

# ຫ້າບອດກິນເຂົ້າໜົມ

ແຕ່ປາງກ່ອນຍັງມີຄົນຕາບອດ 5 ຄົນ ເດີນທາງໄປນຳກັນ , ເວລານັ້ນມີຊາຍຜູ້ສະຫຼາດຜູ້ໜຶ່ງເດີນທາງມາ ຄົນຕາບອດ ທັງ 5 ເລີຍຖາມເຖິງບ່ອນພັກເຊົາຢູ່ໃນບ້ານທີ່ເຂົາກຳລັງມຸ່ງໜ້າໄປສູ່.

ຊາຍຜູ້ສະຫຼາດບອກວ່າ :

" ໄປເຮືອນຂ້ອຍກໍໄດ້ " ແຕ່ແທນທີ່ເຂົາຈະບອກຊື່ຕົນ ເອງ ດີໆ ພັດບອກເປັນປິດສະໜາ. ແຕ່ຄົນຕາບອດທັງ 5 ກໍແກ້ ບັນຫາ ຕົກ ແລະໄປເຖິງເຮືອນຂອງຄົນສະຫຼາດຜູ້ນັ້ນໄດ້ອີຫຼີ. ຄົນສະຫຼາດຜູ້ ນັ້ນ ຈັດການແຍກຄົນຕາບອດອອກໄປຢູ່ຄົນລະບ່ອນ ແລ້ວ ເອົາເຂົ້າ ໜົມໃຫ້ຜູ້ທີໜຶ່ງກິນ ກ້ອນໜຶ່ງ ຜູ້ທີສອງ ສອງກ້ອນ ຜູ້ທີສາມ ສາມ ກ້ອນ ຜູ້ທີສີ່ ສີ່ກ້ອນ ແລະຜູ້ທີຫ້າ ຫ້າກ້ອນ. ແຕ່ພວກຕາບອດ ກໍໃຊ້ ພາສາປິດສະໜາຂອງພວກເຂົາຕິດຕໍ່ກັນ ຈົນຮູ້ໄດ້ຢ່າງແມ່ນຢຳ ວ່າ ໃຜໄດ້ເຂົ້າໜົມຈັກກ້ອນ ອັນເຮັດໃຫ້ຊາຍສະຫຼາດຜູ້ນັ້ນຕົກ ສະເທືງ ໄປໝົດ.

# ນົກຈິກນ້ອຍ ແລະ ແຫຼວ

ແຕ່ກີ້ແຕ່ກ່ອນບັນດາເຈົ້າພະຍາແຫຼວພ້ອມດ້ວຍບໍລິວານທັງຫຼາຍເກີດເປັນວັນພົບເປັນມື້ແຕ່ພາກັນສາຊຸມ ກິນເຫຼົ້າ ຮ້ອງເພງ ແລະ ຟ້ອນກັນຢູ່ຢ່າງສະໜຸກສະໜານ. ເມື່ອເຫັນດັ່ງນັ້ນ ນົກຈິກນ້ອຍໂຕໜຶ່ງ ເລີຍມີຄວາມປາຖະໜາຢາກຈະເຂົ້າເປັນບໍລິວານຂອງ ແຫຼວນຳດ້ວຍ ຈຶ່ງໄດ້ເຂົ້າໄປອ້ອນວອນພະຍາແຫຼວວ່າ :

" ຂະນ້ອຍຢາກຈະຂໍເຂົ້າເປັນບໍລິວານຂອງທ່ານ ທ່ານຈະພໍຮັບເອົາຂະນ້ອຍໄດ້ບໍ ? "

" ໄດ້ຢູ່ ! ແຕ່ໃນເງື່ອນໄຂທີ່ວ່າ ເຈົ້າສາມາດຂ້າ ໝູປ່າຕາຍໄດ້ " ພະຍາແຫຼວຕອບ.

ເມື່ອນົກຈິກຊາບດັ່ງນັ້ນ ມັນກໍເລີຍບິນໄປຫາໝູປ່າທ່ອກ ໂຕ

ໃຫຍ່ທີ່ມີພະລັງມະຫາສານ. ມັນບິນເຂົ້າໄປຈັບຢູ່ໃນຫູຂອງໝູ ແລ້ວ ກໍທຳການສັບຕອດຢ່າງບໍ່ຢຸດບໍ່ເຊົາ. ຝ່າຍໝູມີຄວາມເຈັບປວດ ຈຶ່ງ ກະວົນກະວາຍແລະໂມໂຫຈົນເປັນບ້າເປັນເມົາ. ມັນກະໂດດ ໂລດ ເຕັ້ນ ສັກຂະໂຍງໂຄງເຄງ ຈົນໃນທີ່ສຸດ ເລີຍໄປຕຳເອົາ ໂງ່ນຫີນ ຫົວແຕກຕາຍ. ແລ້ວນົກຈິກຈຶ່ງກັບໄປລາຍງານຜົນງານຂອງຕົນ ຕໍ່ ແຫຼວ ແຫຼວເຫັນຄວາມດີຄວາມຊອບຈຶ່ງຕົກລົງຮັບເອົາເປັນ ບໍລິວານ ຂອງຕົນແຕ່ບັດນັ້ນມາ.

------------



# ການແຂ່ງຂັນ

ແຕ່ກີ້ແຕ່ກ່ອນ ຍັງມີໝາໄນໂຕໜຶ່ງຖືວ່າເປັນເຈົ້າແຫ່ງ ໝາໄນທັງຫຼາຍໃນປະເທດຍີ່ປຸ່ນ ໄດ້ຮັບໜັງສືເຊີນຈາກເມືອງຈີນວ່າ : " ໃຫ້ມາຮ່ວມການແຂ່ງຂັນບັ້ນໃຫຍ່ທີ່ສຸດຂອງໂລກ " ພະຍາໝາໄນໂຕນັ້ນຮູ້ດີວ່າທີ່ປະເທດຈີນມີພະຍາເສືອໂຕໜຶ່ງ ເຊິ່ງສາມາດແລ່ນໄດ້ເຖິງພັນລີ້ (ພັນໂຍດ) ຢ່າງບໍ່ຮູ້ອິດຮູ້ເໝື່ອຍ. ນອກນັ້ນຍັງມີສິ່ງໂຕໜຶ່ງເຊິ່ງ " ແຜດສຽງອອກເທື່ອດຽວ ກໍ່ສາມາດເຮັດໃຫ້ ຫົວຂອງຈຳພວກສັດທັງຫຼາຍ ຂາດອອກຈາກບ່າໄດ້. ໝາໄນ ມີຄວາມອຸກໃຈຫຼາຍ ບໍ່ຮູ້ວ່າຈະແກ້ໄນ້ໂນ໊ຍັນໄດ້ແນວໃດ. ມື້ໜຶ່ງ ພະຍາເຫງັນ ເລີຍມາຢາມ ເມື່ອເຫັນອາການຂອງ ໝາໄນ ໂສກເສົ້າເຫງົາໃຈ ເລີຍຖາມຫາຕົ້ນສາຍປາຍເຫດ. ໝາໄນໄດ້ເວົ້າ ເມື່ອໃນຈົດໝາຍນັ້ນສູ່ຟັງໝົດທຸກປະການ ເຊິ່ງເປັນຕົ້ນເຫດຂອງຄວາມຫ່ວງໃຍຂອງເຂົາ.

" ຕ້ອງຮຽກປະຊຸມດ່ວນດຽວນີ້ ! " ເຫງັນມີຄວາມເຫັນ . ໃນທີ່ສຸດບັນດາແຮດສູ້ນໍງາ ລາຊະສີ ໝູປ່າ ຊ້າງຮ້າຍ ສິງເສືອ ກວາງຟານ ງູວັຽວຂັຽວກະປອມ ສາລະພັດສັດທີ່ມີຢູ່ໃນດິນແດນແຫ່ງເກາະຍີ່ປຸ່ນ ກໍ່ມາເຕົ້າໂຮມກັນເພື່ອປຶກສາຫາລື ເລືອກເອົາ ນັກແຂ່ງຂັນທີ່ເກັ່ງທີ່ສຸດໄປຮ່ວມການແຂ່ງຂັນຄັ້ງນີ້. ໃນກອງປະຊຸມ ດັ່ງກ່າວ ເຫງັນເອງໄດ້ອອກສະເໜີໂຕ ເປັນຜູ້ອາສາຈະໄປ ຊິງໄຊຈາກການແຂ່ງຂັນນັ້ນໃຫ້ໄດ້ ເພາະວ່າກຳໄດລະແຄະລະໄຄແລະກົນລະຍຸດດີກວ່າເພິ່ນ. ເຫງັນຮູ້ດີວ່າສິງນັ້ນໜັກ 250 ຊັ່ງ ມີຄູກດົກໜາ ດວງຕາເປັນໄຟ ເຊິ່ງພຽງແຕ່ມັນງວາກໜ້າມາເບິ່ງຊື່ງ ກໍເຮັດໃຫ້ໃຈຂາດຕາຍ. ສ່ວນເສືອນັ້ນມີໂຕຍາວ 12 ສອກ ຄວາມແຮງຂອງມັນມະຫຶມາ ເຊິ່ງຖ້າກະໂປ້ບາດໜຶ່ງກໍ່ວິດແສງຫູ ແສງຕາຂອງຜູ້ຄົນ.

ໃນທີ່ສຸດກອງປະຊຸມກໍໄດ້ຮັບຮອງເອົາຢ່າງເປັນເອກະສັນໂດຍຕົກລົງໃຫ້ເຫງັນຕາງໜ້າໄປຮ່ວມການແຂ່ງຂັນຄັ້ງນີ້. ເມື່ອເດີນທາງໄປຮອດເມືອງຈີນແລ້ວ ເຫງັນເລີຍສະເໜີໃຫ້ຕໍ່ສູ້ກັນແບບສອງຕໍ່ສອງແລະໂຕຕໍ່ໂຕໂລດ ເຊິ່ງທາງຄະນະກຳມະການຕັດສິນກໍເຫັນດີເຫັນພ້ອມນຳດ້ວຍ. ທຳອິດແມ່ນເສືອແລະເຫງັນແລ່ນຊ່ວງກັນ. ທັງສອງພາກັນໄປຕັ້ງຫຼັກ. ເຫງັນຕັ້ງຢູ່ທາງຫຼັງເສືອຈັກໜ່ອຍ. ພໍມີສັນ

ຍານອອກແລ່ນ ເຫງັນເລີຍກະໂດດຊຸບເອົາກົກຫາງເສືອໄວ້ ໂດຍທີ່ເສືອບໍ່ທັນຮູ້ໂຕ. ເສືອພາເຫງັນແລ່ນໄປຈົນອິດອ່ອນຄິດວ່າເຫງັນຄົງຈະຕົກເຮື່ຽຢູ່ໄກ ຈຶ່ງເອີ້ນໃສ່ເຫງັນ.

" ເຫງັນ ! ມຶງຢູ່ໃສ ? " ເສືອຖາມ. ຝ່າຍເຫງັນ ຕອບວ່າ : " ກູຢູ່ຊິດມຶງຫນ້ ແລ່ນໄວ ! ມຶງຍັງບໍ່ຊະນະກູເທື່ອ "

ເສືອຮ້ອນໃຈທີ່ເຫັນເຫງັນທັນໂຕ ຈຶ່ງຈ້າວຫອບແລ່ນອີກຢ່າງ ພະລັນທັນດ່ວນ ຈົນກະທັ້ງໂຮຍແຮງແລ່ນບໍ່ໄດ້. ໃນທີ່ສຸດເຫງັນກໍເລີຍ ຊະນະ.

ເມື່ອຊະນະເສືອແລ້ວ ກໍຍັງແຕ່ສິງຫນຶ່ງທີ່ຕ້ອງເອົາຊະນະ ໃຫ້ໄດ້ ສິງເຂົ້າມາຫາເຫງັນ ຮິບໂຮມກຳລັງ ຄິງຕົບເອົາ ອ້າປາກຂຶ້ນແລ້ວກໍແຜດສຽງຮ້ອງອັນບໍ່ມີໃຜທົນຕໍ່ໄດ້ນັ້ນອອກມາ. ແຕ່ເຫງັນ ຍັງຫົວເສີຍ.

" ແຮງອີກ ! ຍັງຄ່ອຍໂພດບໍ່ເປັນຢາຫຍັງ "

ສິງຮິບໂຮມກຳລັງອີກ ຮ້ອງອີກ ແລະຮ້ອງອີກ ຈົນໃນທີ່ສຸດຄໍກໍ ແຕກຕາຍ. ກະຕ່າຍຍື່ນຫົວອອກມາ ແລ້ວກໍຈົກເອົາກ້ອນດິນດາກທີ່ມັນອັດຫູຢູ່ນັ້ນອອກມາ.

# ເທວັນນອງອາລະວາດ

ແຕ່ກີ້ແຕ່ກ່ອນ ຢູ່ສິບສອງດົງດິບເຂດພູດອຍ ຍັງມີ ນາງເທວັນນ້ອງໂຕໜຶ່ງ ມັກອອກມາອາລະວາດມວນປະຊາຊົນຊາວບ້ານ ແຖບນັ້ນ. ມັນທັງຫຼອກທັງເລັ້ມ ລັກເອົາສິ່ງຂອງແລະຊຸກປະຊາຊົນຕົກຕາຟິ່ງ ຈົນເຮັດໃຫ້ບໍ່ມີໃຜກ້າອອກມາໃນຍາມຄ່ຳຄືນ. ພວກທີ່ຢູ່ຮົ້ວ ຢູ່ສວນແລະໄຮ່ນາຕາກ້າ ກໍ່ພາກັນເລີກມາບ້ານແຕ່ວັນ ເພາະ ຢ້ານມັນຈະມາກຸກວນ. ນັ້ນໜຶ່ງ ສຶບສູກະຢູ ອົດບໍ່ລົນທົນບໍ່ໄດ້ ເລີຍຕັດສິນໃຈຈິໄປປາບເທວັນໂຕນັ້ນໃຫ້ໝົດເລື້ອງໄປ.

ແລງນັ້ນຝົນຕົກຍິບແຍັບໆ ເຂົາໄດ້ພ່າຍເອົາງ້າວແລະ ຂອງທີ່ຈຳເປັນເຂົ້າໄປໃນປ່າ 12 ດົງດິບດັ່ງກ່າວ. ເຂົານັ່ງລົງທີ່ ເຫງົ້າໄມ້ເຫງົ້າໜຶ່ງເພື່ອຄອງຫາເທວັນອອກມາ.

" ເອີ ! ເຊີນມຶງມາປະເຊີນໜ້າກັບກູໂລດ ຖ້າມຶງເກ່ງ ຫຼືວ່າມຶງຢ້ານກູບໍ ? "

ຄ້ອນເວົ້າແລ້ວ ເຂົາເລີຍສັງເກດເຫັນມີເຫງັນໃຫຍ່ ໂຕໜຶ່ງ ລົງມາແຕ່ພູການະກູຣະ. ອາຍເກ້ງຂອງພວກເຮົາພະຍາຍາມ ສົ່ງຊອນແລະຕິດຕາມ. ຄາວໜຶ່ງເຫງັນແມ່ໂຕນັ້ນ ກໍ່ປ່ຽນໂສມ ເປັນນາງສາວຜູ້ໜຶ່ງ. ມັນເອົາເຝືອງພາດໃສ່ຫຼັງເລີຍເກີດເປັນລູກນ້ອຍໄຫ້ແງວໆ...ຢູ່. ຜູ້ເປັນແມ່ອຸ້ມເອົາລູກ ພອມທັງຈອບບອອຍ ແລ້ວກໍ່ຍ່າງອອກຈາກປ່າ ສິນສຸເກະຢູ່ ຄ່ອຍຕິດຕາມໄປຕາມຫຼັງ ເຫັນນາງແມ່ລູກອ່ອນນັ້ນເຂົ້າໄປໃນເຮືອນຫຼັງໜຶ່ງ. ທ້າວສິນສຸເກະຢູ່ຣີບແລ່ນເຂົ້າໄປ ແລ້ວກໍ່ເວົ້ານຳຜູ້ເປັນເຈົ້າຂອງເຮືອນວ່າ : " ອັນນີ້ບໍ່ແມ່ນລູກເຈົ້າ ແມ່ນເຫງັນ ຕ້ອງເຜົາມັນຖິ້ມ ເວລາເຜົາ ເຈົ້າ ຈະເຫັນຫາງຂອງມັນພົ້ນອອກມາດອກ " ແມ່ເຖົ້າໃນເຮືອນຮ້ອງໄຫ້ຂຶ້ນບອກວ່າແມ່ນລູກຂອງລາວແທ້ ເຂົາອຸ້ມລູກຢູ່ໃນເຮືອນໂດຍ ບໍ່ໄດ້ອອກໄປໃສເລີຍ. ສິນສຸເກະຢູ່ຖຽງ ບອກວ່າເຫັນມັນມາແຕ່ປ່າແທ້ແລະແມ່ນເຫງັນກັບເພດເປັນແທ້. ເວົ້າແລ້ວສິນສຸເກະຢູ່ ກໍ່ດັງໄຟກອງບັກໃຫຍ່ຂຶ້ນ ແລ້ວກໍ່ຫອບສອງແມ່ລູກຖິ້ມໃສ່ໄຟ ເມື່ອໄຟໄໝ້ໄປແລ້ວເລີຍບໍ່ເຫັນຫາງເຫງັນຊູອອກມາເລີຍ. ພໍ່ແມ່ຂອງຜູ້ຕາຍ ເຫຼືອໃຈ ຈຶ່ງຮີບໄປແຈ້ງທ້າວຂຸນ. ທ້າວຂຸນໄດ້ສັ່ງຄົນມາຈັບເອົາ ສິນສຸເກະຢູ່ ໄປໃສ່ຄຸກ ແຕ່ພໍດີໄປຮອດກາງທາງພັດມີພະອາຈານອົງໜຶ່ງມາພໍ້ ພະອາຈານເວົ້າກັບຕຳຫຼວດວ່າ " ສິນສຸເກະຢູ່ ບໍ່ເຄີຍ ທຳ

ຄວາມຊົ່ວຈັກເທື່ອ ແລະຈຸດປະສົງຂອງການກະທຳຂອງເຂົາເທື່ອນີ້ ເພື່ອຄວາມດີ. ດັ່ງນັ້ນ ພະອາຈານຈຶ່ງຂໍເອົາໄປເປັນສິດໂຍມ ເພື່ອ ລ້າງບາບຂອງເຂົາເອງ "

ພະອາຈານໄດ້ນຳເອົາສິນສຸກະຍຸ ໄປຢູ່ນຳ. ເພິ່ນໄດ້ແຖຫົວ ໃຫ້ເປັນວຽກທຳອິດ ແຕ່ແຖຮັດແນວໃດຕ້ອງໃຫ້ມີເລືອດອາບ ທຸກ ເສັ້ນຜົມ ແລ້ວກໍ່ບອກສິນສຸກະຍຸ ໄປອາບນ້ຳລ້າງຊ່ວຍ. ຂະນະນັ້ນ ມີປະຊາຊົນຍ່າງກາຍໄປແຖວນັ້ນ ເຫັນມີດແຖອາບເລືອດ ຖິ້ມຢູ່ແຈ ທາງພ້ອມດ້ວຍຜົມທີ່ເຕັມໄປດ້ວຍເລືອດຈຶ່ງຮ້ອງໃສ່ ສິນສຸກະຍຸ ວ່າ

" ສິນສຸກະຍຸ ນຶງຍັງຫຼົງກົນຂອງເຫວັນນິອກນໍ "

ສິນສຸກະຍຸ ຮູ້ໂຕທັນທີ ເລີຍຮີບໜີອອກຈາກວັດທີ່ນັ້ນ ເຊິ່ງຄວາມ ຈິງແລ້ວແມ່ນແຕ່ສິ່ງລວງຕາທັງນັ້ນ. ເລື່ອງລາວຂອງມັນດັງໄປເຖິງ ພະອາຈານໃຫຍ່ (ພະອາຈານແທ້) ຂອງບ້ານ ເພິ່ນໄດ້ຕັດສັ່ງ ໃຫ້ ສິດໂຍມດັງໄຟຕົ້ມນ້ຳຂຶ້ນທັນທີ ແລ້ວກໍ່ອອກໄປໃນປ່າ 12 ດົງດິບ. ພໍ ນັ່ງເຫງົາໄມ້ບໍ່ພໍບຶດ ຍ່າທານເລີຍເຫັນເຫວັນຍ່າງມາ ແລ້ວ ກໍ່ປ່ຽນ ໂສມເປັນຍິງສາວຄົນງາມ ເອົາເຟືອງພາດໃສ່ຫຼັງເປັນລູກນ້ອຍນາງ ຜູ້ເປັນແມ່ອຸ້ມເອົາ ພ້ອມທັງເວົ້າວ່າ : " ຢ່າໄຫ້ລູກ. ແມ່ຢາກ ຖິ້ມລູກນັ້ນບໍ່ດີ ແຕ່ມັນຈຳເປັນ " ເວົ້າແລ້ວນາງເລີຍເອົາລູກ ໄປ ໂຍນຖິ້ມລົງເຫວເລິກ. ພະອາຈານໃຫຍ່ຖາມຕົນເອງວ່າ " ອັນໃດ

ແມ່ນເທວັນໂຕແທ້ ? " ເພິ່ນໄດ້ລົງໄປເອົາລູກນ້ອຍນັ້ນມາ ທົດ ແລ້ວກໍເອົາຈຸ່ມລົງໝໍ້ນ້ຳຮ້ອນ. ພໍຈຸ່ມລົງແຂນນ້ອຍດັ່ງກ່າວ ເລີຍກາຍເກີດເປັນເທວັນອິດຖີ ຮ້ອງປຽກ...ປຽກ... ແລ້ວກໍຕາຍໄປ.



# ໄລ່ໜີຈາກນະຣົກ

ແຕ່ກ່ອນ ໝໍປົວຢາຜູ້ໜຶ່ງ ເກີດລົ້ມປ່ວຍແລ້ວຕາຍໄປ ແລະບໍ່ຮູ້ວ່າຍ້ອນເຫດຜົນຫຍັງ ລາວເລີຍຕົກໄປນະຣົກ. ບັນດາຍົມ ພິບານທັງຫຼາຍພາກັນມາຊຸມລ້ອມທັນທີ ແລ້ວກໍພາກັນຈັບໂຍນລົງໝໍ້ 8 ຫູ. ພໍດີໂຍນລົງໄປ ນ້ຳເຫຼັກນ້ຳທອງເລີຍເປັນຈອຍ ພວກຍົມພິບານ ພາກັນສຸມໄຟໃສ່ແນວໃດກໍບໍ່ຮ້ອນບໍ່ເດືອດຈັກເທື່ອ. ພວກຍົມພິບານ ພາກັນອົບຟືນໃສ່ ໄຟລຸກເປັນແປວ ໜ້າແໜ້ນແກ້ມໄໝ້ ເຫື່ອໄຄ ໄຫຼຍ້ອຍຊະຊະ ແຕ່ພວກທີ່ຕົກນະຣົກທັງຫຼາຍກໍຍັງຮູ້ສຶກວ່າເປັນ ສະບາຍ

" ອ່າ ! ນ້ຳໝໍ້ນະຣົກນີ້ອາບເປັນສຳບາຍດີແທ້ເດ "

ພວກຍົມພິບານພາກັນນຳເອົາເຫດການອັນແປກປະຫຼາດນີ້ ເມືອທູນເອມມາ ຜູ້ເປັນຈ່າ ເຊິ່ງຮູ້ສຶກມີຄວາມໂກດແຄ້ນຫຼາຍ.

" ເອີ ! ເອົາພວກເຂົາໄປໃສ່ພູເຂົາດາບ "

ພວກຕົກນະຣົກພາກັນຮ້ອງໄຫ້ຂຶ້ນ ພ້ອມທັງຖືກບັງຄັບໃຫ້ ອອກຈາກ

ໜັ້ນແປດຫູໄປສູ່ພູດາບ. ຂະນະນັ້ນ ມີນັກຫຼິ້ນກົນຜູ້ໜຶ່ງໃນໝູ່ ພວກເຂົາ ໄດ້ເອົາພວກເຂົາໃສ່ຫຼັງຕົນເອງ ເຮັດໃຫ້ຄົນດາບຄົນງາວ ບໍ່ເປັນພົນສັກສິດເລີຍ. ກົງກັນຂ້າມພວກທີ່ຮັບບາບກໍຮູ້ສຶກ ເປັນສຳບາຍຕາສຳບາຍໃຈ ເພາະມີທິວທັດສວຍງາມແລະມີສາຍລົມເປັນພັດມາ. ພວກຍົມພິບານໃຈຮ້າຍ ແບກຄ້ອນດະເນີນເຂົ້າໄປໃສ່ພວກ ທີ່ເປັນໂທດກຳເພື່ອ ຈະຂະຍີ້ພວກເຂົາໃຫ້ແຫຼກ. ເມື່ອເຫັນດັ່ງນັ້ນນັກປຸ່ງຢາເລີຍໂພະຝຸ່ນອັນໃດອັນໜຶ່ງໃສ່ຕາພວກເຂົາ. ເຮັດໃຫ້ ພວກເຂົາຕາມົວ ພາກັນໄຫ້ຮ້ອງຂັນ. ຈ່າຂອງພວກເຂົາເອມມາ ໝົດປັນຍາ ຈຶ່ງຕົກລົງໄລ່ພວກຫົວດື້ຫົວດ້ານໃຫ້ພ່າຍໜີຈາກນະຮົກເລີຍ.



# ຜີສາດຮ້າຍ

## ແຫ່ງພູເຂົາ ອາມິດະ

ແຕ່ກ່ອນຢູ່ເທິງພູເຂົາ ອາມິດະ ຍັງມີຜີສາດຮ້າຍໂຕໜຶ່ງເກີດເປັນວັນພັນເປັນໝື່ນແຕ່ຊອກທ່ຽວຫາລັກເອົາເດັກນ້ອຍ ງົວຄວາຍໝູໝາ ເປັດໄກ່ ໄປເປັນອາຫານ. ຕອນກາງຄືນມັນໄດ້ມາເລາະວົນວຽນ ເປັ່ງແສງເນົ້າງຢູ່ຕາມບ້ານຮ້ານຊ່ອງ ເຮັດໃຫ້ຜູ້ຄົນອົກສັ່ນຂວັນຫາຍ. ສະພາບມີຄວາມເຄັ່ງຮ້ອນຕັນທີ ຈົນວັນໜຶ່ງຊາວບ້ານໄດ້ຕັດສິນໃຈພາກັນມາໂຮມຢູ່ທີ່ວິຫານວັດ ເພື່ອປຶກສາຫາລືວິທີການແກ້ໄຂ. ເຂົາເຈົ້າໄດ້ຕົກລົງຈັດຕັ້ງໜ່ວຍກ້າຕາຍເພື່ອໄປສູ້ກັບ ຜີສາດໂຕນັ້ນ ແຕ່ກໍ່ບໍ່ແພ້ມັນ. ມື້ໜຶ່ງຊາວບ້ານໄດ້ພົບເຫັນໜັງສືແຜ່ນໜຶ່ງຕິດຢູ່ເສົາວິຫານວັດ ເຊິ່ງມີຂໍ້ຄວາມວ່າ :

" ເອົາຍິງສາວມາໃຫ້ກູຜູ້ໜຶ່ງ ແລ້ວກູຈະບໍ່ກວນພວກສູອີກຕໍ່ໄປ" ຈາກຂໍ້ຄວາມດັ່ງກ່າວ ຊາວບ້ານເລີຍເປີດປະຊຸມກັນອີກ ພວກທີ່ບໍ່ມີລູກສາວ ລະດົມໃຫ້ຄອບຄົວຜູ້ທີ່ມີລູກສາວຍອມເສັຽສະຫຼະ ເພື່ອ

ພົນປະໂຫຍດຂອງສ່ວນລວມ ສ່ວນເຣືອນຂອງຜູ້ທີ່ມີລູກສາວ ພັດບໍ່ຍອມ ເພາະສົງສານລູກ ແລະຫວງແຫນລູກຂອງຕົນ. ການຖົກຖຽງກັນໄດ້ດຳເນີນມາຫຼາຍຄັ້ງຫຼາຍຄາວ ແຕ່ກໍ່ບໍ່ຕົກແຕກກັນເລີຍ ຈົນວັນໜຶ່ງມີນາງສາວໃຈບຸນຜູ້ໜຶ່ງ ຍົກມືອາສາສະໝັກໄປໃຫ້ຜີສາດກິນ ພວກຊາວບ້ານໃຜໆກໍ່ລື້ງອົກລື້ງໃຈ ສ່ວນພໍ່ແມ່ຂອງນາງນັ້ນພາກັນໄຫ້ເຊັດນ້ຳຕາເພາະບໍ່ຢາກໃຫ້ລູກກະທຳເຊັ່ນນັ້ນ ແຕ່ຜູ້ເປັນລູກກໍ່ໄດ້ ລະດົມກຳລັງໃຈໃຫ້ພໍ່ແມ່ທຸ່ນທ່ຽງ.

ພວກຊາວບ້ານພາກັນໄປຕັ້ງຕູບທີ່ຢູ່ແປພູອາມິດະ ແລ້ວກໍ່ ເອົານາງສາວວິລະສັດຕີຜູ້ນັ້ນ ນຳໄປບັນຈຸໄວ້. ເມື່ອເຂົ້າໃນຕູບ ແລ້ວນາງເລີຍດັງໄຟຂຶ້ນອ້ອມໂຕນາງ ເອົາໝາກຫີນມາເຜົາໄວ້ ຫຼາຍກ້ອນ. ເມື່ອຄາຍຄ່ຳແລງມາ ເລົາຄົງໃຫ້ຍິນດ່ຳທຳ ມີອົນສຸກສູ້ຍຂອງຜີ ກໍ່ຄ່ອຍໆປະກົດເປັນເງົາອອກມາໃຫ້ເຫັນ. ມັນອ້າປາກກວ້າງໃນຕາເປັນກະແສໄຟ ແລະເຄື່ອນເຂົ້າມາຫານາງ ແຕ່ກໍ່ເຂົ້າເຖິງນາງບໍ່ໄດ້ເລີຍ ເພາະມີໄຟອ້ອມ. ຜີສາດເຫັນດັ່ງນັ້ນ ຈຶ່ງປ່ຽນເພດເປັນຜ້າຫົມເພື່ອຈະເລື່ອມກອງໄຟເຂົ້າໄປ. ໂອກາດດີນາງເລີຍ ເອົາເຈັ້ຽກົມ ຫຍວາມຈັບເອົາໝາກຫີນຮ້ອນຖຸ້ມໃສ່ເພດທັນທີ ຜີສາດຖືກບາດເຈັບໜັກເລີຍຮ້ອງໄຫຼຕາຍກັບຄືນໄປສູ່ຖ້ຳຂອງມັນ. ຕົກມື້ໃໝ່ມາ ນາງສາວຜູ້ນັ້ນໄດ້ອອກຈາກຕູບຂອງຕົນນຳໄປຕາມຮອຍ ເລືອດ

ຂອງຜີສາດ ຈົນໄປຮອດໃນຖ້ຳຂອງມັນ. ນາງຈັດການເອົາ ກິ່ງໄມ້ມາກອງໃສ່ໃນຖ້ຳດັ່ງກ່າວ ແລ້ວກໍດັງໄຟຂຶ້ນເພື່ອອູດໂຕຜີ. ໃນທີ່ສຸດຜີກໍຄາງຕາຍອອກມາ. ນາງສາວຄົນດີ ໄດ້ກັບຄືນມາບ້ານ ເພື່ອນຳເອົາພໍ່ແມ່ປະຊາຊົນໄປເບິ່ງຊາກຂອງມັນ. ແມ່ນຜີສາດຮ້າຍໂຕເຖົ້າແກ່ທີ່ສຸດຕາຍ ແລ້ວທຸກຄົນໃຜໆກໍ່ລົງໃຈ.



# ອ້າຍ 3 ໄຫ

ແຕ່ກ່ອນຢູ່ໃນໝູ່ບ້ານ ກາສຸກະ ຍັງມີ "ອ້າຍສາມໄຫ" ຜູ້ໜຶ່ງ ເຊິ່ງມີຊື່ວ່າ ຣາກຸແກນ. ເຂົາມີຊື່ສຽງຈາກກຳລັງວັງຊາ ອັນມະຫາສານຂອງເຂົາ ເພາະເຂົາກິນເຂົ້າສາມໄຫ ( 5,4 ຫຼິດ ) ຕໍ່ມື້ ໝາຍຄວາມວ່າເຂົາກິນຜູ້ດຽວທໍ່ກັບ 10 ຄົນກິນ. ເຂົາໄຖນາແລ້ວໄວທີ່ສຸດ ອັນເປັນເຫດໃຫ້ເຂົາມີຊື່ສຽງອີກຫຼາຍ.

ມື້ໜຶ່ງຂະນະທີ່ເຂົາໄຖນາໃຫ້ຊາວບ້ານຢູ່ ກໍເລີຍມີຄົນມາເວົ້າເຍີ້ຍເຂົາວ່າ :

" ມັນບໍ່ແມ່ນມຶງໄຖດອກ ມັນແມ່ນເຂົ້າຫ້ອຍຢູ່ແອວມຶງໄຖຊື່ "

" ອ້າຍສາມໄຫ " ໄດ້ຍິນຄວາມເວົ້າດັ່ງກ່າວ ກໍເລີຍເອົາຖົງເຂົ້າຫ້ອຍໃສ່ງອນໄຖ ແລ້ວມານອນເສີຍຢູ່. ຊາວບ້ານ ເຫັນວ່ານາຈະບໍ່ແລ້ວເລີຍຮ້ອງ " ທ້າວສາມໄຫ " ມາໄຖອີກ. ທ້າວສາມໄຫຈຶ່ງເວົ້າວ່າ :

" ເຫັນບໍ່ ? ບໍ່ແມ່ນຖົງເຂົ້າໄຖນາເນີ ມັນຕ້ອງແມ່ນຂ້ອຍໄຖອີຫຼີ " ຈາກນັ້ນມາຊາວບ້ານນັ້ນເລີຍບໍ່ເຍີ້ຍຢອກຜູ້ທີ່ແຂງແຮງກ້າວກິດຈັກເທື່ອເລີຍ.

# ແຄນດຳ ແລະ ແຄນແດງ

ທີ່ໂຕວະດະ ຍັງມີເທບພະທິດາອົງໜຶງຊື່ວາ ເມຄາມີ ເຊິ່ງຊົງຄວາມງາມຫາທີ່ສຸດທີ່ຍັງບໍ່ໄດ້ ຈົນເຮັດໃຫ້ເຈົ້າອາຣັກ ຄືແຖນດຳແລະແຖນແດງ ເກີດການຜິດຂ້ອງຕ້ອງຖຽງກັນຂຶ້ນ ຍ້ອນວ່າສູ່ຄົນ ສູ່ຢາກເປັນເຈົ້າຂອງຫົວໃຈຂອງນາງ. ໃນທີ່ສຸດແຖນທັງສອງ ກໍ່ເລີຍເກີດເລວກັນ ອັນເຮັດໃຫ້ແຖນດຳເປັນຜູ້ແພ້. ແຖນດຳຄິດວ່າ ຕົນເອງຈະຊະນະຫົວໃຈຂອງ ເມຄາມີ ໄດ້ ແຕ່ບໍ່ເປັນຈັ່ງຄິດເລີຍ ຫົວໃຈຂອງອົງນາງອ່ວາຍໄປສູ່ແຖນແດງພຸ້ນແລ້ວ. ເມື່ອເປັນ ແນວນັ້ນແຖນດຳເລີຍເກີດຄວາມຂົມຂື່ນເສັຽໃຈທີ່ສຸດ ຈຶ່ງຈີກເກາະ ຮອນສູອອກເປັນສອງປ່ຽງ. ປ່ຽງໜຶງຖືກໄສຂຶ້ນເມືອໄວ້ທາງເໜືອ ອັນເກີດເປັນເກາະຮົກໄກໂດ ຂອງຍີ່ປຸ່ນປັດຈຸບັນ.

# ປາສະໝ່ອຍ

ມີຄົນຫາປາໝູ່ໜຶ່ງ ພາກັນໃຊ້ເຮືອໃບລົມເດີນທະເລໄປເພື່ອຫາປາ. ຂະນະທີ່ຢູ່ກາງທະເລອັນໄພສານຢ່າງແນມບໍ່ເຫັນຝັ່ງ ຈັກເມັດນັ້ນ ຊາວເຮືອກໍເລີຍໄດ້ຍິນສຽງແປກປະຫຼາດດັງມາ "ດົງ-ດົງ ດົງ" ຢູ່ບໍ່ເຊົາ. ບາດໃດແທ້ແມ່ນເຈົ້າເພິ່ນຜູ້ສະໝ່ອຍ ເຊິ່ງກຳລັງພົ່ນນ້ຳຂຶ້ນເມືອເທິງອາກາດ ເປັນຝົນເມັດນ້ອຍໆຕົກລົງມາອາບ ຄີງຂອງເພິ່ນເອງຢູ່ ຕໍ່ໜ້າໄພຂົ່ມຂູ່ອັນໃຫຍ່ຫຼວງດັ່ງກ່າວ ຈະຕ້ອງຫາວິທີແກ້ໄຂແນວໃດ ເພາະວ່າ ພຽງແຕ່ມັນເອົາຫາງຂອງມັນກະດິກນ້ຳໃສ່ທໍ່ນັ້ນ ເຮືອໃບລົມກໍຈະສະເດັນເປັນໃງ່ປິວໄປໂລດ. ຂະນະນັ້ນມີຊາວເຮືອເຖົ້າຜູ້ໜຶ່ງອອກຄວາມເຫັນວ່າ :

" ກິນກ້ວຍຍາກປອກ- ຂ້ອຍໄດ້ອ່ານປຶ້ມເຫຼັ້ມໜຶ່ງ ແລ້ວບອກວ່າ : ເມື່ອປາສະໝ່ອຍມາຂົ່ມຂູ່ ຕ້ອງຮີບເອົາແພຂາວໄປ ກາງຫ້ອຍໄວ້ທ້າຍເຮືອໂລດ ເພາະວ່າແພສີຂາວນັ້ນ ເຮັດໃຫ້ຈິດໃຈຂອງ

ປາຊະນິດນັ້ນສະຫງົບ "

ເວລານັ້ນ ຢູ່ທີ່ເຮືອຫາແພຊາວພື້ນໜຶ່ງຈະມາເຮັດຕາມ ນິດ ຣຽນບົດນັ້ນກໍ່ມີ ບັງເອີນມີຊາວໜຸ່ມຜູ້ໜຶ່ງອາສາມອບກະຕຽວ ຂອງ ຕົນໃຫ້. ແຕ່ເມື່ອເອົາໄປເຢີ່ງແລ້ວ ປາກໍ່ຍັງບໍ່ສະແດງອາການອ່ອນ ໂຍນຫຍັງອອກມາເລີຍ ມັນຍັງຊູ່ຂວັນຂອງຊາວເຮືອຢູ່ຄືເກົ່າ.

ຂະນະນັ້ນແມ່ຜູ້ໜຶ່ງເວົ້າຂຶ້ນວ່າ :

" ເຊົາ-ເຊົາ ສິ່ງທີ່ຂຽນໄວ້ໃນປຶ້ມເກົ່າໆນັ້ນ ບໍ່ເປັນປະໂຍດ ຫຍັງດອກ ".

ຈາກນັ້ນຊາວເຮືອກໍ່ເລີຍເລີ່ມເປີກສາສົນທະນາກັນອີກ. ຊາວ ເຮືອເຖົ້າອີກຜູ້ໜຶ່ງອອກຄວາມເຫັນວ່າ :

" ປາສະໝອຍບໍ່ເຫັນຜ້າຂາວນັ້ນດອກ ເພາະມູມມອງ ຂອງ ຕາມັນຈຳກັດ. ເວລາຂ້ອຍຍັງນ້ອຍພຸ້ນ ຂ້ອຍໄດ້ຍິນຜູ້ເຖົ້າຜູ້ແກ່ເວົ້າ ສູ່ຟັງວ່າ ໝາກຖົ່ວເຫຼືອງ ພໍ່ຊ່ວຍໃຫ້ປາສະໝອຍໜີໄດ້. ຕ້ອງໃຊ້ ໝາກຖົ່ວເຫຼືອງໃຫ້ມັນ ".

ຍ້ອນວ່າບໍ່ມີໝາກຖົ່ວເຫຼືອງຢູ່ໃນເຮືອນັ້ນຈັກເມັດ ເພິ່ນເລີຍ ຖອກໄຫນ້ຳສົ້ມລົງທະເລ. ແຕ່ປາສະໝອຍກໍ່ຍັງບໍ່ໜີຄືເກົ່າ ຈຳ ເປັນຈຶ່ງໄດ້ພາກັນປັ້ນເຂົ້າຫຸງແກ້ນໆໃສ່ມັນຈົນມັນກິນອີ່ມ ແລ້ວກໍ່ ເລີຍໜີໄປຈາກເຮືອລຳນັ້ນ.


たちうお
ぼら
この時代のぼらは鯉の味とならぶ珍味とされた。
くろだい
いわし
この時代のいわしは下品な食物として，肥料にされた。
うるめいわし
えい
肉食できない平安時代に干や鮨が輸入された。
さば
なまず
中国では鮎はなまずのこと
ふな
鮎という字は神功皇后があゆを釣いて戦況を占なった古事
いしがれい
ひらめ
さんま
このしろ
まぐろ
かつおぶし
にしん
しらうお

# ເປັນຫຍັງກຸ້ງຈຶ່ງຫຼັງທົບ

ແຕ່ກີ້ແຕ່ກ່ອນປາງປູ່ໝ່ອນຍື່ງຢູ່ເມືອງຫນອງແສ ຍັງມີຮຸ້ງໃຫຍ່ໂຕຫນຶ່ງ ໃຫຍ່ອີຫຼີ ຈົນບໍ່ມີສັດປີກຊະນິດໃດປຽບປານເລີຍ. ມື້ຫນຶ່ງມັນໄດ້ບິນໄປສູ່ ອິເຊະ ເພື່ອຈະຈຳສິນພາວັນນາ. ໄລຍະທາງ ໄປຂອງມັນນັ້ນ ຈະຕ້ອງໄດ້ຂາມນ້ຳແມ່ສະໜຸດອັນໄພສານ ຈຶ່ງຈະເຖິງບ່ອນທີ່ໝາຍໄດ້. ມັນໄດ້ບິນໄປ ບິນໄປໝົດມື້ ຕົກຄ່ຳມາ ມັນກໍຫາທີ່ນອນ. ຂະນະນັ້ນມີໄມ້ລຳຫນຶ່ງ ຕັ້ງຢູ່ກາງທະເລລຳດຽວຮຸ້ງກໍເລີຍເຂົ້າຈັບນອນ. ຕື່ນເຊົ້າມາແຕ່ດິກມັນກໍອອກບິນເດີນທາງອີກ ຈົນຮອດຄ່ຳ ຈຶ່ງພົບໄມ້ລຳດຽວພົ້ນຂຶ້ນທະເລອີກ ຮຸ້ງຈຶ່ງເຂົ້າໄປຈັບເພື່ອຈະນອນຄ້າງຄືນ ຄາວນັ້ນເລີຍໄດ້ຍິນສຽງຈົ່ມພື້ມພຳອອກມາແຕ່ພົ້ນນ້ຳວ່າ :

" ແມ່ນຫຍັງມາກະດຶກກະດຽນຫນວດຂອງກູເດ. ແມ່ນໃຜມາບັງອາດລົບກວນການພັກຜ່ອນຂອງກູ " .

ຮຸ້ງຕື່ນຕົກໃຈເລີຍຕອບໄປວ່າ :

" ແມ່ນກູເອງທີ່ເປັນຮຸ້ງໃຫຍ່ ແລະເປັນເຈົ້າແຫ່ງເວຫາ ຜາຈັນທັງຫຼາຍ "

" ໂອ ! ແມ່ນມຶງດອກວ໋າ ຜູ້ທີ່ຈະໄປອິເຊະຫົນຕີ. ແຕ່ຮູ້ໄວ້ວ່າມື້ແລງວານນີ້ມຶງໄດ້ນອນຢູ່ຫນວດເບື້ອງຊ້າຍຂອງກູແລ້ວມຶງໄດ້ມາຈັບຫນວດເບື້ອງຂວາຂອງກູ. ມຶງໄດ້ໃຊ້ເວລາທັງມື້ເລີຍ ເພື່ອບິນແຕ່ຫນວດເບື້ອງຊ້າຍມາຫາຫນວດເບື້ອງຂວາຂອງກູ "

" ອິຫຼີ໋ວາ ? " ຮຸ້ງຖາມດ້ວຍຄວາມກະດາກໃຈ.

" ກໍແມ່ນນອນລະຕີ ກູເປັນພະຍາທີ່ໃຫຍ່ກ່ວາເພີນແຫ່ງກຸ້ງ ທັງຫຼາຍໃນສະຫມຸດນີ້ "

ຮຸ້ງຮູ້ສຶກເສັຽໃຈໃນຄວາມດ້ອຍກ່ວາກຸ້ງຂອງໂຕເອງ ຈຶ່ງຕັດສິນໃຈເຊົາການເດີນທາງຂອງຕົນ.

ສ່ວນກຸ້ງເອງກໍ່ກະໂດດລິດໂຕເດີນທາງໄປສູ່ອິເຊະເພື່ອຈະຈຳສິນພາວັນນາຄີ້ນ ເມື່ອຮອດຕອນຄ່ຳມາ ມັນເລີຍເຂົ້າໄປນອນຢູ່ໃນຮູມີດຮູຫນຶ່ງ ຕື່ນເຊົ້າມາກໍ່ເດີນທາງຕໍ່ຈົນຄ່ຳ ຈຶ່ງໄປລົ້ນນອນຢູ່ຮູມີດອີກຮູຫນຶ່ງ. ຄາວນີ້ກຸ້ງເລີຍໄດ້ຍິນສຽງຈົ້ມອອກມາວ່າ :

" ແມ່ນໃຜເຂົ້າມາຮູດັງຂອງກູ ? "

" ເຍີ ! ແມ່ນຮູດັງວ໋ານີ້ ? ຊັ້ນມຶງແມ່ນໃຜ ? "

" ກູແມ່ນພະຍາປາຜາໄລທະເລ ທີ່ໃຫຍ່ກ່ວາເພິ່ນ. ມື້ວານນີ້ມຶງໄດ້ມານອນຮູດັງເບື້ອງຊ້າຍຂອງກູ ແລະມື້ນີ້ມຶງມາກະດຽມ ດັງເບື້ອງຂວາຂອງກູ. ມຶງຈົ່ງອອກໄປ ! "

ຄັນເວົ້າແລ້ວ ປາຜາໄລເລີຍຫົ່ງດັງ "ຟຶດ" ບາດໜຶ່ງ ກຸ້ງເລີຍປີ້ວໄປກະທົບໃສ່ໂງ່ນຫີນເຮັດໃຫ້ຫົວທົບຕົວແຕ່ບັດນັ້ນເປັນຕົ້ນມາ



# ກະໂຫຼກຫົວນ້ອຍຊູ່ງາດຳ

ແຕ່ກ່ອນ ຢູ່ໃນບ້ານ ອຸເອກິ ແຄວ້ນຈູໂກກຸ ແຕ່ລະປີ ເພິ່ນໄດ້ຈັດຕັ້ງການແຂ່ງຂັນຂັບລຳແລະຟ້ອນຂັນ. ມາຮອດປີໜຶ່ງ ໜ່ວຍນັກສະແດງຂອງບ້ານ ຢາຣິໂຣ ພາກັນສະແດງລະຄອນເລື່ອງ ການແກ້ແຄ້ນ ຕໍ່ໜ້າມວນຊົນຜູ້ຊົມ. ພະເອກອິກິຄົນງາມ ໄດ້ກາຍເປັນຂວັນ ໃຈ ດູດດຶງເອົາບັນດາຜູ້ຊົມມາຫຸ້ມລ້ອມຕົວຢ່າງເນືອງນອງ. ວັນນັ້ນ ອິກິກາຍເປັນຜູ້ຊະນະເລີດເໜືອຄູ່ແຂ່ງໃດໆ. ເພື່ອເປັນການ ຕອບສະໜອງຄວາມຂໍ້ຮ້ອງຂອງມວນຊົນຜູ້ຊົມ ອິກິໄດ້ເປີດການສະແດງ ອີກຮອບສອງ ອັນເຮັດໃຫ້ກັດສຸ ນັກສະແດງຂອງບ້ານຈຸຣຸຊິ ເກີດຄວາມບໍ່ພໍໃຈຂຶ້ນ.

" ອິກິ ຫຼີ້ນມາແລ້ວເທື່ອໜຶ່ງ ເປັນຫຍັງຈຶ່ງມາຫຼິ້ນອີກ ເທື່ອທີສອງ. ເຮັດແນວນີ້ກໍເອົາປຽບຜູ້ອື່ນລະຕິ " ກັດສຸຮ້ອງໃສ່.

ເມື່ອເລີກການສະແດງມາ ກັດສຸແລະພັກພວກຂອງມັນກໍພາກັນ

ໄລ່ຕາມ ອີກ. ອີກເຫັນອັນຕະລາຍ ເລີຍໄປລີ້ຢູ່ຄູກົ້ນນ້ຳ ແຕ່ກັດສຸກໍຈັບໄດ້. ເຂົາໄດ້ຂາອີກ ລອກໜັງໜາອອກໝົດ ແລ້ວຕັດຄໍ ເອົາຫົວໄປເຊື່ອງໄວ້ຮ່ອມຫີນ ແລ້ວກໍໜີໄປ.

ປີໜຶ່ງຜ່ານໄປ. ກັດສຸໄດ້ຍ່າງກາຍມາແຖວນັ້ນອີກ ເລີຍໄດ້ຍິນສຽງຂັບວິ່ວອນຂ້ອນໂດຍບໍ່ເຫັນຄົນ.

" ໂອ່ ເຈົ້າຜູ້ມອງບໍ່ເຫັນໜ້າ ສຽງລຳເກີນວ່າມ່ວນແທ້ເດ ຕາບໃດໃຜບໍ່ມາພົບພໍ້ ຫົວຂ້ອຍຈະລ່ອງລຳຕໍ່ໄປ "

ໃນທີ່ສຸດທ້າວກັດສຸ ກໍໄປຊອກເຫັນກະໂຫຼກຫົວຫຼ້ອນ ທີ່ເປັນນັ້ນ ເຂົາໄດ້ເອົາຫົວຜີຫຼ້ອນນັ້ນມານຳ ແລ້ວກໍໄປພະນັນລຳບ້ານນັ້ນເມືອງນີ້ ຈົນໄດ້ເງິນໄດ້ຄຳຫຼວງຫຼາຍ. ວັນໜຶ່ງຂ່າວຄາວໄດ້ມາເຖິງ ຫູຂອງພໍ່ບ້ານ ປາຣິໂຣ ເຊິ່ງບໍ່ຍອມເຊື່ອຄວາມເລົ່າລືດັ່ງກ່າວ.

" ບໍ່ ! ຂ້ອຍບໍ່ເຊື່ອ. ກະໂຫຼກຫົວໃຜຈະຂັບລຳໄດ້ ຖ້າວ່າເລື່ອງນີ້ເປັນຄວາມຈິງຂ້ອຍຈະເອົາສົມບັດທັງໝົດຂອງຂ້ອຍນີ້ໃຫ້ "

ຄັນເວົ້າແລ້ວ ເຂົາເລີຍສົ່ງຄົນໃຊ້ຂອງເຂົາໄປຊອກຫາທ້າວກັດສຸ ເຈົ້າຂອງກະໂຫຼກຫົວດັ່ງກ່າວ. ເມື່ອທ້າວກັດສຸມາເຖິງພໍ່ບ້ານເລີຍເວົ້າວ່າ :

" ຂ້ອຍບໍ່ມັກຄົນຂີ້ຕົວະ, ຖ້າວ່າກະໂຫຼກຫົວຂອງເຈົ້າບໍ່ຂັບຂຶ້ນໄດ້ຂ້ອຍຈະຕັດຄໍເຈົ້າ "

ກັດສູເຊື່ອໝັ້ນໃນກະໂຫຼກຫົວ ເລີຍຈຳໃຫ້ມັນລຳຂັ້ນ ແຕ່ມັນກໍ້ບໍ່ຍອມລຳ.

" ນຶ່ງເວົ້າປະລຸປະລິ " ພໍ່ບ້ານເນັ້ນ. ເຂົ່າໄດ້ຕັດສິ່ງ ໃຫ້ເອົາຫ້າວກັດສູໄປຕັດຄໍທັນທີ. ແລະທັນໃດນັ້ນເອງກະໂຫຼກຫົວ ເລີຍຂັບຮ້ອງຂຶ້ນວາ :

" ກູໄດ້ລ້າງແຄ້ນທີ່ແໜ້ນອັ້ງຢູ່ທ້ອງໃນ .... "

ແລ້ວກະໂຫຼກກໍ່ລຳຕໍ່ໄປ ..... ຕໍ່ໄປ .....



# ແມວນ້ອຍ ກາຍເປັນຕ່ອນຄຳ

ແຕ່ກີ້ແຕ່ກ່ອນຍັງມີບ້ານນ້ອຍແຫ່ງໜຶ່ງຢູ່ ແຄວ້ນອັນສະກຸນຊື່ວ່າ ມີໂດລີອ ມີແມ່ເຖົ້າຜູ້ໜຶ່ງທຸກຈົນເຫຼືອທີ່ສຸດ ດຳລົງຊີວິດຢູ່ຮ່ວມກັບລູກສາວຂອງຕົນຊື່ວ່າ ຣານາ " ດອກໄມ້ " ລູກສາວຂອງລາວ ເປັນຄົນດີ ເວົ້ານົວຫົວມ່ວນແລະຟັງຖ້ອຍຫ້ອຍຄວາມ. ທັງສອງແມ່ລູກພາກັນວົມນ້ຳຂຕົມຢູ່ກາງນາ ເພື່ອຈະໄດ້ເຂົ້າມາລ້ຽງຊີບ, ຍິງສາວຊ່ຳຣານປານດຽວກັບນາງຣານານັ້ນ ພາກັນເອົາລູກເອົາຜົວ ໄປໝົດແລ້ວ ຍັງແຕ່ນາງຄົນດຽວທີ່ບໍ່ສາມາດຫາຜົວໄດ້ນຳເພິນ ເພາະທຸກຍາກຫຼາຍ. ມື້ໜຶ່ງຜູ້ເປັນແມ່ເລີຍເວົ້າກັບລູກສາວວ່າ : "ລູກກໍໄປວັດໄປວານນຳເພິ່ນສາດູ ພະເຈົ້າຜູ້ຢູ່ຫົວຈະໂຜດທານລູກຢູ່ດອກ" (ທີ່ປະເທດຍີ່ປຸ່ນເມື່ອຮອດເດືອນຈຽງຂອງແຕ່ລະປີມາຄີເຖິງມື້ ທັກຊຸໂຕ

ທະ ອັນເປັນມື້ເສືອໂຕທຳອິດ ເພິ່ນກໍ່ພາກັນໄປໄຫວ້ພະເພື່ອປາດຖະໜາໃຫ້ຮັ່ງມີດີໄດ້) ໃນມື້ດັ່ງກ່າວນັ້ນເອງ ປະຊາຊົນຢູ່ເຂດ ອ້ອມແອ້ມພະລາດສະວັງ ຮີໂລຊິມາ ກໍ່ພ້ອມພາກັນໄປໄຫວ້ ພະບິ ສະມົນເຕັນ ອັນເປັນພະເຈົ້າແຫ່ງສັບສົມບັດ. ສ່ວນລູກສາວຂອງ ແມ່ເຖົ້າຜູ້ທຸກຍາກນັ້ນ ຫາເສື້ອໃໝ່ຈະນຸ່ງນຳເພິ່ນກໍ່ບໍ່ມີ ຈຶ່ງບໍ່ສາມາດໄປວັດນຳເພິ່ນໄດ້. ຜູ້ເປັນແມ່ມີຄວາມໂສກເສົ້າຫງວມເຫງົານຳລູກເຫຼືອທີ່ສຸດ. ຂະນະນັ້ນຍັງມີຊາຍໜຸ່ມຜູ້ໜຶ່ງຊື່ ໄຊສຸເກະ ເຊິ່ງເປັນ ລູກເສດຖີ ມີຄວາມຮັກໄຄ່ຕໍ່ນາງຮາມາ ແຕ່ກໍ່ບໍ່ສາມາດຈະແຕ່ງງານກັບນາງຮາມາຜູ້ທຸກຈົນໄດ້ ຍ້ອນກົດບັງຄັບຂອງຄອບຄົວຮັ່ງມີບໍ່ອະນຸຍາດ

ພໍ່ຮອດມື້ ຮັດສຸໂຕຮະມາ ທ້າວໄຊສຸເກະ ກໍ່ລຸກແຕ່ເຊົ້າເພື່ອ ຈະໄປວັດ. ເຂົາຍ່າງຜ່ານໄປຕໍ່ໜ້າເຮືອນຂອງນາງຮາມາ ຢ່າງບໍ່ຕັ້ງໃຈ ພໍດີເຂົາເລີຍພົບນາງ ຈຶ່ງຖາມນາງວ່າ:" ເຈົ້າບໍ່ໄປວັດນຳເພິ່ນບໍ່ " ນາງເລີຍຕອບວ່າ:" ບໍ່ຂ້ອຍບໍ່ໄປ " ທ້າວເລີຍຖາມຕໍ່ໄປວ່າ ເປັນຫຍັງ ? ນາງຕອບວ່າ:" ແມ່ຂ້ອຍເຈັບ " ທ້າວໄຊສຸເກະ ເລີຍອ່ວາຍໜ້າໜີພ້ອມທັງເວົ້າວ່າ:" ເອີຊັ້ນຂ້ອຍກະຊິໄປໄຫວ້ພະເພື່ອໃຫ້ຂ້ອຍຮັ່ງຂ້ອຍມີຂຶ້ນຕື່ມ "

ຕົກມື້ແລງມາ ທ້າວໄຊສຸເກະ ກໍ່ເລີຍກັບຄືນມາເຮືອນ ພ້ອມທັງໃຊ້ຄວາມຄິດຢ່າງໜັກວ່າ:" ເຮັດຈັ່ງໃດຈຶ່ງຈະໄດ້ເງິນ ມາໃຫ້

ນາງຣາມາ " ຕາມທາງຂາກັບ ຄາວນ້ອຍໜຶ່ງ ເຂົາເລີຍ ໄດ້ຍິນສຽງຮ້ອງ (ນ່ຽວໆ) ແມວຍີ່ປຸ່ນຮ້ອງນ່ຽວໆ ອອກມາຈາກ ພຸ່ມໄມ້ແມ່ນແມວນ້ອຍສາມໂຕ. ທ້າວໄຊສູເກະ ເລີຍຈັບເອົາມັນຍັດໃສ່ຖົງພາຍ ນຳເອົາມາໃຫ້ນາງຣາມາ ພ້ອມທັງເວົ້າວ່າ:" ໜ້າເສັຽໃຈທີ່ຂ້ອຍບໍ່ໄດ້ນຳເອົາເງິນຄຳມາໃຫ້ເຈົ້າ ແຕ່ໃຫ້ເອົາແມວນ້ອຍພວກນີ້ໃສ່ໝີ້ໄວ້ແດ່ເດີ !" ເວົ້າແລ້ວເຂົາກໍເລີຍໜີໄປ. ສາມມື້ ຕໍ່ມານາງຣາມາ ໄປໄຂເບິ່ງໝີ້ບ່ອນນາງເອົາແມວນ້ອຍໄວ້ຫັ້ນເລີຍຕື່ນຕົກໃຈ ເພາະວ່າແທນທີ່ຈະເຫັນແມວນ້ອຍສາມໂຕ ເລີຍແມ່ນຕ່ອນຄຳບັກໃຫຍ່ສາມຕ່ອນ. ນາງເລີຍຮີບເອີ້ນແມ່ມາເບິ່ງ " ແມ່ ແມ່ມາເບິ່ງແມ ອ້າຍໄຊສູເກະ ນຳເອົາສົມບັດມາໃຫ້ພວກເຮົາ" ແລ້ວທ້າວໄຊສູເກະກໍເລີຍໄດ້ແຕ່ງງານກັບນາງຣາມາແລະຢູ່ກັນຢ່າງ ມີຄວາມສຸກ.





奉行所の役人が見回わるときは畳を一面に敷いてだれでも坐っていられるが、それ以外は通り路だと畳は揚げられ、名主は見張り畳というて十枚も畳を重ね、上座は一畳、中座は二人一枚というような格があり、平の囚人は六人詰から十六人詰と一畳につめられた。

## ໂທດແລະການຕັດສິນລົງໂທດ





石だきというのはむち打ちで白状しない場合、七、八本の[illegible]の上にすわらせ後手を柱にしばり、重さ十二貫の石(縦三尺、横一尺、厚さ三寸)を膝にのせ、強情なものには、十枚ぐらいのせた。

牢屋は原則として未決囚を入れるところで奉行所で調べられた。奉行所の吟味役は、白状しないと、むちで打って調べた。

# ເຕົ້ານ້ຳຊາຄຳ

ແຕ່ກີ້ແຕ່ກ່ອນ ທີ່ຫໍຜາສາດຂອງເມືອງອາກີ ເຊິ່ງຕັ້ງຢູ່ຕີນພູສະອຸຊຸຢາມະ ແຫ່ງອາສະກຸນ ຍັງມີໂຈນຜູ້ຫນຶ່ງເຂົ້າໄປໃນເຮືອນ ຂອງນາຍຍາມຜາສາດດັ່ງກ່າວໃນຕອນກາງຄືນ ແລະໄດ້ພົບເຕົ້າຊາ ຄຳຫນ່ວຍຫນຶ່ງ ຕັ້ງຢູ່ກ້ອງຫ້ອງໄຫວ້ພະຂອງເຮືອນດັ່ງກ່າວ. ໂຈນ ຜູ້ນັ້ນຮີບລັກເອົາ ແລ້ວກໍ່ຟ້າວຫນີໄປ. ຕາມທາງໄປເຕົ້າຊາເລີຍ ເວົ້າອອກມາວ່າ : " ກັບຄືນ ກັບຄືນ ! " ໂຈນເລີຍຕອບວ່າ: ເຕົ້າຊາຫນາຫມາ... ມິດແດ່ ! ແຕ່ເຕົ້າຊາພັດຍັງເວົ້າ ຄວາມເກົ່າອອກມາຢູ່ ໂຈນຈຶ່ງຮ້າຍຂຶ້ນວ່າ : " ມິດແດ່ດູ ກູຈະເສັຍລັບຫນ ຢູ່ນຳກູດີໆກູຈິເອົາຊາດີໆໃຫ້ມຶງກິນ " ແຕ່ວ່າເຕົ້າຊາກໍ່ຍັງເວົ້າຄວາມເກົ່າອອກມາໃຈໆ : " ກັບຄືນ ກັບຄືນ ! "ຫນໍໂຈນໃຈຮ້າຍແຮງ

ເລີຍເອົາໄມ້ແສ້ມາຂ້ຽນເຕົ້າຊາແປດປາດ ແລ້ວກໍໂຍນເຕົ້າຊາ ຖິ້ມລົງໄປໃນພຸ່ມໄມ້ ພ້ອມທັງເວົ້າອອກມາວ່າ : " ເຕົ້າຊາໝາງໝົ້ນມຶງບໍ່ໄດ້ນຳເງິນມາໃຫ້ກູຈັກອັດດອກ " ຄ້ອມເວົ້າແລ້ວ ໂຈນກໍ່ຍ່າງໜີອອກໄປແຕ່ບາບບໍ່ແພ້ບຸນຂຕົ້ມເລີຍຕິດເອົາຕີນຂອງໂຈນ ເຮັດໃຫ້ມັນຍ່າງບໍ່ໄດ້ຈົນລົ້ມກະຟຸບກະຟາບ. ມັນຮ້ອງໂອຍອາຍ໋ຂ້ອນ ຂໍອ່ອນຂໍຍອມເຕົ້າຊາພ້ອມທັງຄ່ອຍບືນຄານໄປຫາເຕົ້າຊາ ໂຈນເອົາເຕົ້າຊາແລ້ວກໍຮູ້ສຶກວ່າຂຕົ້ມບໍ່ໄດ້ຕິດຕີນອີກ ຈຶ່ງນຳເອົາເຕົ້າຊາມາສົ່ງ ໄວ້ບ່ອນເກົ່າຂອງມັນ.



# ແມວຂອງໂມກກິຈ

ແຕ່ກີ້ແຕ່ກ່ອນ ຢູ່ບ້ານອາມິໂນະໂອສະວະ ຍັງມີຄົນຂີ້ເຫຼົ້າຜູ້ໜຶ່ງ ຊື່ວ່າໂມກກິຈ. ຍອມເຂົາເປັນຄົນຂີ້ເຫຼົ້າ ແລະເມົາເຫຼົ້າບໍ່ແລ້ວ ບໍ່ທໍ້ ຈຶ່ງບໍ່ສາມາດໄດ້ເມັຽນຳເພິນ. ເຂົາຢູ່ຄົນດຽວພ້ອມກັບແມວ ຂອງເຂົາ. ທຸກວັນເຂົາຕ້ອງໄປຈ່າຍຄ່າເຫຼົ້າຂອງເຂົາ ໃຫ້ແກ່ເຈົ້າຂອງເຮືອນແຮມ. ແລ້ວມື້ໜຶ່ງ ເລີຍມີຊາຍໜຸ່ມຄົນໜຶ່ງນຸ່ງເຄື່ອງສີແດງ ເຂົ້າໄປໃນເຮືອນແຮມເພື່ອຖາມຊື້ເຫຼົ້າຕາໜຶ່ງ. ເຂົາເວົ້າວ່າ : " ໂມກກິຈຈະເປັນຜູ້ຈ່າຍ " ເວົ້າແລ້ວເຂົາກໍຈາກໄປ ຂະນະທີ່ ມີລົມແຮງພັດມາ. ທີ່ເຮືອນຂອງໂມກກິຈ ເຂົາໄດ້ສັງເກດເຫັນວ່າ : ສິ່ງເສື້ອສີແດງຂອງເຂົາເອງທີ່ຫ້ອຍຢູ່ພະນັກເຮືອນ ປຽກຊຸ່ມ ໝົດ ແລະແມວຂອງເຂົາກໍຫາຍໜ້າໄປ. ເຂົາເວົ້າກັບໂຕເອງວ່າ : "

ເອີ້ ! ກູຮູ້ຈັກແລ້ວບັກແມວມຶງມາຫຼອກກູໂດຍກັບເພດເປັນຄົນ ມຶງ
ຈົ່ງເບິ່ງເທາະ "

ແລງວັນນັ້ນເອງອ້າຍເຈົ້າແມວກໍກັບມາ ສ່ວນໂມກກີ໋ຈ ນອນຢູ່ຢ່າງບໍ່ໄດ້ກິນເຫຼົ້າເລີຍ. ເຂົາຕາງຕິຫຼັບແລະກິນຂົ້ນ ອ້າຍເຈົ້າແມວຍ່າງເຂົ້າມາຕາງຕົ້ມນອນລົງ ພ້ອມທັງເສືອກຕາເບິ່ງໂມກກີ໋ຈເຊິ່ງມັນຄຶດວ່າ ນອນຫຼັບ. ຈາກນັ້ນ ແມວກໍເລີຍມອຍມາສູບເອົາເຄື່ອງສີແດງຂອງໂມກກີ໋ຈ. ໂມກກີ໋ຈຣີບພະຫຼາດລຸກຂຶ້ນທັນທີ ແລ້ວກໍເອົາກັບແມວວ່າ : " ເຣີຍ ! ບັກຂີ້ລັກເຫຼົ້າ " ພ້ອມກັນນັ້ນເຂົາກໍແກວ່ງຫອກຂອງເຂົາໃສ່ແມວ. ອ້າຍເຈົ້າແມວຣີບໂດດອອກ ແລ້ວກໍຣີບໜີໄປທັນທີ ໂມກກີ໋ຈ ຣີບແລ່ນນຳໄປ. ອ້າຍເຈົ້າແມວໂດດໄປຍາດໃດກໍເກີດມີມີດໄຟ ຮຸ່ງຟົ້ງອອກມາ ໂມກກີ໋ຈ ແລ່ນໄປຕາມແສງໄຟຂອງແມວໃນກາງຄືນອັນມືດມົວ. ແຕ່ແລ້ວຈັກໜ່ອຍເຂົາກໍບໍ່ເຫັນແສງໄຟເລີຍ. ໂມກກີ໋ຈຈົ່ມວ່າ : " ໂອແມວຊາດຊົ່ວ ! ມຶງຫຼອກກູມາ.. ບາດນີ້ກູຈະເຮັດແນວໃດກັບຄືນເຮືອນ " ໂມກກີ໋ຈພະຍາຍາມ ຍ່າງວົນໆທາວໆໄປ ຈັກໜ່ອຍເຂົາກໍເຫັນແສງໄຟຮຸ່ງຂຶ້ນເປັນແສງ ຂຽວແດງ ແສດ ສົ້ວ ແລ້ວກໍມີເງົາມືດໆດຳໆສີກົງກົກເຊັກເງົກປະກົດອອກມາຢູ່ຕາມທົ່ງຫຍ້າ. ບາງເງົາກໍເຕັ້ນກີດ ແຕ່ມາກາຍເປັນເງົາຜີທີ່ຮ້ອງໂຮໂອທະການແລະດີດຟ້ອນຢ້ອນໂຕ ເປັນກົກໆເງົກໆ. ໂມກ

ກິຈປານກົວຈົນອົກສັ່ນຂວັນຫາຍ ພ້ອມທັງຊຸກເຄເທວະດາ... ພ້ອມກັນນັ້ນ ເຂົາກໍ່ພະຍາຍາມຊອມເບິ່ງວ່າຈະມີແມວໝື່ສາມສິບ. ໃນເວລາດຽວກັນນັ້ນເຂົາພັດໄດ້ຍິນສຽງດັງມາວ່າ : " ນີ້ເນ ນີ້ເນ ແມວຂອງໂມກກິຈ ທີ່ເຂົາເຫຼົ້າມາສູ່ພວກເຮົາ " ແມວຂອງໂມກກິຈໜີເລືອດອາບຢູ່ເຕັມໜ້າ ເລີຍຕອບວ່າ : " ເຈົ້າຂອງຂີ້ຊົ່ວຂອງກູໄດ້ແກວ່ງຫອກມາຖືກໜ້າກູ "

ແລ້ວຝູງແມວໂຕອື່ນກໍ່ເລີຍພາກັນຮ້ອງຂຶ້ນວ່າ : " ຂ້າມັນ.. ຂ້າມັນ ບັກໂມກກິຈ " ໂມກກິຈ ງ່ຽງຫູຟັງ. ຄະນະນັ້ນມີແມວເຖົ້າໂຕໜຶ່ງເວົ້າວ່າ : " ຕົກລົງປະຕິບັດແຜນການດັ່ງນີ້ ມື້ອື່ນໃຫ້ແມວຂອງໂມກກິຈ ໂດດໃສ່ພາເຂົ້າຂອງມັນ ແລະມື້ອື່ນມາມັນຕ້ອງ ຕາຍແນ່ນອນ "

ໂມກກິຈ ໄດ້ຍິນດັ່ງນັ້ນກໍ່ກັບມາເຮືອນ. ມື້ອື່ນມາແມວ ຂອງເຂົາກໍ່ໂດດເຂົ້າພາເຂົ້າຂອງເຂົາແທ້ ແຕ່ໂມກກິຈກໍ່ບໍ່ກິນເລີຍ ເປັນອັນວ່າ ຕັ້ງແຕ່ນັ້ນມາ ຜູ້ຄົນໃນໝູ່ບ້ານ ອານິໂນ ສະວະ ບໍ່ກິນເຂົ້າໃນພາທີ່ແມວໂດດໃສ່ເລີຍ.


たちうお
ぼら
はも
この時代のぼらは鯛の次とならぶ珍味とされた。
くろだい
いわし
この時代のいわしは下品な食物として，肥料にされた。
えい
肉食できない平安時代に羊や豚
が輸入された。
うるめいわし
さば
なまず
中国では鮎は
なまずのこと
鮎という字は神功
皇后があゆを焼いて
戦況を占なった古事
いしがれい
ひらめ
さんま
このしろ
まぐろ
かつをぶし
にしん
しらうお

# ກົ້ນໝໍ້ ແລະ ກົ້ນຄົນ

ແຕ່ກີ້ແຕ່ກ່ອນຍັງມີວັດຫຼັງໜຶ່ງຕັ້ງຢູ່ເທິງພູ ໃນວັດດັ່ງກ່າວ ມີເຈົ້າຫົວເຖົ້າອົງໜຶ່ງ ແລະເນນນ້ອຍອົງໜຶ່ງ. ມື້ໜຶ່ງ ເນນນ້ອຍຕ້ອງຈາກໄປຮຽນທີ່ວັດອື່ນຍັງແຕ່ເຈົ້າຫົວເຖົ້າຢູ່ຜູ້ດຽວ. ດັ່ງນັ້ນເພິ່ນຈຶ່ງຊອກເອົາເນນຜູ້ໃໝ່ມາປ່ຽນ. ໃນທີ່ສຸດກໍເລີຍໄປໄດ້ລູກຫຼານຂອງທ່ານ ຊາກູເຣະ. ມື້ໜຶ່ງຍາຄູເຖົ້າເລີຍບອກສິດໃໝ່ຂອງຕົນ ຊ່ອຍເອົາໝໍ້ໃຫຍ່ລົງຈາກເລົ້າເຂົ້າ. ເຈົ້າຫົວເຖົ້າເປັນຜູ້ຂົນ ຂຶ້ນໄດເມື່ອຊອກເອົາໝໍ້ປ່ອນລົງມາໃຫ້ສິດໃໝ່ຂອງຕົນໂຊມເອົາ ລົງຊ່ອຍພ້ອມທັງເວົ້າກັບສິດຜູ້ຢູ່ລຸ່ມວ່າ : " ຈັບກົ້ນ ຈັບກົ້ນ ຈັບແລ້ວບໍ່ ?" ເນນໃໝ່ ນຶກວ່າຍາທ່ານບອກຈັບກົ້ນໂຕເອງ ກໍເລີຍເອົາມືທັງສອງເບື້ອງມາໂຊມກົ້ນໂຕເອງພ້ອມທັງຂານຕອບຍາທ່ານວ່າ " ຈັບແລ້ວ

ຈັບແລ້ວ ! ຄ້ອນໄດ້ຍິນດັ່ງນັ້ນຍາທ່ານເລີຍປ່ອຍໝໍ້ລົງ ໝໍ້ເລີຍຕົກທັບໜ້າຜາກຂອງເນນນ້ອຍຜູ້ນັ້ນຈົນໂນ." ນີ້ແລະ ເປັນບົດຮຽນໃຫ້ເນນນ້ອຍຮູ້ຈັກສັບໃໝ່ອີກສັບໜຶ່ງ ເພາະໜ້ານເຂົາບໍ່ຮູ້ຈັກຈຳແນກກົ້ນໂຕເອງກັບກົ້ນໝໍ້ເລີຍ.





# ໝາ ແມວ ແລະ ງູ

ແຕ່ກີ້ແຕ່ກ່ອນຍັງມີຜູ້ເຖົ້າສອງຜົວເມັຽພາກັນລ້ຽງໝາໂຕໜຶ່ງ ແລະແມວໂຕໜຶ່ງ ເຊິ່ງເຂົາເຈົ້າຮັກເໝືອນກັນກັບລູກ ເຂົາເຈົ້າເອງ. ໝາຊື່ວ່າ ອົງໂກໂລ ແລະແມວຊື່ວ່າ ເນັນໂກໂລ. ມື້ໜຶ່ງ ເຈົ້າຂອງຂອງເຂົາທັງສອງໄປເຮັດວຽກຢູ່ສວນໝາກຖົ່ວ ເລີຍພົບງູ ໂຕໜຶ່ງ ຈຶ່ງເອົາມັນມາເຮືອນແລະໃຫ້ຊື່ມັນວ່າ ໂນໂລະ ແລະ ໄດ້ ສະເໜີໃຫ້ໝາແລະແມວເພື່ອໃຫ້ເຂົາເປັນເພື່ອນກັນ.

ສັດທັງສາມດຳລົງຄົງຢູ່ນຳກັນຢ່າງເປັນມິດທີ່ດີ. ງູກໍໃຫຍ່ ຂຶ້ນໄວວາ ຈົນເຮັດໃຫ້ໄທບ້ານໄທຊ່ອງຢ້ານກົວ ຈົນບໍ່ພາກັນມາຊື້ໝາກ ຖົ່ວນຳເລີຍ. ຈຳເປັນຜູ້ເປັນເຈົ້າຂອງຈຶ່ງໄດ້ນຳເອົາງູໄປປ່ອຍ ໄວ້ ບ່ອນເກົ່າ. ເພື່ອເປັນການຕອບແທນບຸນຄຸນຂອງພໍ່ເຖົ້າທີ່ໄດ້ ລ້ຽງດູ

ແລະຮັກແພງງູຕະຫຼອດມາ ງູຈຶ່ງມອບກັບວິເສດໃຫ້ພໍ່ເຖົ້າ ກັບໜຶ່ງ ເຊິ່ງສາມາດປາດຖະໜາເອົາຫຍັງກໍໄດ້ໝົດ. ພໍ່ເຖົ້າບໍ່ຕ້ອງ ການຫຍັງຫຼາຍດອກ ນອກຈາກແຕ່ຊິ້ນປາອາຫານມາກັບເຂົ້າເທົ່ານັ້ນ ນັບຕັ້ງແຕ່ນັ້ນມາສອງເຖົ້າຜົວເມັຍບໍ່ໄດ້ອຶດໄດ້ຢາກຫຍັງເລີຍ. ຫາກວ່າຫິວມາເທື່ອໃດ ກໍໄຂກັບນັ້ນອອກ ແລ້ວພາເຂົ້າທີ່ເຕັມແຕ່ຂອງກິນອັນແຊບນົວກໍປະກົດອອກມາໂລດ.

ແຕ່ສອງເຖົ້າກໍຍັງຮູ້ສຶກບໍ່ມີຄວາມສຸກໃຈເລີຍເພາະບໍ່ມີລູກ ນຳເພິ່ນຈັກຄົນ. ມື້ໜຶ່ງແມ່ເຖົ້າເວົ້າອອກມາວ່າ : " ຂ້ອຍຢາກ ໄດ້ລູກຊາຍຜູ້ໜຶ່ງ ອາຍຸ 17-18 ປີ " ຜູ້ເປັນຜົວເວົ້າວ່າ "ຈະຕ້ອງປາຖະໜາໃຫ້ຄັກໆກ່ອນຈຶ່ງໄຂກັບ " ແຕ່ຜູ້ເປັນເມັຍພັດຟ້າວ ໄຂໂພດ. ເມື່ອໄຂແລ້ວກໍມີຊາຍໜຸ່ມ ອາຍຸ 17-18 ປີ ປະກົດ ອອກມາ. ແມ່ເຖົ້າດີໃຈຫຼາຍຈົນຮ້ອງອອກມາວ່າ " ບາດນີ້ຕາຍກໍບໍ່ ກິນແໜງ "

ແຕ່ວ່າຊາຍໜຸ່ມທີ່ເກີດມານັ້ນ ເລີຍເປັນຄົນຂີ້ຄ້ານບໍ່ໄດ້ ວຽກໄດ້ການຫຍັງ ມີແຕ່ກໍ່ຄວາມທຸກໂສກໃຫ້ແກ່ຜູ້ເຖົ້າທັງສອງ ຢູ່ບໍ່ເຊົາ. ມື້ໜຶ່ງ ມັນກໍເລີຍລັກເອົາເງິນຄຳ ແລະກັບວິເສດນັ້ນໜີໄປ. ແຕ່ອົງໂກໂລ ແລະເບັນໂກໂລ ຜູ້ຊື່ສັດຕໍ່ເຈົ້າຂອງຕົນໄດ້ພາກັນນຳ ໄປຊອກຫາທ້າວຂີ້ຊ່ວນນັ້ນ ຈົນນຳເອົາກັບວິເສດນັ້ນມາໃຫ້ສອງເຖົ້າ ຜົວ

ເມັຽຈີນໄດ້ ແຕ່ໝາແລະແມວທັງສອງຕ້ອງຕາຍໄປເພາະໄດ້ ສູ້ລົບຕົບຕີແລະຜ່ານຜ່າອຸປະສັກຮ້ອຍແປດພັນປະການ. ນັບຕັ້ງແຕ່ນັ້ນ ມາສອງເຖົ້າຜົວເມັຽກໍເລີຍບ່ອູ້ຫອນຮ້ອນໃຈນຳຫຍັງແລະພາກັນ ດຳລົງຊີວິດຢູ່ຢ່າງມີຄວາມສຸກ.



# ໜ້າກະດ້ງສີແດງ

ສະໄໝ ໄກໂຊ ! ເຈົ້າແຫ່ງແຄ້ວນ ໄອຊູ ຊຸເອສຸຄິໄກໂຊະ ກຳລັງຄົບຄິດແຜນການກັບ ອິຊິດະມິດສຸນາຣິ ເພື່ອຈະໂຈມຕີໂຕກູກາວະອິເອຍະຊຸ ເປັນສອງປີກ. ດັ່ງນັ້ນຈະຕ້ອງສ້າງປ້ອມຣົບຂຶ້ນທີ່ ວາກາເມັດສຸ. ຂະນະນັ້ນເອງທີ່ມີສຽງຊາລືກັນໄປໃນໝູ່ຄົນງານວ່າ : ແຕ່ລະຄືນ ຜີໜ້າກະດ້ງສີແດງໄດ້ອອກມາຈາກວັດສຸວະ ແລ້ວຫຼອກຜູ້ຄົນ.

ພໍໄດ້ຍິນຂ່າວດັ່ງກ່າວ ອັດສະວິນ ຢາມາດະກະກຸໂນຊິນ ຂໍອັນອາສາໄປປາບທັນທີ.

ຄືນນັ້ນ ເຂົາຍ່າງເຂົ້າໄປໃນປ່າອ້ອມແອ້ມວັດສຸວະ ບ່ອນທີ່ຜີມັກອອກ. ຄາວໜຶ່ງເຂົາຫຼຽວຄືນຫຼັງເລີຍເຫັນ ອັດສະວິນໜຸ່ມອີກຜູ້ໜຶ່ງຍ່າງຕາມຫຼັງເຂົາມາ.

–" ເຈົ້າໄດ້ຍິນເພິ່ນເວົ້າເຖິງຜີໜ້າກະດ້ງແດງແມ່ນບໍ່ ?

ແລ້ວເຈົ້າກໍຈະມາປາບມັນແມ່ນຕ໋ວາ ! " ເຂົາຖາມ ແຕ່ເຂົາ ກໍບໍ່ຕອບ ປາມາດະ ຖາມຕື່ມ ແຕ່ກໍຍັງບໍ່ຕອບອີກ ປາມາດະຈຶ່ງຮ້ອງໃສ່ຕາມແຮງວ່າ :

-" ມຶງຮູ້ຈັກຜີຫນ້າກະດົ້ງແດງບໍ່ ? "

-" ຜີຫນ້າກະດົ້ງແດງ ບໍ່ແມ່ນອັນນັ້ນບໍ່ ? " ເຂົາຮ້ອງ ຕອບຢ່າງແຮງພ້ອມທັງຍື່ນຫນ້າໄປໃສ່ ປາມາດະ. ຂະນະນັ້ນຫນ້າ ຂອງເຂົາຫນ້າຢ້ານຂົນທັນທີ. ມີເຂົາຫຼູ່ງອອກຈາກກະໂຫຼກຫົວມີຜົມຊຸ້ກສຸຍ. ມີຕາເປັນແສງ ສົບຂອງມັນແລ່ງກວ້າງອອກຈົນຈຳກົກຫູມີແຂ້ວເຫຼືອງຄືຄຳ ບາດມັນຫຍ້າກໍເກີດເປັນສຽງຟ້າແຜດຟ້າຜ່າ. ທາວອັດສະວິນປາມາດະ ອົກສັ່ນຂວັນອ່ອນ ເລີຍເປັນລົມລົ້ມລົງ. ພໍຟື້ນ ສະຕິແດ່ເຂົາກໍຄານອອກໄປ ພົບເຮືອນຍາຍເຖົ້າຄົນຫນຶ່ງ. ເຂົາໄດ້ຂໍນ້ຳກິນ

-" ເຈົ້າເປັນຫຍັງມາ ! ຄືວ່າຊົງກະທົບກະເທືອນໃຈແຮງ"

-" ໂອຍ ! ມັນຍ້ອນຜີຫນ້າກະດົ້ງແດງຫັ້ນແຫຼະ " ຂະນັ້ນຍາຍເຖົ້າກໍຍື່ນຫນ້າໃສ່ປາມາດະ ອັນແມ່ນຫນ້າຜີຫນ້າກະດົ້ງແດງໂຕນັ້ນເອງ. ເຂົາຮີບແລ່ນຫນີດ້ວຍຄວາມອົກສັ່ນຂວັນຫາຍ ຈົນລົ້ມປ່ວຍຫນັກ.

# ມ້າແຫ່ງມິທະຣຸ

ສະໄໝ ເອນຣິປະກູ ( 782-806 ) ທ້າວ ສະກະນູ ເອໂນະ ຕາມູຣະ ມາໂຣະ ຕ້ອງໄດ້ໄປເສິກເພື່ອປາບຝູງໂຈນທາຣອຍຢູ່ເຂດຕາເວັນຕົກສ່ຽງເໜືອຂອງປະເທດຍີ່ປຸ່ນ. ແຕ່ ກ່ອນຈະອອກເດີນທາງຈາກນະຄອນກຽວໂຕໄປນັ້ນ ທ້າວໄດ້ໄປຫາລືສີ ເອນຈິນຜູ້ສ້າງວັດ ກິໂຢມິສຸ "ນ້ຳທິບ" ລືສີໄດ້ເອົາຮູບມ້າໄມ້ຄວັດ ແທນຮູບພະໃຫ້ອົງໜຶ່ງ. ຝູງໂຈນດັ່ງກ່າວມີຫົວໜ້າຜູ້ໂຫດຮ້າຍທີ່ສຸດຊື່ວ່າ : ໂອອົດຕາກິມາຣຸ ຕັ້ງຖານທີ່ໝັ້ນຢູ່ພູ ໂອອົດຕັກກິນ ໃກ້ກັບ ເມືອງມິທະຣຸ. ພວກໂຈນຝູງນີ້ພາກັນລົງປຸ້ນສະດົມ ສ້າງຄວາມເດືອດຮ້ອນເຫຼືອທີ່ສຸດໃຫ້ປະຊາຊົນແຖບນັ້ນ.

ຕາມູຣະມາໂຣະ ເຄື່ອນທັບຂອງເຂົາເຂົ້າໄປໃກ້ພູໜ່ວຍນັ້ນ

ໂດຍທີ່ບໍ່ແນ່ໃຈວ່າຈະປາບພວກໂຈນນີ້ໄດ້ແນວໃດ ເພາະວ່າ ທະກາ ທະຫານກໍເມື່ອຍອິດເມື່ອຍອ່ອນຍ້ອນເດີນທາງໄກ ນອກນັ້ນຕົນເອງກໍບໍ່ຮູ້ພູມປະເທດແຖບນີ້ ເພື່ອຈະຈັດວາງຍຸດທະວິທີໃນການຮົບ. ຂະນະທີ່ເຂົາຄິດຍາກຄິດຊາຢູ່ນັ້ນ ບັງເອີນມີມ້າຮອຍໂຕ ປະກອບອານຈົບດີແລ່ນມາຫາກອງທະຫານເຂົາ. ພວກທະຫານດີໃຈຮີບພາກັນຂຶ້ນຂີ່ມ້າແລ່ນພຸ່ງເຂົ້າໃສ່ທີ່ຕັ້ງຂອງຝູງໂຈນ ເຮັດໃຫ້ພວກເຂົາແຕກຊະນະໂມໄປຄົນທິດຄົນທາງ. ເມື່ອພາບແພ້ຂ້າເສິກແລ້ວຄາວນ້ອຍຫນຶ່ງຝູງມ້າກໍເລີຍຫາຍໄປໃສ່ບໍ່ຮູ້ຈັກ. ຕົກຕອນກາງຄືນມາ ຕາມຸຮະມາໂຮະ.. ມາຄືນເບິ່ງຖົງຂອງຕົນ ເລີຍບໍ່ເຫັນຮູບມ້າໄມ້ດັ່ງກ່າວ. ພາຍລູນມາຊາວບ້ານຈຶ່ງໄປພົບຢູ່ເສັ້ນທາງຂົ້ນພູມກັບເມືອງ ມິຫະຣຸ ຊາວບ້ານຮູ້ຈັກວ່າແມ່ນມ້າຂອງພະລືສີເອນຈິນ ຈຶ່ງເອົາມາບົວລະບັດຂັດສີ. ຈາກນັ້ນມາ ເຂົາເຈົ້າກໍພາກັນລັວດຮູບມ້າດັ່ງກ່າວຂຶ້ນອີກ 99 ອົງ ເພື່ອປ້າຍກັນຮັກສາ. ວ່າກັນວ່າ ຮູບມ້າດັ່ງກ່າວນັ້ນ ຊ່ອຍໃຫ້ເດັກນ້ອຍມີເຮື່ອແຮງດີ ແລະ ຊ່ອຍໃຫ້ຄອບຄົວພໍ່ເປົ່າແມ່ເປົ່າມີລູກນຳດ້ວຍ.

# ພະຍີໂຊະຟັດແປ້ງ

ແຕ່ກ່ອນ ເມື່ອຜູ້ຄົນເປັນພະຍາດຊະນິດຕິດແປດຮ້າຍແຮງເພີ່ນຕ້ອງໄລ່ໃຫ້ໄປລີ້ຢູ່ຫົວຫ້ວຍກ້ວຍສຸດຜູ້ດຽວ ໂດຍຕັ້ງຕູບຕັ້ງບູໃບໄມ້ໃບຕອງຢູ່. ເວລາຝົນແຮງນ້ຳນອງຄັບຝັ່ງຄັບເຝືອຍ ຕູບບູກໍເລີຍຖືກນ້ຳພັດໄປ ຄົນເຈັບເລີຍກາຍເປັນພະຍິໂຊະຫີນ. ເວລາໃດຊາວບ້ານເຈັບເປັນ ເຂົາເຈົ້າກໍພາກັນເອົາແປ້ງມາໂອບມາທາພະຮູບດັ່ງກ່າວຕາມບ່ອນທີ່ຕົນເອງມີຄວາມເຈັບປວດ ເພາະເຊື່ອກັນວ່າມັນເຮັດໃຫ້ຫາຍທັນການ.

# ນ້ຳບໍ່ນົມ

ຢູ່ຕົວເມືອງ ໂອຊູຕະກາດະ ແຂວງໂອໂອນຸມະ ມີວັດຫຼັງໜຶ່ງຊື່ ໂຣໂປະ ມີພະຍິໂຊະ ອົງໜຶ່ງສະຖິດຢູ່ຊື່ວ່າ ໂກຢາສຸຍິໂຊະ. ຢູ່ຂ້າງວັດນັ້ນມີນ້ຳບໍ່ ໄຣນິໂປະນິຢູໂກຊັນ. ຍິງຜູ້ໃດທີ່ມີລູກແຕ່ບໍ່ມີ ນ້ຳນົມໄດ້ພາກັນມາດື່ມນ້ຳບໍ່ດັ່ງກ່າວ ແລ້ວນົມກໍຈະມີນ້ຳທັນທີ.

ແຕ່ກ່ອນຢູ່ໃນບ້ານດັ່ງກ່າວມີຍິງຜູ້ໜຶ່ງເປັນຄົນບອກລອນ ສອນວ່າຍຮູ້ຖ້ອຍທ້ອຍຄວາມຊື່ວ່າ ໂອຊາໂປະ. ນາງມີແອນ້ອຍຜູ້ໜຶ່ງແຕ່ກໍຂາດນ້ຳນົມລ້ຽງ. ນາງໄດ້ໄປໄຫວ້ພະຍິໂຊະ ແຫ່ງດັ່ງກ່າວ ເປັນເວລາ 21 ມື້. ແລ້ວມື້ສຸດທ້າຍນາງເລີຍໝົດກຳລັງລົ້ມລົງກັບບ່ອນ ຂະນະນັ້ນເອງ ນາງເລີຍໄດ້ຍິນສຽງດັງມາແຕ່ຟ້າ. " ໂອຊາໂປະເອີຍ ! ເຈົ້າພະອົງຮູ້ດີເຖິງຄວາມຮັກລູກແລະຄວາມໃຈດີຂອງເຈົ້າ ຢູ່ມຸງພະຮູບຂອງເຈົ້າພະອົງ ມີນ້ຳບໍ່ ໃຫ້ເຈົ້າເອົານ້ຳບໍ່ນັ້ນໄປ ຫຸງເຂົ້າກິນໄລຍະ 30 ມື້, ແລະຖ້າບໍ່ພໍກໍໃຫ້ຫຸງອີກ 30 ມື້, ແລ້ວນົມເຈົ້າຈະມີນ້ຳເພື່ອລ້ຽງລູກຂອງເຈົ້າ "

ໂອຊາໂປະປະຕິບັດຕາມ ໃນທີ່ສຸດລາວກໍມີນ້ຳນົມລ້ຽງລູກ ຈົນໃຫຍ່ສູງ.

# ເປັດພະຍາ

ແຕ່ກ່ອນຍັງມີນາຍພານຜູ້ໜຶ່ງ ຢູ່ບ້ານນ້ອຍບ້ານໜຶ່ງໃນເຂດພູດອຍ ມື້ໜຶ່ງ ລາວໄດ້ອອກໄປທ່ຽວປ່າເພື່ອລ່າເນື້ອລ່າສັດ ແຕ່ກໍ່ບໍ່ໜານໃນຂາກັບຄືນເຮືອນ ລາວເລີຍພົບເປັດພະຍາໂຕໜຶ່ງ ຢູ່ແຄມບຶງ, ລາວຫ້າງທະນູ ເລັ່ງຈຸດຍິງ. ລູກທະນູພຸ່ງໄປຖືກເປັດ ພະຍາໂຕນັ້ນຕາຍກັບບ່ອນ. ຂະນະນັ້ນ ກໍ່ມີສຽງຮ້ອງຮ່ຳໄຮຂອງ ຕົວເມັຽດັ່ງມາຈາກພຸ່ມຫຍ້າວ່າ :

" ຟ້າມືດຄຶ້ມ ຜົວມິ່ງຕາຍເສັຽ ແລ່ນ ເມັຽເປັນພອຍບາບໃດມາຕ້ອງ ".

ບິດຫນຶ່ງເລີຍມີແສງໄຟຂຽວງປະກົດຂຶ້ນຢູ່ກາງບິງ. ນາຍພານໃຈບໍ່ທ່ຽງ ເລີຍຣີບແລ່ນຫນີ. ແຕ່ວ່າສຽງໃຫ້ຮ່ຳໄຮຂອງເປັດພະຍາໂຕເມັຽ ຍັງແວ່ວຕາມມາຢູ່. ນາຍພານໃຈສະທ້ານເລີຍກິ່ງທະນູຍິງແສງດັ່ງກ່າວມອດໄປແລະສຽງໄຫ້ກໍງຽບ.

ຕົກມື້ອື່ນມາ ນາຍພານເລີຍນຳມາເບິ່ງຜົນຂອງການຍິງ ເຫັນເປັດໂຕເມັຽຫາຍໃຈປາຢູ່ ເພາະຖືກສອນ ນາຍພານຈັບຍົກຂຶ້ນ ແຕ່ປີກຊ້າຍຂອງມັນພັດຍັງກອດເອົາຫົວຂອງຜົວໄວ້ຢູ່ຢ່າງບໍ່ວາງ. ນາຍພານກະດາກໃຈເລີຍ ປະເປັດໄວ້ກັບທີ່. ເຂົາຮູ້ສຶກສະທ້ານທ້ອນໃຈຈາກຄວາມຮັກອັນບໍລິສຸດຂອງເປັດ ຈຶ່ງຕັດສິນໃຈຫນີອອກຈາກ ບ້ານເດີມຂອງຕົນໄປຢູ່ທີ່ອື່ນ.



# ແມວສີແດງ ຂອງໄຊເບເອະໂດນ

ທີ່ບ້ານ ຣິເນໂກມັດສຸ ແຫ່ງເມືອງນິຣອນມັດສຸສິ ມີວັດເກົ່າແກ່ຫຼັງໜຶ່ງ ເຊິ່ງອ້ອມຮອບໄປດ້ວຍຕົ້ນໄມ້ໃຫຍ່ຫຼາກຫຼາຍຊະນິດ. ທີ່ໂກນຂອງຕົ້ນໄມ້ຕົ້ນໜຶ່ງ ຝູງເຫວັນໝູ່ໜຶ່ງພາກັນມາເຕົ້າໂຮມ ໃນຕອນກາງຄືນ.

" ເພື່ອລໍ້ຖ້າການມາຂອງແມວແດງຂອງທ່ານໂຊເບເອະໂດນ ພວກເຮົາມາຟ້ອນກັນເທາະ "

ແລ້ວພວກເຫວັນກໍເລີຍພາກັນຮ້ອງເພງແລະຟ້ອນກັນເປັນການໃຫຍ່. ຢູ່ຂ້າງໆວັດດັ່ງກ່າວ ມີເຮືອນຂອງທ່ານ ໂຊເບເອະໂດນ. ແລ້ວໜຶ່ງແມວແດງຂອງທ່ານ ຄວາເອົາຜ້າເຊັດມືທີ່ຖີ້ມຢູ່ເຮືອນ ຄົວມາມັດຫົວແລ້ວກໍຟ້ອນ. ເມັຽຂອງທ່ານໂຊເບເອະໂດນ ເຫັນລີລາທ່າຟ້ອນຂອງແມວອ່ອນຊ້ອຍແລະງາມດີ ຈຶ່ງແປກໃຈ. ເວລາຜູ້ເປັນ

ຜົວ ທ່ານໂຊເບເອະໂດນ ກັບຈາກວຽກທາງນອກມາເຮືອນ ເມັຽເລີຍເລົ່າເລື່ອງນີ້ສູ່ຟັງ. ແມວຮ້ອງ "ແມວໆ" ແລ້ວກໍ່ໄປນອນ ຢູ່ຄີໄຟ. ທ່ານໂຊເບເອະໂດນ ໄດ້ຍິນຄຳເວົ້າຂອງເມັຽ ຈຶ່ງສະແດງຄວາມບໍ່ພໍໃຈ ເພາະເຂົາບໍ່ຢາກໄດ້ແມວແປກປະຫຼາດແນວນັ້ນ ຈຶ່ງເອົາໄມ້ໄລ່ຕີແລະວ່າຈະຂ້າມັນຖິ້ມ. ແມວຮີບແລ່ນລັອດແລັດເຂົ້າໄປຕາມໝໍ້ແຫກແຕກກະໂປະ ຂຶນເມືອເພດານ ແລ້ວກໍ່ກາງຕາໝງເບິ່ງຜູ້ເປັນເຈົ້າຂອງແບບກິນເລືອດກິນເນື້ອພ້ອມທັງເວົ້າວ່າ :

" ກູບໍ່ໄດ້ເຮັດຜິດຫຍັງມຶງຈັກເທື່ອ ກູມີແຕ່ຟ້ອນຫໍ່ມັນ. ມຶງຈະຂ້າກູຊັ້ນບໍ ? ໃນກໍລະນີແນວນັ້ນ ມັນແມ່ນກູຈະຂ້າມຶງ " ທ່ຽງຄືນຂອງມື້ອື່ນມາ ເລີຍມີສຽງດັງໂຄມຄາມຢູ່ຄີໄຟ ທ່ານໂຊເບເອະໂດນມຶນຕາຂຶ້ນເຫັນແສງຕາແດງເມົ້າໆຢູ່. ຄາວໜຶ່ງກໍ່ມີໄຟແສງຂຽວປະກົດວ່າໄໝ້ຂົນ.

" ໄຟໄໝ້ " ທ່ານໂຊເບເອະໂດນຮ້ອງຂົ້ນ ຈົນເຮັດ ໃຫ້ເມັຽຕື່ນທັງຫຼັບທັງຝັນ. ແລ້ວທ່ານໂຊເບເອະໂດນ ກໍ່ແລ່ນອອກນອກເຮືອນ ເຫັນຝູງເຫງັ້ນພາກັນຟ້ອນອ້ອມແມວຢູ່. ທ່ານຢ້ານໂພດເລີຍກະໂດດລົງໄປໃນນ້ຳຫ້ວຍ. ຈາກນັ້ນມາ ທ່ານເລີຍປ່ວຍໜັກ.

# ເທວັນແຕ່ງດອງ

ທີ່ປະເທດຍີ່ປຸ່ນເມື່ອເຫັນອັນໃດທີ່ບໍ່ສາມາດຈະບັງເກີດຂຶ້ນ ໃນສະພາບທີ່ມັນເປັນຢູ່ຂະນະນັ້ນ ຕົວຢ່າງຟ້າແດດແດ່ນແດ ນໍກວ່າຝົນຈິຕົກ ຊາວຍີ່ປຸ່ນມັກອຸທານຂຶ້ນວ່າ " ເທວັນແຕ່ງດອງ " ( ຖ້າເປັນລາວເຮົາກໍເວົ້າວ່າ " ຂວງ " )

ເລົ່າກັນວ່າແຕ່ກ່ອນແຕ່ກີ້ ປາງຟູຢີ (1) ຍັງພົ່ນແປວໄຟອອກມາຢູ່ ຍັງມີບັກຈ້າບັກໜຶ່ງ ຍ່າງໄປຕາມສັນພູ ເລີຍມາບເຫັນຜູ້ສາວງາມປະມານຊາວຄົນຢູ່ຕໍ່ໜ້າມັນ.

" ຈ້າ ! ຈັ່ງແມ່ນງາມກັລ ! " ມັນອຸທານຂຶ້ນ. ພາຍດຶງກ່າວພາໃຫ້ມົນວຽນຫົວທັນທີ ແລ້ວກໍ່ຍ່າງຕາມສາວທັງຫຼາຍ ນັ້ນໄປ ສາວພວກນັ້ນພາກັນເຢາະຢື້ອງຟ້ອນເຂົ້າໄປໃນປ່າ ແລ້ວກໍດັດເອົາຍອດໄມ້ມາທັດເກົ້າຜົມ. ທ້າວຈ້າຍັງພົກເບິ່ງຕໍ່ໄປ ເຫັນພວກ ເອົາ


S. Bounthiene
2.89

ເປັນຕວັນໝອງໃສ່ ກິໂມໂນ ຊຸດແຕ່ງຕອງ ລົ່ງອອກມາຈາກພຸ່ມຕົ້ນ ໄຜ່ ແລ້ວກໍພາກັນຍ່າງເບັດໜ້າເຂົ້າໄປໃນເຮືອນໃຫຍ່ຫຼັງໜຶ່ງເຊິ່ງ ມຸງດ້ວຍເຟືອງ ທ້າວຈາກໍຕາມໄປແລ້ວໄປລ້ຽມຕາມປ່ອງຝາເຮືອນ ເບິ່ງພວກເຂົາ. ໃນເຮືອນມີພາອາຫານໃຫຍ່ ປະດັບປະດາຕົກແຕ່ງ ສຳລັບພິທີສົມລົດ. ມັນແນມຢູ່ຢ່າງບໍ່ອິ່ມຕາອິ່ມໃຈຢ່າງດົນນານ ຈົນ ຄາວໜຶ່ງຮູ້ສຶກວ່າເມື່ອຍສະໝອງ ຮູ້ສຶກຢາກສູບຢາພັກຜ່ອນ ຈາກ ການເບິ່ງການຊົມ. ເຂົາແກວ່ງຫົວໄປມາ ຮູ້ສຶກວ່າສະໝອງອຳອຶ້ງ ຂອງເຂົາຄ່ອຍໆຄາຍຄວາມເຄັ່ງ ກາຍເປັນສົດໃສຂຶ້ນມາທັນທີ ເຂົາ ຫຼ້ຽວພຸ້ນຫຼ້ຽວພີ້ ແລ້ວກໍເຫັນວ່າຕົນເອງພວມຊອງເບິ່ງປ່ອງຂອງ ຕະ ກຽງທີ່ນີ້ຢູ່. ບາ ! ບາ ! ການແຕ່ງຕອງຂອງຕວັນນັ້ນເປັນພຽງ ແຕ່ການລວງຕາທໍ່ນັ້ນ.



---

(1) ພູຢີ ແມ່ນພູໄຟທີ່ມອດໄປແລ້ວປັດຈຸບັນເປັນທິວທັດງາມ ທີ່ສຸດ ແຫ່ງໜຶ່ງຂອງຍີ່ປຸ່ນ.

# ຖ້ວຍຈານຫາຍ

ແຕ່ກີ້ແຕ່ກ່ອນປາງພໍ່ເຖົ້າມ່ອນຍັງເປັນເດັກນ້ອຍ ຍັງມີ ເສດຖີຄົນໜຶ່ງຊື່ວ່າ ກິໂຢຊາເຂມອນ ຢູ່ບ້ານ ອິຊິດາເກ ເຂົາຜູ້ນີ້ມີຄວາມພໍໃຈນຳຖ້ວຍຈານປະເພດທີ່ຫາຍາກຂອງເຂົາ ເຊິ່ງມີຢູ່ດ້ວຍກັນ ສິບຊຸດ. ຖ້ວຍຈານພວກນີ້ບໍ່ສາມາດມີຢູ່ແຫ່ງໃດໆເລີຍໃນໂລກ ນັບທັງປະເທດຈີນດ້ວຍ. ເສດຖີຜູ້ນີ້ ມັກຈະເອົາອອກມາອວດສະເໝີ ເວລາໝູ່ຫຼືແຂກຄົນມາຢາມ ເພື່ອໃຫ້ເຂົາເຈົ້າຍ້ອງຍໍສໍລະເສີນ.

ມາວັນໜຶ່ງພາຍຫຼັງທີ່ໄດ້ເອົາອອກມາສະແດງໃຫ້ເພື່ອນຝູງຊົມແລ້ວ ແລະເອົາມ້ຽນໄວ້ໃນຕູ້ຮຽບຮ້ອຍແລ້ວ ເຂົາເລີຍສັງເກດເຫັນວ່າ ຈານງາມຂອງເຂົາຂາດໄປໃບໜຶ່ງ ເຂົາຈຶ່ງຮີບອອກໄປ ຖາມຄົນໃຊ້ຂອງເຂົາຊື່ວ່າກິກຸ. ສ່ວນນາງກິກຸກໍ່ຕອບວ່າ :

" ຂ້ານ້ອຍບໍ່ຮູ້ຈັກເລີຍ ຍາແມ່ເພິ່ນເປັນຜູ້ມ້ຽນ ! "

ຜູ້ເປັນຜົວໄປຖາມຜູ້ເປັນເມັຽແລະກໍໄດ້ຄຳຕອບວ່າ :

" ຂ້ອຍບໍ່ຮູ້ ເພາະຄົນໃຊ້ເປັນຜູ້ມັນຮົບ "

" ຂ້ອຍຖາມມາແລ້ວ ມັນວ່າເຈົ້າເປັນຜູ້ມັນຮົບ "

" ແມ່ນຫຼັງ ອີ່ຊາດຊົ່ວ ໂຕມັນຮົບແທ້ນມາວ່າເພິ່ນມັນຮົບ "

ຈາກນັ້ນເສດຖີເລີຍມາກ່າວໂທດໃສ່ຄົນໃຊ້ ຫາວ່າຄົນໃຊ້ບໍ່ສັດຊື່ແລະບໍ່ດີ. ກິກຸທົນບໍ່ໄດ້ເລີຍໄປກະໂດດລົງນ້ຳສ້າງຕາຍ. ຕັ້ງແຕ່ນັ້ນມາ ເມື່ອຮອດຕອນກາງຄືນດຳມືດມາ ຜູ້ຄົນກໍ່ມັກໄດ້ຍິນສຽງ ນັບແກມສຽງໄຫ້ ດັງອອກມາຈາກນ້ຳສ້າງຫນ່ວຍນັ້ນ " ຫນຶ່ງໃບ ສອງໃບ ສາມໃບ.....ແປດໃບ ເກົ້າໃບ " ແລ້ວກໍ່ງຽບຫາຍໄປ ສະພາບເປັນແນວນີ້ໄດ້ແກ່ຍາວມາເປັນເວລາ 3 ປີ.

ເມື່ອຮູ້ຂ່າວຮ້າຍຂອງລູກສາວຂອງຕົນແນວນັ້ນ ຜູ້ເປັນແມ່ທີ່ແກ່ຊະລາແລ້ວ ພ້ອມດ້ວຍເພື່ອນຂອງລູກສາວນັ້ນເອງຜູ້ຫນຶ່ງຊື່ວ່າສັນເປ ຈຶ່ງພາກັນເດີນທາງມາທີ່ ຊິໂກກຸ ເພື່ອທຳການໃສ່ບາດຢາດນ້ຳໄຫວ້ວອນສິ່ງສັກສິດທັງຫຼາຍ ເພື່ອເຮັດໃຫ້ວິນຍານຂອງກິກຸໄປເກີດ ທີ່ດີເຖິງສຸກ. ແຕ່ພາຍຫຼັງທີ່ເດີນເລາະໄຫວ້ພະໃນວັດຕ່າງໆ 88 ແຫ່ງຂອງຊິໂກກຸແລ້ວ ຜູ້ເປັນແມ່ເລີຍຫມົດບຸນລົງທີ່ ຮາຣິມະ. ທ້າວສັນເປຈຶ່ງກໍ່ທາດດູກໄວ້ໃຫ້ ແລ້ວກໍ່ຕັ້ງເຮືອນຊານຢູ່ໃກ້ໆທາດດູກນັ້ນເລີຍ ຂະນະນັ້ນ ມີຍິງສາວຄົນຫນຶ່ງງາມທີ່ສຸດປະກົດຕົວຂຶ້ນໃນບ້ານແຫ່ງນັ້ນ ຊາວບ້ານເຫັນນາງສົມຄູ່ກັບທ້າວສັນເປ ຈຶ່ງຕົກລົງແຕ່ງງານໃຫ້ເຂົາ

ທັງສອງເປັນຄູ່ຜົວເມັຽກັນ. ທັງສອງຢູ່ກັນຢ່າງມີຄວາມສຸກ ຈົນມາ ຮອດມື້ໜຶ່ງຍາທ່ານໝື່ຊໃນວັດແຫ່ງໜຶ່ງຂອງ ຣາຊິມະ ຈັດພິທີຣົດ ບູນສຳຄັນຂຶ້ນ. ທັງສອງຜົວເມັຽກໍພາກັນໄປໄຫວ້ພະໄຫວ້ເຈົ້າ ນຳພີ່ ນ້ອງບ້ານຊ່ອງ ຄາວໜຶ່ງ ຟ້າເລີຍມືດ ແລະແຜ້ດຜຽງລົງມາພ້ອມ ທັງຝົນໜ່ຳລົງໝົດແຮງ. ທ້າວສັນປສະຫຼົບໄປ ພໍຮູ້ສະຕິຂຶ້ນມາ.. ເລີຍບໍ່ເຫັນເມັຽຂອງຕົນ ການທັງມວນເຫັນແຕ່ຖ້ວຍຈານໃບໜຶ່ງ ຢູ່ ບ່ອນທີ່ເມັຽນັ່ງ. ສັນປເຂົ້າໄປຫາຍາທ່ານສາທຸໃຫຍ່ ເພິ່ນ ເລີຍ ບອກວ່າ : " ເມັຽຂອງທ່ານໄດ້ຂຶ້ນເມືອສະຫວັນແລ້ວ ແລະ ຈານ ໃບນີ້ ແມ່ນຈານທີ່ມັນຂາດໃນຊຸດຈານຂອງທ່ານເສດຖີຫັ້ນ " ສັນປ ພຶມພຳອອກມາ :

" ກີກູເມືອສະຫວັນແລ້ວ ....! "

ແລ້ວເຂົາກໍເອົາຖ້ວຍຈານໃບນັ້ນບູຊາໄວ້ເປັນສົມບັດຂອງວັດ ຕັ້ງແຕ່ ນັ້ນມາ.

▲

# ຂັ້ນໄດຜີຍັກ

ທ້າວບູໄຕໄດ້ນຳເອົາຍັກມາແຕ່ປະເທດຈີນ 5 ໂຕແລະໄດ້ໃຊ້ພວກມັນເຮັດວຽກທຸກງານແຕ່ເຊົ້າຍັງຄ່ຳ ຢ່າງບໍ່ມີວັນພັກຜ່ອນເລີຍ.. ມາໃນປີໜຶ່ງ ເມື່ອຮອດ 15 ຄ່ຳຂອງເດືອນຈຽງ ທ້າວເລີຍ ອະນຸຍາດໃຫ້ພວກມັນພັກມື້ດຽວ. ພວກມັນທັງ 5 ພາກັນເຂົ້າໄປໃນ ໝູ່ບ້ານແຫ່ງໜຶ່ງ ແລ້ວກໍ່ບັງຄັບໃຫ້ຊາວບ້ານເອົາເຫຼົ້າມາສູ່ກິນ. ເມື່ອກິນເຫຼົ້າ ມຶນເມົາແດ່ແລ້ວ ພວກມັນກໍ່ຂົ່ມຂູ່ ໃຫ້ປະຊາຊົນເກນ ເອົາສາວແລະເດັກນ້ອຍມາໃຫ້ພູນກິນເປັນປະຈຳ. ຊາວບ້ານກໍ່ ຕົກລົງເພາະຄວາມຢ້ານກົວ ແຕ່ກໍ່ມີຂໍ້ແລກປ່ຽນດ້ວນ : ພວກຍັກທັງ 5 ຜູ້ອວດໂຕວ່າມີລິດເດດນັ້ນ ຕ້ອງສ້າງຂັ້ນໄດຫີນຂຶ້ນເມືອເທິງພູ ພັນຂັ້ນໃນຄືນດຽວໃຫ້ແລ້ວ ຄືວ່າ ໄກ່ຂັນເລີຍ ອັນເປັນຂີດໝາຍ ຂອງມື້

ໃໝ່ນັ້ນ ຕ້ອງໃຫ້ກິດຈະການທຸກຢ່າງສຳເລັດ. ພວກຍັກພາກັນ ຫົວຂຶ້ນພ້ອມທັງເວົ້າວ່າ " ກິນກ້ວຍຍາກປອກ "

ພວກຍັກໄດ້ພາກັນສ້າງຂັ້ນໄດຫີນໝົດຄືນ ແລະສ້າງໄດ້ 999 ຂັ້ນແລ້ວ ຍັງແຕ່ຂັ້ນດຽວທໍ່ນັ້ນຈະແລ້ວ. ເວລານັ້ນ ຊາວບ້ານຜູ້ຫນຶ່ງເຊິ່ງເປັນນັກສອນໄກ່ຂັນ ກໍ່ຮ້ອງຂັນຂຶ້ນ ໂກເກັກໂກໂກ...( ສຽງໄກ່ຍີ່ປຸ່ນຂັນ ) ເຮັດໃຫ້ໄກ່ທັງບ້ານຂັນຕາມ. ເປັນອັນວ່າໄກ່ ຂັນເລີຍໄປແລ້ວພວກຍັກຍັງເຮັດຂັ້ນໄດບໍ່ແລ້ວ ແລະກໍ່ຕ້ອງເສັຽແປ້ນພັນ ດຽວນີ້ຂັ້ນໄດດັ່ງກ່າວຍັງຄົງສະພາບໃຫ້ເຫັນຢູ່ຄືເກົ່າເດີມ.





# ຕາທຶບ

ແຕ່ກີ້ແຕ່ກ່ອນປາງແມ່ນອອນບໍ່ທັນເອົາຜົວ ຍັງມີຊາຍຕັດຟືນ ຜູ້ໜຶ່ງ ມີເມັຽແລ້ວ ແຕ່ຍັງບໍ່ທັນມີລູກ. ເກີດເປັນວັນພັນເປັນເໝີ້ຊາຍຜູ້ນັ້ນມີແຕ່ອອກປ່າຫາຟືນ ເພື່ອເອົາໄປຂາຍໃນເມືອງ. ຕົກມາມື້ໜຶ່ງ ເມື່ອລາວກັບມາແຕ່ຕັດຟືນຕອນແລງ ເລີຍສັງເກດເຫັນເມັຽຮັກຂອງຕົນມີຄວາມຫງ່ວມເຫົງົາ ບໍ່ສົດບໍ່ຊື່ນ ຈຶ່ງຕັ້ງຂໍ້ສົງໄສຂຶ້ນວ່າ : "ເມັຽກູເປັນຫຍັງ ຈຶ່ງຕ່າງຕາແທ ? ຫຼືວ່າລັກມີ້ຊູ້ບ່ອງຫຼັງເວລາກູບໍ່ຢູ່ບໍ່ຮູ້ " ຄິດເຊັ່ນນັ້ນແລ້ວ ວັນໜ້າລາວກໍ່ເລີຍໄປຕັດຟືນໃນປ່າ ອີກຕາມເຄີຍແຕ່ກໍ່ຮີບກັບມາໄວກວ່າປົກກະຕິ ເພື່ອຈະເບິ່ງວ່າ ມີເຫດການຫຍັງເກີດຂຶ້ນທີ່ເຮືອນ " ເຂົາໄດ້ຄ່ອຍໆຈອບມາ ເຫັນ ເມັຽຕົນກັບອ້າຍບ່າວເຈົ້າທີນເງິນກູ້ ກຳລັງປະລູບປະໂລມ ຈູບດົມຊົມຮັກກັນຢູ່ ດ້ວຍຄວາມສະເໜ່ຫາ. ທັນໃດນັ້ນໄຟຮ້ອນ ກໍ່ມາເຜົາຕົວໃຈຂອງລາວ ເຮັດໃຫ້ຄວາມແຄ້ນວູບວູ່ຂຶ້ນທັນທີ. ລາວຄວ້າໃສ່ ຂວານ

ເພື່ອຈະກະໂດດໄປຜ່າຫົວຊາຍຊູ້ບັກນັ້ນໃຫ້ຕາຍກັບມືແຕ່ແລ້ວ ລາວກໍ
ຄິດເຖິງສຸພາສິດບົດໜຶ່ງຂອງຍີ່ປຸ່ນທີ່ວ່າ : " ຕັ້ນກິ່ວຊູຂອນກິ "...
( ຄວາມບໍ່ອົດກັ້ນນັ້ນ ນຳຄວາມເສັຽຫາຍມາໃຫ້ແກ່ເຮົາແລ )(1)
ລາວອົດກັ້ນເຂົ້າໄປລີ້ຢູ່ແຈຄົວ ແຕ່ຫົວໃຈກໍຍັງເປັນໄຟຢູ່. ລາວເລີຍ
ອອກມາຈາກຫັ້ນ ແລ້ວເລີຍພົບເປືອກຂອງຕາໄມ້ ພາໃຫ້ລາວມີ ຫົວ
ຄິດອອກທັນທີ. ລາວໃຫ້ຊື່ແກ່ຕາໄມ້ຂອງລາວວ່າ : " ຕາທິບ ".
ຈາກນັ້ນແລ້ວ ລາວກໍເຮັດໃຫ້ມີສຽງດັງມະລະຄະດິ ອະຣິອະແໜມຂຶ້ນ
ພ້ອມທັງເອີ້ນໃສ່ເມັຽວ່າ : " ກະກາ ! (ເມັຽ)ຂ້ອຍກັບມາແລ້ວ
ລາວທັງເວົ້າ ທັງຕາງຕິປະໃຫ້ເມັຽຂອງຕົນມີເວລາເຊື່ອງຊາຍຊູ້ນຳ
ເຊິ່ງແນ່ນອນຕ້ອງເອົາເຊື່ອງໄວ້ໃນປຸ່ມ (2) ເສື້ອຜ້າ. ເມື່ອກະ
ວ່າສົມຄວນແກ່ເວລາແລ້ວ ລາວກໍເຂົ້າໄປ.

" ເຈົ້າກັບມາໄວແທ້ ? "

" ເອີ ! ຂ້ອຍມື້ອື່ນຈະບອກໃຫ້ເຈົ້າຮູ້ດີວ່າ : ເຈົ້າອາຣັກ

(1) ລາວ : " ເກົ້າອົດເກົ້າເຍື້ອນຫາກຊິໄດ້ທ່ອນຄຳ "
(2) ກຸມ : ແມ່ນຂອງໃຊ້ເຄິ່ງຫັບ ເຄິ່ງກະຕາ ເປັນຮູບຫີບສີ່ຫຼ່ຽມ
ຍາວ ແຕ່ສູງມີຝາອັດສະເພາະຂອງລາວເຮົານັ້ນເພິ່ນ ເຮັດດ້ວຍ
ຫວາຍ.

ເທິງພູເພິ່ນໄດ້ມອບ "ຕາທິບ" ໃຫ້ຂ້ອຍ. ເມື່ອເຮົາຊ່ອງເບິ່ງຜ່ານ ປ່ອງນີ້ ເຮົາກໍຈະເຫັນໝົດທຸກສິ່ງທຸກຢ່າງ. ເອີ ! ໂຕຢ່າງ ຂ້ອຍ ຍັງເຫັນວ່າ ຢູ່ໃນປຸ່ມຫັ້ນມີອັນໃດອັນໜຶ່ງຜິດປົກກະຕິ. ເມັຽເຮີຍ ! ເອົາເຊືອກມາໃຫ້ດູ ! "

ເມື່ອນາງເມັຽໄດ້ເຊືອກມາແລ້ວ ລາວກໍເອົາເຊືອກມັດປຸ່ມນັ້ນ ແບກອອກໄປໃນເມືອງ ຍ່າງເບັດໜ້າເຂົ້າຫາຫ້າງຮ້ານຂອງ ເຈົ້າ ທິນເງິນຫຼູ້.

" ທ່ານຜູ້ຊາຍເພິ່ນຢູ່ບໍ່ ? "

" ບໍ່ຢູ່ເພິ່ນອອກເຮືອນໄປແຕ່ເຊົ້າ " ຄົນຮ້ານຕອບ.

" ເອົາເງິນມາຕຸບເອົາປຸ່ມຂ້ອຍນີ້ດູ 50 ຫຼຽນ "

" ເອີ້ ! ອັນຊ່ຳປຸ່ມແນວນີ້ ໝັນດຽວກໍບໍເອົາ "

ແຕ່ຂະນະນັ້ນຜູ້ເປັນນາຍທີ່ຢູ່ໃນປຸ່ມ ເລີຍຄາງອອກໃສ່ລູກຮ້ານ ຂອງຕົນວ່າ : " ເອົາໃຫ້ລາວ 50 ຫຼຽນສາ " ແລ້ວລູກຮ້ານ ກໍ ເອົາເງິນຈຳນວນດັ່ງກ່າວນັ້ນໃຫ້. ເມື່ອຊາຍຕັດຟືນໄດ້ເງິນຈຳນວນ ນັ້ນແລ້ວກໍກັບບ້ານດ້ວຍຄວາມດີໃຈ.

# ປີ້ງສົບໂປກ

ແຕ່ກີ້ແຕ່ກ່ອນ ຍັງມີຊາວນາຜູ້ຫນຶ່ງຊື່ວ່າ ກິວເບະ ຢູ່ບ້ານ ໂອໂປໄນ ເປັນຄົນດຸຫມັ່ນຂະຫຍັນພຽນ ເຮັດວຽກຢ່າງບໍ່ມີເວລາ ພັກພ່ອນເລີຍຈົນເຮັດໃຫ້ລາວຈັບແອວຫນັກ. ລາວມັກໄປໄຫວ້ພະຢື້ໂຊ ເຊິ່ງຕັ້ງຢູ່ເສັ້ນທາງໄປມາຂອງລາວເລື້ອຍ. ແຕ່ເວນກຳຂອງ ລາວຍັງມີ ເມັຽແລະລູກຂອງລາວຊ້ຳພັດຕາຍໄປ ເຮັດໃຫ້ລາວຕ້ອງຫາບແບກວຽກງານຫມົດ ບໍ່ມີໃຜຊ່ອຍຕີນຊ່ອຍມື ອັນເຮັດໃຫ້ລາວຍິ່ງ ໄປໄຫວ້ພະຢື້ໂຊ ຫຼາຍຂຶ້ນຊຸກໄຊ. ມື້ຫນຶ່ງລາວເຫັນຊາຍຫນຸ່ມ ຜູ້ຫນຶ່ງເປັນຄົນງາມຫນ້າຕາເປີ່ງປີ່ງ ປະກົດໂຕຂຶ້ນມາ ເພື່ອຊ່ອຍລາວ ໄຖນາ. ຊາຍຫນຸ່ມຜູ້ນັ້ນເຮັດວຽກດ້ວຍຄວາມຂະຫຍັນ ໄຖນາຈົນ ແລ້ວໃນມື້ດຽວ. ເວລານັ້ນຊາຍຫນຸ່ມເລີຍຖືກປີງກັດ. ເມື່ອກິວເບະຢາກ

ຂອບໃຈນຳເຂົາ ເຂົາກໍເລີຍຫາຍໄປ. ກິວເບະ ບໍ່ພໍໃຈ ເລີຍໄປໄຫວ້ພະຢື່ໂຊອີກ. ເວລານັ້ນ ກິວເບະມີຄວາມປະຫຼາດໃຈຫຼາຍເມື່ອເຫັນຕີນຂອງພະຢື່ໂຊ ມີຂີ້ຕົມຕິດແລະມີເລືອດຕິດຢູ່ຂາພ້ອມ ເຊິ່ງມາຈາກປີງກັດ. ເລີ່ມຕັ້ງແຕ່ນັ້ນມາ ປະຊາຊົນຍິ່ງນັບຖືພະຢື່ໂຊແລະປີງກໍບໍ່ກັດຊາວບ້ານນັ້ນອີກເລີຍ ເພາະວ່າ ພະຢື່ໂຊໄດ້ເອົາໄຟຈູດ ສົບມັນຈົນໂປກ.



# ນັກປຼົ້ນສຳນອນ ແລະ ມ້າແປດໂຕ

ໃນປາງກ່ອນຍັງມີເຈົ້າຫົວອົງໜຶ່ງທີ່ມີຄວາມຮັກໄຄ່ມ້າ ຂອງເພິ່ນທີ່ສຸດ ເຊິ່ງມີຢູ່ທັງໝົດແປດໂຕ. ມີຜູ້ຄົນມາກໜ້າຫຼາຍຕາ ມາຖາມຊື້ ແຕ່ເພິ່ນກໍ່ບໍ່ໄດ້ຕົກລົງຂາຍໃຫ້ເລີຍ.

ວັນໜຶ່ງທ້າວບາກູໂຣະ ຄຶດຢາກຈະໄດ້ ແຕ່ກໍ່ບໍ່ມີປັນຍາຈຶ່ງໄດ້ເຂົ້າເປິກສາຫາລືນຳເພື່ອນຜູ້ສະໜິດສະໜົມ. ທັງຝ່າຍເພື່ອນບອກວ່າ : " ມີແຕ່ໃຊ້ເລ່ກົນເທົ່ານັ້ນ ຈຶ່ງຈະຊະນະໄດ້ " ຈາກນັ້ນມາທ້າວບາກູໂຣະ ກໍ່ເລີຍມາຊອກຫາວິທີ.

ວັນໜຶ່ງມັນໄດ້ໄປພົບສາທຸວັດອົງນັ້ນ ແລ້ວກໍ່ເວົ້າວ່າ :

" ສາທຸ ສາທຸ ! ລູງໂກເຫ ມີງູໂຕໜຶ່ງສິບລີ້,(1) ບໍ່ເຊື່ອມາເບິ່ງແມ ! "

" ໂອຍ ! ໃຜຈະມີງູຍາວສິບລີ້ ເປັນໄປບໍ່ໄດ້ ຖ້າມີແທ້ກູຈະເອົາມ້າໃຫ້ມຶງທັງ 8 ໂຕເລີຍ "

ທັງສອງພາກັນໄປທີ່ເຮືອນຂອງລຸງໂກເຕ ແຕ່ກໍ່ບໍ່ພົ້ງ ພົ້ງຮອ ຫຍັງເລີຍ.

" ບາກູໂຣະ ! ເຈົ້າວ່າຈັ່ງໃດ ? ບໍ່ເຫັນເມີງມີ້ງຮອ ຫຍັງ ເລີຍ ".

" ມີລະບໍ ! ມີໝາກໂຄິສອງໜ່ວຍ ( ໂຄິແມ່ນຊຸທີ່ສອງ ຂອງໝາກນິຄາຊຸຣິ ແປວ່າໝາກແຕງຂົມ ເຊິ່ງກົ່ມຊູນອຍອີກວ່າ " ງູນີກາກາ " ແຕ່ໂຄິຍັງແປວ່າຫ້າລາດ້ວຍ ).

ດັ່ງນັ້ນໝາກໂຄິສອງໜ່ວຍເທົ່າກັບ 1 ໂຄລີ + 1 ໂຄລີ= 10 ລ້ ".

ເຈົ້າຕົວໜ້າຈືດລົງທັນທີເມື່ອຕົກຖືກແຮ້ວບັນຫາ ຂອງເຂົາ. ເພື່ອນກັບວັດດ້ວຍຄວາມເສົ້າໃຈ.

ເວລານັ້ນຍັງມີຈົວອີກໜຶ່ງ ສັງເກດເຫັນຄວາມເສົ້າໂສກຂອງ ເຈົ້າຕົວເຊິ່ງເປັນພະອາຈານຂອງຕົນ ເລີຍເຂົ້າຖາມ. ເມື່ອຮູ້ຕົ້ນ ສາຍປາຍເຫດດີແລ້ວ ຈົວເລີຍເຕືອນເຈົ້າຕົວວ່າ :

" ຂໍໃຫ້ສາທຸໃຫ່ຍອຸ່ນອ່ຽນໃຈໄວ້ ຂະນ້ອຍຈະແກ້ໄຂ ເລື່ອງນີ້ ເອງ " ຕົກມື້ໃໝ່ມາ ເມື່ອທາວບາກູໂຣະ ມາຫາເຈົ້າຕົວ ທີ່ວັດ ເພື່ອຈະເອົາມ້າ ຈົວເລີຍໄປຊອກໄດ້ມາຈອຍໆໂຕໜຶ່ງມາ ແລ້ວກໍ ເອົາຖ້ວຍຈານໃຫ່ຍໃບໜຶ່ງມັດໃສ່ຫາງຂອງມ້າ ໃນທຳນອງທີ່ໃຫ້ມາ

ນັ້ນແກ່ນັ້ນມາ.

" ສາທຸເຣີຍ ! ສາທຸຕ້ອງເອົາຣາຈິ (ແປດ)ຣິຈິ (ໂຕ)ໃຫ້ຂະນ້ອຍ " ແລ້ວເຈົ້າຫົວເລີຍຕ່ອບວາ :

" ເຈົ້າເຫັນບໍ່ ? ຢູ່ຕໍ່ໜ້າເຈົ້າຫັ້ນເດ ຣາຈິ (ຖ້ວຍ) ຣິຈິ (ແກ່) ອູ້ມ້າ (ນ້າ).

ແລ້ວທ້າວຍາກູໂຣະ ເລີຍເຫຼືອງກັບໄປບ້ານຂອງຕົນຄືນ ດ້ວຍຄວາມເສົ້າໃຈ ເພາະຖືກຕົ້ມ.

( ນິທານຄົນທານຊຽງໝ້ຽງສ້າງພະເຈົ້າຄຳແປດສອກເລີຍ ສ້າງພະເຈົ້າໄມ້ນ້ອຍໆແລ້ວ ເອົາຄຳແປດແຂນສອກເນື່ອຖວາຍເຈົ້າຊວດ.



(1) ລົຫົວໜ່ວຍວັດແທກລວງຍາວຂອງຈີນ-ຍີ່ປຸ່ນເຊິ່ງເທົ່າກັບ...

# ຫອຍສັງ

ແຕ່ກ່ອນແຕ່ຫຼັງ ຍັງມີສອງເຖົ້າພໍ່ເປົ່າແມ່ເປົ່າຜົວເມັຽຢູ່ນຳກັນມາຕັ້ງແຕ່ດົນນານ ຢາກໄດ້ລູກເຕົ້າມາສືບໍ່ນແທນແນວຈັກດົນກໍບໍ່ໄດ້. ຕົກມາມື້ໜຶ່ງສອງເຖົ້າພາກັນໄປຕັດຟືນທີ່ຕີນພູ ເລີຍເຫັນຫອຍ ໂຕໜຶ່ງໄຕ່ມາຕາມກິ່ງໄມ້ ພ້ອມທັງຊູໜວດເບື້ອງນັ້ນ ເບື້ອງນີ້ ໄປມາຢູ່ບໍ່ເຊົາ. ສອງເຖົ້າພາກັນແນມເບິ່ງ ແລ້ວກໍເລີຍມີຄວາມຮູ້ສຶກຢາກໄດ້ມາລ້ຽງໄວ້ເປັນລູກ ເຖົ້າຜູ້ເປັນຜົວອອກປາກເວົ້າກັບຫອຍວ່າ :

" ພວກເຮົາບໍ່ມີລູກ ຂໍໃຫ້ເຈົ້າໄປເປັນລູກພວກເຮົາເທີ້ນ "

ຄ້ອນເວົ້າແລ້ວເຖົ້າເລີຍຈັບເອົາຫອຍຍັດໃສ່ຖົງແລ້ວກໍພາກັນກັບບ້ານພ້ອມດ້ວຍຫາບຟືນຂອງຕົນ.

ເມື່ອມາຮອດບ້ານແລ້ວ ຜູ້ເປັນເມັຽກໍໃຫ້ການປະຄັບ ປະຄອງເບິ່ງແຍງຫອຍເໝືອນດັ່ງລູກໃນໄສ້ຂອງຕົນ. ທັງສອງຮູ້ສຶກມີຄວາມປິຕິຊົມຊື່ນນຳລູກຫອຍສັງຂອງຕົນ.

ຕົກມາວັນໜຶ່ງເພື່ອຢາກແບ່ງເບົາຄວາມທຸກຍາກຂອງພໍ່ແມ່ສັງ ຈຶ່ງເວົ້າວ່າ :

" ພໍ່ແມ່ທີ່ເຄົາລົບຂອງລູກ ! ລູກຢາກຈະຂໍເຂົ້າໄປ ເປັນຄົນຮັບໃຊ້ໃນເຮືອນຂອງເສດຖີໃກ້ຄຽງເຮືອນເຮົານີ້ ເພື່ອຈະໄດ້ ເງິນຄ່ຳມາຊອຍຊູຄອບຄົວເຮົາ "

ພໍ່ແມ່ຢາກປະຕິເສດ ແຕ່ໃນທີ່ສຸດກໍ່ຂືນໃຈລູກບໍ່ໄດ້. ທອຍໄດ້ເດີນທາງມຸ່ງໜ້າໄປຫາເຮືອນເສດຖີແລ້ວກໍເຂົ້າໄປຈບຢູ່ກອງພະນັກເຮືອນ.

" ເຮີຍ ! ຂ້ອຍຢາກມາເປັນຄົນຮັບໃຊ້ເຮືອນເຈົ້ານີ້ ເອົາຂ້ອຍເຮັດວຽກນຳແດ່ ຂ້ອຍຊ່າງດັງໄຟ ກວາດເຮືອນແລະມຽນ ມັດຈັດຕຽງທຸກສິ່ງທຸກຢ່າງ " ທອຍເວົ້າກັບຄົນໃຊ້ໃນເຮືອນ. ຄົນໃຊ້ໃນເຮືອນໄດ້ເອົາທົດສອບເບິ່ງຄວາມສາມາດເຫັນວ່າມີຄວາມ ແນ່ນອນ ແລ້ວຈຶ່ງເຂົ້າຮຽນພະຍາເສດຖີເພື່ອຮັບເອົາເຂົ້າເຮັດ ວຽກ.

ທອຍຢູ່ຮັບໃຊ້ເຮືອນນັ້ນໄດ້ 3 ປີ ພໍດີລູກສາວດຽວຄົນງາມຂອງເສດຖີທີ່ກຳລັງຂຶ້ນໜ້າສາວ ກໍມີຄົນມາໝັ້ນໝາຍ. ຄັນຮອດ ຕອນກາງຄືນມາ ທອຍເລີຍລັກເຂົ້າໄປໄຕ່ໜ້າຂອງລູກສາວເສດຖີ ເຮັດ ໃຫ້ເປັນຮອຍດ່າງດູ້ດ່າງດາວ ເສັຽຄວາມງາມໄປໝົດ. ເມື່ອຄູ່ ໝັ້ນມາເຫັນສະພາບແນວນັ້ນ ເລີຍປະຕິເສດທັນທີ ຕິວ່າຂີ້ຮາຍໂພດ...

ຈາກນັ້ນຫອຍສັງຈຶ່ງຂໍເອົານາງເປັນເມັຽນາງກໍຮັບ. ສັງໄດ້ເອົາເມັຽຂອງຕົນກັບມາເຮືອນພໍ່ປູ່ແມ່ຍ່າ.

ວັນໜຶ່ງເມື່ອເຖິງລະດູບານໃໝ່ມາແລະເມື່ອດອກຈອງ ດອກຄາຍເບັ່ງບານສະພັ່ງພ້ອມ ສົ່ງກິ່ນຫອມ ແລະລະອອງເກສອນ ກະຈາຍໄປທົ່ວບໍລິເວນນັ້ນ ທ້າວຫອຍສັງກໍຂັບສຽງອອຍອິ່ນຂຶ້ນ.

" ຝົນກໍຕົກຈີ້ຈອຍ ລົມກໍວອຍວິ່ວອນ ( ໆ ) ຝູງດອກ ດວງຣົດເຣົ້າ ຫາຍເສົ້າຄຶ່ງມະໂນ "

ແລ້ວໆ ຫອຍກໍເກັບເອົາຫີນກ້ອນໜຶ່ງຍື່ນໃຫ້ຜູ້ເປັນເມັຽ ຈຳໃຫ້ເອົາຫີນນັ້ນແກວ່ງໃສ່ອອງຫອຍພ້ອມທັງໃຫ້ເວົ້າວ່າ :

" ຫອຍສັງ ! ປະສະກັດສະ ! "

ຜູ້ເປັນເມັຽປະຕິບັດຕາມ ປັ້ຫອຍກໍແຕກອອກ ແລ້ວຫອຍ ເລີຍກາຍເກີດເປັນທ້າວທີ່ງາມເຫຼືອທີ່ສຸດທີ່ຍັງບໍ່ໄດ້. ທ້າວໄດ້ເອົາ ນ້ຳເຕົ້າແກ້ວອອກມາລ້າງໜ້າໃຫ້ເມັຽຂອງຕົນ ແລ້ວຮອຍດ່າງຂີ້ເຮິ ທັງຫຼາຍ ກໍ້ສຽງຫາຍໄປ ກາຍມີຮູບໂສມງາມຍິ່ງຍ້ອຍເໝືອນເດີມ ທັງສອງໄດ້ພາກັນມາຫາພໍ່ແມ່ ແລ້ວກໍຢູ່ນຳກັນຢ່າງມີຄວາມສຸກ.

# ນົກໄຟ

ຢູ່ມໍງບ້ານກາຊູໂນະ ມີພູເຂົາສູງຊັນຫນ່ວຍຫນຶ່ງ ເຊິ່ງມັກ ປົກຄຸມດ້ວຍເຝື້ອແລະອາຍດິນເລື້ອຍໆ. ລະຫວ່າງພູຫນ່ວຍນັ້ນ ແລະອີກຫນ່ວຍຫນຶ່ງໃຫ້ຄຽງ ມີທົ່ງຣາບພຽງ ອັນເນືອງນອງໄປດ້ວຍ ສຽງບາດພ້າບາດຂວານ ສຽງຈູກໝາຂອງນາຍພານແລະສຽງເຫົ່າຂອງໝາເມື່ອພົບເນື້ອ.

ມື້ຫນຶ່ງເລີຍປະກົດມີສຽງມັນເນືອງແປກປະຫຼາດ ເກີດຂຶ້ນພ້ອມກັບມີແສງເຫຼື້ອມຮຸ່ງສະຫວ່າງໄປທົ່ວທ້ອງຟ້າ. ນົກໄຟໂຕຫນຶ່ງກຳລັງບິນຜ່ານໄປເຂດນັ້ນ ເຮັດໃຫ້ກະທັ້ງພູເຂົາກໍ່ຕ້ອງສະເທືອນ. ປາກຂອງມັນພູ່ໄຟອອກເປັນແປວແລະປີກຂອງມັນມີສີສັນເປັນຮຸ້ງ. ນົກຍັກໂຕນີ້ໄດ້ນຳເອົາຄວາມຫາຍະນະແລະຄວາມລຳບາກຍາກແຄ້ນ ມາສູ່ທ້ອງຖິ່ນແຫ່ງນີ້ ເຊິ່ງບໍ່ມີຜູ້ໃດສາມາດເຮັດຫຍັງໃຫ້ມັນໄດ້ເລີຍ ພຽງແຕ່ນາບເຫັນມັນຫມັ້ນ ຝູງຊາວບ້ານຊາວເມືອງກໍ່ຫົວພອງ ສະຫຍອງ

ເກົ້າ ອີກສິ້ນຂວັນຫາຍ.

ມາຮອດຄືນໜຶ່ງສຽງຮ້ອງຂອງມັນ ໄດ້ດັງແຜດກ້ອງມາ ສອງຄັ້ງ ສຽງນັ້ນດັງປານຟ້າຮ້ອງ ແລະຄືນຕໍ່ມາກໍດັງອີກເຊິ່ນກັນຈົນເຮັດໃຫ້ສັ່ນສະເທືອນໄປທົ່ວທ້ອງຖິ່ນນັ້ນ.

ຈັກໜ່ອຍ ນ້ຳໃນທະເລສາບ ໂຕວະດາ ກໍ່ພຸ່ງຂຶ້ນ ເປັນແປວໃຫຍ່ ເຮັດໃຫ້ທຸກຄົນໃຜໆກໍຄິດວ່າ ແມ່ນຈຸດອະວະສານຂອງໂລກຈຶ່ງພາກັນທຳພິທີນົບພະໄຫວ້ເຈົ້າ. ໃນທີ່ສຸດສຽງຮ້ອງຂອງນົກກໍເຊົາລົງ ກະແສນ້ຳພຸ່ງກໍສະຫງົບ ແລະພູພາປ່າໄພກໍງຽບ.

ແລ້ວຜູ້ເປັນພໍ່ບ້ານເລີຍປະກາດອອກວ່າ :

" ນົກຍັກໄຟໂຕນັ້ນຕາຍແລ້ວ ພາກັນໄປເບິ່ງຕີ "

ທ່ານໄດ້ພາຊາວໜຸ່ມຜູ້ກ້າມກິດແລະກາຫານຈຳນວນໜຶ່ງ ປີນພູ ປີນຜາຂຶ້ນເມືອນຳ. ພວກເພິ່ນນຳໄປຕາມກະແສນ້ຳຫ້ວຍທີ່ມີສີແດງເຂັ້ມແລ້ວກໍແນມເຫັນ ໂງ່ນຜາຫີນໜ່ວຍໜຶ່ງລຸກແດງເປັນໄຟ.

" ມັນແມ່ນພະເຈົ້າຜູ້ເປັນລາຊາແຫ່ງສິ່ງທັງຫຼາຍ ເປັນຜູ້ ປົກປ້ອງເອົາພວກເຮົາ "

ໃນທີ່ສຸດເຂົາເຈົ້າກໍເລີຍໄປພົບນົກໄຟຍັກດັ່ງກ່າວ ນອນຕາຍຢູ່ນິເລືອດໄຫຼອອກມາຢ່າງບໍ່ຂາດ. ປີກຂອງມັນມະຫາສານ ຫົວຂອງມັນເປັນທົວງ ຕີນຂອງມັນເປັນຕີນງົວ ຂົນຂອງມັນເປັນຄຳແລະເງິນ

ຢູ່ຫ້ອງຂອງມັນມີໂລຫະຢ່າງມະຫາສານເຊັ່ນກັນ ເຊັ່ນ : ຄຳ ເງິນ ທອງ ຊືນ. ຈັກຫນ່ອຍມາ ເຜື້ອເນກກໍ່ກະຈາຍຫາຍໄປ ພູຜາ ເລີຍ ເຮືອງເຮືອໄປດ້ວຍບໍ່ເງິນແລະບໍ່ຄຳ ແລ້ວຮຸ່ງກິນນ້ຳທັງດວາມ ກໍ່ປະກົດຂຶ້ນ.

---------



# ຜີຢ່າຮ້າງ

ແຕ່ກີ້ແຕ່ກ່ອນຍັງມີຜີຍາຣາງຢ່າມັນບາໂຕໜຶ່ງ ເຝົ້າຢູ່ກິ່ວ ສິບາ ຂອງພູສິນໂດະ ບັນດາພໍ່ຄ້າທີ່ເອົາປ່າຕ່າງມາມາເຖິງແຖບນີ້ໂດຍຜ່ານ ກິ່ວດົງກາວ ຕ້ອງຖືກມັນກິນໝົດ. ຂ່າວເລົ່າລືກັນດັ່ງແຜ່ກະຈາຍ ໄປ ວ່າ : ຖ້າໃຜໄປພົບ ຢ່າມັນບາເຂົ້າ ຕ້ອງຕາຍແນ່ນອນ. ໃນເວລາ ນັ້ນຍັງມີຊາຍຜູ້ໜຶ່ງຊື່ ຢາໂກໄດ ບໍ່ເຊື່ອຄວາມເລົ່າລືດັ່ງກ່າວແລະໄດ້ ເອົາມ້າຂອງເຂົາຕ່າງປ່າຕົ້ນຕ່າງຂຶ້ນເມືອແຖບພູແຫ່ງນັ້ນ ເພື່ອຈະ ນຳໄປຂາຍໃຫ້ຜູ້ຄົນທີ່ທາງໃກ້ທະເລ. ແນ່ນອນທີ່ສຸດເຂົາຕ້ອງໄດ້ຜ່ານ ກິ່ວ ສິບາ ກວ່າຈະເຖິງແຫ່ງຕ່າງໆໃນແຖບນັ້ນໄດ້.

ຂະນະທີ່ເຂົາຈູງມ້າຂຶ້ນໄປເຖິງກິ່ວຊິບານັ້ນ ຍາຍເຖົ້າ ຜູ້ໜຶ່ງ ເລີຍຍ່າງເຂົ້າມາຫາ ແລ້ວກໍຂໍກິນປານຳ. ຢາໂກໄດຕອບວ່າ :

" ບໍ່ແມ່ນປາຂອງຂ້ອຍ ! ຂ້ອຍເອົາໃຫ້ບໍ່ໄດ້."

" ແຕ່ກູຢາກ ! ກູຫິວ ! ກູຂໍກິນນຳແດ່ ! ບໍ່ດັ່ງນັ້ນກູຈະບໍ່ສາ

ມາດກັບໄປເຖິງບ້ານເຮືອນກູໄດ້ "

ທ້າວຢາໂກໄດ ຈໍາເປັນຕ້ອງໄດ້ເອົາປາໃຫ້ຍາຍເຖົ້ານັ້ນກິນໂຕໜຶ່ງ. ຍາຍເຖົ້າມາບລິນບາດດຽວໂດຍບໍ່ຫຍ້ຳ ແລ້ວກໍຂໍກິນອີກ :

" ເປັນໄປບໍ່ໄດ້ ຂ້ອຍຈະເປັນໜີ້ເປັນສິນເພິ່ນ " ຢາໂກໄດຕອບ." ແຕ່ວ່າມັນໝັນແຂວກູຫຼາຍ ມຶງຈົ່ງໃຫ້ກູກິນອີກ " ຢາໂກໄດຈໍາເປັນຕ້ອງໄດ້ເອົາປາໃຫ້ຍາຍເຖົ້າກິນໂຕແລ້ວໂຕເລົ່າ ໃນທີ່ສຸດຈົນໝົດ. ທ້າວຢາໂກໄດຮູ້ສຶກບໍ່ອຸ່ນອ່ຽນໃຈ ເພາະເຫັນຍາຍເຖົ້າກິນປາໂດຍມາບລິນເອົາຢ່າງບໍ່ຫຍ້ຳ. ເຂົາຄິດຄຳທີ່ຜູ້ຄົນຊ່າລືກັນເຖິງ ພີ່ຍາຮ້າງປາມັນບາ. ຍາຍເຖົ້າເລີຍຕົວຮ້າງຂຶ້ນ ພາຍຫຼັງທີ່ມັນກິນປາໝົດທັງສອງຕ່າງມາແລ້ວ ພ້ອມທັງຍ່າງມາຫາມາ.

" ບັດນີ້ແມ່ນຮອບຂອງມາ ຈາກນັ້ນກໍຈະແມ່ນຮອບຂອງມຶງ "

ທ້າວຢາໂກໄດແນ່ໃຈທັນທີແລ້ວວ່າ ແມ່ນພີ່ຍາຮ້າງຊ້ວງ ຄອມພໍມັນເວົ້າແລ້ວກໍມາບລິນໝາທັງໂຕເຂົ້າໄປໃນທ້ອງ. ທ້າວ ຢາໂກໄດເຫັນບໍ່ເປັນທ່າ ກໍເລີຍຣີບແລ່ນລັດລອດໄປຕາມຮ່ອມຜາ ຈົນຂ້າມໄດ້ເຖິງ 3 ໜ່ວຍພູ ຈຶ່ງພົບເຫັນຕູບຫຼັງໜຶ່ງ. ເຂົ້າຣີບຂຶ້ນເມືອລີ້ຢູ່ ຊຸນບົນທັນທີ ຄາວນ້ອຍໜຶ່ງພີ່ຍາຮ້າງກໍມາເຖິງ :

" ເອີກູກິນປາໝົດສອງຕ່າງ ກິນໝາໝົດໂຕໜຶ່ງ ຮູ້ສຶກວ່າກິນຫຼາຍໂພດຈົນໜັກທ້ອງໜັກພຸງ ຂຶ້ນຕູບກໍບໍ່ໄດ້ "

ທ້າວຢາໂກໄດໜ້າແສດເຂົ້າທັນທີເພາະຄວາມຢ້ານ ຮູ້ແລ້ວວ່າ ໂຕໄດ້ມາລີ້ຢູ່ຕູບຂອງພີ່ຍ້າຣາງໂຕນັ້ນ ເຊິ່ງຕົນເອງບໍ່ໄດ້ຄາດຄິດເລີຍ ເມື່ອພີ່ຍ້າຣາງເວົ້າຈົບ ມັນກໍເລີຍລົ້ມນອນລົງໝໍ້ກະທະຂອງມັນ ແລ້ວ ຄາວນ້ອຍໜຶ່ງກໍເລີຍກົນຂຶ້ນທັນທີ. ເມື່ອເຫັນເປັນໂອກາດດີ ຢາໂກໄດ ກໍເລີຍລົງມາຮີບສຸມຟືນດັງໄຟໃສ່ໝໍ້ກະທະນັ້ນ ພ້ອມທັງເອົາ ຄົກມອງມາຕັ້ງໂຕຄີງມັນໄວ້. ເມື່ອໄຟລຸກຂຶ້ນ ສຽງດັງຊີດໆ ມັນກໍໄຫຼອອກມາວ່າ ແມ່ນແມ່ງໄມ້ມາຕອມ. ເມື່ອໝໍ້ຮ້ອນຂຶ້ນມັນກໍວ່າ ແມ່ນລົມຮ້ອນພັດມາແຕ່ທິດໃຕ້. ຢາໂກໄດສຸມໄຟເຂົ້າໄຈງຈົນໃນທີ່ສຸດ ພີ່ຍ້າຣາງຢາມັນບາກໍຕາຍໄປ.



# ເມືອງພາດານ

ແຕ່ກ່ອນແຕ່ຫຼັງເຫິງມາແລ້ວ ເດັກນ້ອຍໄດ້ໄປພົບຮູໂຫວ້ໃຫຍ່ຮູໜຶ່ງຢູ່ຂ້າງທີ່ຕັ້ງຂອງພະພຸດທະຮູບ ຊິໂຣະ. ຊາວບ້ານ ຊາວເມືອງພາກັນມາເບິ່ງ ປະກົດວ່າຮູດັ່ງກ່າວນັ້ນ ເລິກລົງໄປຈົນບໍ່ເຫັນ ບ່ອນສິ້ນສຸດ. ບໍ່ມີບຸກຄົນໃດເລີຍທີ່ຈະສາມາດສ່ຽງອາສາລົງໄປ ສຳຫຼວດເບິ່ງໄດ້ ນອກຈາກຊາຍໜຸ່ມກ້າກັ່ນຜູ້ໜຶ່ງຊື່ ສຸລັດສຸຂະ. ເຂົາຂານອາສາລົງໄປເບິ່ງວ່າ ໃຕ້ດິນພຸ້ນມີຫຍັງແທ້. ເຂົາໄດ້ຮິບໂຮມ ເອົາເຊືອກມາຕໍ່ກັນຍາວໆ ແລ້ວຣັດອູ່ແຂວນ ເອົາໝາກລໍ້ໃສ່ ເຂົາລົງໄປເປັນເວລາສາມມື້ສາມຄືນ ເລີຍໄປເຖິງຕົວເມືອງໜຶ່ງໝົດງຽບຈົນບໍ່ມີສຽງຫຍັງເລີຍ. ເຂົາເລາະໄປຕາມຫົນທາງ ບັງເອີນ ຄາວນ້ອຍໜຶ່ງ ເລີຍໄປພົບຍິງກາງຄົນຜູ້ໜຶ່ງອາຍຸປະມານ 40 ປີ ນາງເວົ້າວ່າ :

" ເຈົ້າມາແຕ່ເຫິງບໍ ? "

" ແມ່ນແລ້ວ ! ຂ້ອຍຢ່ອນເຊືອກລົງມາຕາມຮູ. ເປັນຫຍັງຢູ່ເມືອງນີ້ຈຶ່ງບໍ່ມີຜູ້ຄົນ ? "

" ຜູ້ຄົນໃນເມືອງນີ້ ຖືກຝູງແມວໂພງຍັກກິນໄປໝົດແລ້ວ ຍັງເຫຼືອແຕ່ຂ້ອຍຜູ້ດຽວ ເພາະຂ້ອຍເຂົ້າໄປລີ້ຢູ່ຫີບຫີນ.

" ເອີ ! ດີແລ້ວຂ້ອຍຈະສັງຫານແມວພວກນີ້ ໃຫ້ຕາຍໝົດ ເຈົ້າມີເຈ້ຍກະດາດແລະນ້ຳໝຶກບໍ່ ? "

ຍິງຄົນນັ້ນໄປຊອກເຈ້ຍແລະນ້ຳໝຶກມາໃຫ້ໄດ້ແລ້ວຊາຍຄົນນັ້ນກໍເລີຍແຕ້ມແມວນ້ອຍໃຫຍ່ຈຳນວນຫຼວງຫຼາຍ ຕິດໄວ້ຕາມຝາ ເຮືອນ ເມື່ອສຳເລັດຮຽບຮ້ອຍແລ້ວ ທັງສອງກໍພາກັນເຂົ້າໄປລີ້ຢູ່ຫີບຫີນ ນຳກັນ. ເມື່ອຝູງແມວໂພງຍັກມາຮອດແລ້ວ ພວກຮູບແມວກໍ ກະໂດດອອກຈາກເຈ້ຍເປັນແມວ ມາກັດພວກແມວໂພງຕາຍດຽລະດາດໄປໝົດ.

" ເຈົ້າໄດ້ມາຊ່ວຍຊີວິດຂ້ອຍໄວ້ ຂອບໃຈຫຼາຍໆ ຂໍໃຫ້ ເຈົ້າເອົາຂ້ອຍເຮັດເມັຽສາ ! "

" ຂ້ອຍຈະກັບມາອີກ " ແລ້ວຊາຍຄົນນັ້ນກໍຂື້ນເມືອບ້ານເກົ່າຂອງລາວ. ເມື່ອຮອດແລ້ວເຂົາກໍທັກຖາມຜູ້ຄົນ ພ້ອມທັງບອກວ່າ : " ຂ້ອຍມາແຕ່ການໄປສຳຫຼວດເບິ່ງຮູດິນ " ແຕ່ຜູ້ຄົນກໍເສີຍໃຜເສີຍມັນຢ່າງບໍ່ຮູ້ຈັກ ເຂົາງົງໄປທັງໂຕ ຈຶ່ງຖາມຜູ້ຄົນທັງຫຼາຍທີ່ຕົນເອງກໍ

ບໍ່ຮູ້ຫນ້າຕາເລີຍ.

" ໂອ ! ເລື່ອງທ້າວສຸອັດສຸອະນັ້ນ ມີເລື່ອງເລົ່າກັນຢູ່ຄືກ່ອນຫນ້ານີ້ 300 ປີ ເຂົາໄດ້ລົງໄປຮູດິນ. ດຽວນີ້ທາດດູກອຸດທິດ ໃຫ້ລາວຍັງມີຢູ່ "

ຊາຍຄົນນັ້ນຍ່າງໄປປ່າຊ້າບ່ອນທີ່ຊາວບ້ານແນະນຳ ເຫັນທາດດູກຂອງຕົນ ຂອງເມັຽຕົນແລະລູກເຕົ້າຫຼານເຫຼັນຂອງຕົນ ສຸອັດສຸອະຊຸກໃຈແຮງ ເຂົາມິຂຸດເກົາຂໄດທີ່ນັ້ນອອກ.

" ໂອ້ຍ ! ເຈົ້າມາຫຼົກຜົມຂ້ອຍ " ເຂົາໄດ້ຍິນສຽງ ຂອງເມັຽຂອງເຂົາທີ່ດັງມາ ເຊິ່ງສະຖິດຢູ່ຄຽງຂ້າງທາດດູກ ຂອງເຂົາເອງ. ນີ້ບໍ່ແມ່ນຄວາມຝັນທີ່ນັ້ນດາຍ.

# ນົກຕູ້

ມື້ຫນຶ່ງຜູ້ເປັນພໍ່ບອກໃຫ້ລູກຍິງຂອງຕົນວ່າ " ເກົາຫຼັງໃຫ້ພໍ່ແດ່ ລູກຍິງປະຕິເສດບໍ່ເກົາ ພໍ່ຈຶ່ງອອກໄປເອົາຫຼັງຖູໃສ່ໂງ່ນຫີນ ເປັນເຫດໃຫ້ໂຫງ່ນຫີນບາດຫຼັງ ແລ້ວຕາຍໄປ. ຕໍ່ຈາກນັ້ນມາ ຜູ້ເປັນລູກມີຄວາມເສັຽໃຈຫຼາຍທີ່ໄດ້ປະຕິເສດບໍ່ເກົາຫຼັງໃຫ້ພໍ່. ເມື່ອນາງຕາຍໄປຈຶ່ງເກີດເປັນນົກຕູ້ ຂັນ ກັກໂກ ກັກໂກ ( ພາສາຍີ່ປຸ່ນແປວ່າ : ຂ້ອຍຈະເກົາ ຂ້ອຍຈະເກົາ ) ຢູ່ບໍ່ແລ້ວບໍ່ເຊົາຈັກເທື່ອ.

# ກົກເຄົ້າ
# ຂອງບຸນຕະນະປະຕະ

ແຕ່ເດີມແຕ່ດາ ຍັງມີຊາຍໜຸ່ມຜູ້ໜຶ່ງຄິດຢາກໄດ້ເມັຽ ແຕ່ກໍ່ບໍ່ສາມາດພົບພໍ້ສາວທີ່ຖືກໂສກຖືກດ້າມ ສົມນາດສົມເນື້ອກັບຕົນຈັກເທື່ອ ມື້ໜຶ່ງເຂົາໄດ້ໄປໄຫວ້ທີ່ວັດ ວິງວອນພະເຈົ້າໃຫ້ດົນບັນດານຫາເມັຽມາໃຫ້ເຂົາຜູ້ໜຶ່ງ. ມາຮອດຄືນຖວນເຈັດ ແສງຮຸ່ງເລີຍປະກົດ ຕົກມາສູ່ວັດດວງກາວແຕ່ຟ້າ. ມັນແມ່ນສານທິບຈາກສະຫວັນ.

" ຄືນນີ້ ນາງເທວະດາຫຼາຍອົງຈະໄດ້ລົງມາຢາະຢື່ອງແອ່ນຟ້ອນຢູ່ທີ່ນີ້ ໃຫ້ທ້າວເລືອກເບິ່ງຜູ້ທີ່ຖືກໃຈຂອງທ້າວ ແລ້ວໃຫ້ ໄປລັກເອົາປີກຂອງນາງມາເຊື່ອງໄວ້ໂລດ "

ຊາຍໜຸ່ມຜູ້ນັ້ນຮູ້ສຶກດີອົກດີໃຈ ຈຶ່ງລີ້ພັກຢູ່. ຄາວໜຶ່ງຝູງນາງເທວະດາເລີຍບິນມາສູ່ແຫ່ງດວງກາວ ພໍມາຮອດກໍຖອດປີກ ຖອດຫາງອອກໄວ້. ທ້າວໄດ້ສັງເກດເບິ່ງຜູ້ທີ່ງາມກວ່າເພື່ອນ ຖືກໃຈກວ່າເພື່ອນ ແລ້ວກໍ່ຄ່ອຍຢື່ອງໆເຂົ້າໄປລັກເອົາປີກຫາງມາເຊື່ອງໄວ້. ພໍເມື່ອ

ຮອດເວລາກັບ ນາງເທວະດາຜູ້ນັ້ນ ເລີຍກັບບໍ່ໄດ້ ຈຶ່ງຮອງໄຫ້ຂຶ້ນ ທ້າວຜູ້ທີ່ພັກຢູ່ເຫັນເປັນໂອກາດ ເລີຍພາມາເຮືອນຕົນ ແລ້ວກໍເອົາເປັນເມັຽ. ແຕ່ແນວໃດກໍດີ ນາງກໍຍັງທຸກໂສກຢູ່ບໍ່ແລ້ວ ວັນໜຶ່ງ ຜູ້ເປັນຜົວອອກໄປຄ້າຈຶ່ງສັ່ງໃຫ້ຜູ້ເປັນແມ່ສຸກເຊື່ອງປີກຫາງ ຂອງນາງໄວ້ໃຫ້ດີຢ່າໃຫ້ນາງຮູ້ ແລະກໍບໍ່ຕ້ອງເອົາໃຫ້ນາງ. ແຕ່ພໍດີ ຜົວໄປແລ້ວນາງສາວໃພ້ເລີຍອ້ອນວອນແມ່ ພ້ອມທັງໄຫ້ອື້ນອ້ອຍດ້ວຍຄວາມທຸກໂສກ ໃນທີ່ສຸດແມ່ກໍໃຈອ່ອນ ຈຶ່ງເອົາປີກຫາງໃຫ້ນາງ ເມື່ອນາງໄດ້ປີກຫາງແລ້ວ ນາງເລີຍເອົາແກ່ນເຄືອເຂົາກາດມອບໃຫ້ ແມ່ຜົວແກ່ນໜຶ່ງພ້ອມທັງບອກແມ່ວ່າ :

" ໃຫ້ແມ່ເອົາແກ່ນປູກໃສ່ຂອກຄີໄຟ ແລ້ວເຄືອມັນ ຈະໃຫຍ່ເນິ່ງຂຶ້ນເມືອສູ່ຟ້າ ເວລາຜົວລູກກັບມາ ຄັນຖ້າຢາກເມືອຫາລູກ ໃຫ້ຊາວເຄືອນຂຶ້ນເມືອເນີ "

ເມື່ອທ້າວກັບມາແຕ່ໄປຄ້າ ຜູ້ເປັນແມ່ຈຶ່ງອະທິບາຍເຫດຜົນໃຫ້ລູກຮູ້ທຸກປະການ ແລ້ວລູກກໍຊາວເຄືອນຂຶ້ນເມືອຈົນຮອດທີ່ໂຮງຂອງນາງເມັຽຢູ່ສະຫວັນ.

ທັງສອງຢູ່ຮ່ວມຊີວິດກັນເປັນຄັ້ງທີ່ສອງ. ຢູ່ມາມື້ໜຶ່ງທ້າວອອກໄປຍ່າງເລາະຫຼິ້ນຕາມສວນສະຫວັນຂອງຜູ້ເປັນເມັຽເລີຍເຫັນໝາກເຕົ້າໝາກແຕງໜ້າແຊບອີ່ຫຼີ ທ້າວຢາກຈະປິດມາຊີມເບິ່ງແຕ່ຜູ້ເປັນ

ເມັຽທ້ານໄວ້. ວັນໜຶ່ງເມື່ອຜູ້ເປັນເມັຽບໍ່ຢູ່ ຜົວອົດບໍ່ໄດ້ຈຶ່ງລັກອອກໄປສວນ ເອົາໝາກແຕງມາຜ່າເພື່ອຈະກິນ ທັນໃດນັ້ນນ້ຳເລີຍ ໄຫຼນອງອອກມາຈາກໝາກແຕງ ໄຫຼຊຸເອົາທ້າວໃຫ້ຕົກລົງໄປ ຢູ່ບ້ານເກົ່າເມືອງຫຼັງຂອງຕົນຄືນຕັ້ງແຕ່ນັ້ນມາ. ເມື່ອຜູ້ເປັນເມັຽ ກັບມາຮອດ ເລີຍຫາໄປໂພດແລ້ວ. ມື້ດັ່ງກ່າວນີ້ແມ່ນມື້ຖ້ວນເຈັດຂອງເດືອນເຈັດ ດັ່ງນັ້ນທຸກໆປີເມື່ອຮອດວັນຖ້ວນເຈັດເດືອນເຈັດມາ ຊາວບ້ານຊາວເມືອງພາກັນເຮັດບຸນ ໃຫ້ຊື່ວ່າບຸນຕະນະບະຕະ ເປັນໂອກາດນີ້ໂອກາດດຽວທີ່ຄົນສາມາດຂຶ້ນໄປເມືອງຟ້າຢູ່ນຳເມັຽເທວະດາ. ໄດ້ຫຼາຍຊົ່ວຄົນມາແລ້ວທີ່ປະຊາຊົນມີປະເພນີເວົ້າກັນວ່າ : ຖ້າວ່າໃນມື້ບຸນດັ່ງກ່າວໃຜກິນໝາກແຕງ ກໍ່ຈະກໍ່ໃຫ້ເກີດນ້ຳນອງນ້ຳຖ້ວມບ້ານຖ້ວມເມືອງ.



# ບ້ວອສັນຕະປາ

ແຕ່ກີ້ແຕ່ກ່ອນຢູ່ວັດແຫ່ງຫນຶ່ງ ຍັງມີສາທຸວັດແລະເນນນ້ອຍ ອົງຫນຶ່ງ. ມື້ຫນຶ່ງອາກາດອົບເອົ້າຫຼາຍ ສາທຸວັດເລີຍບອກໃຫ້ເນນນ້ອຍໄປຊອກເອົາລົມມາ.

" ເນນ ! ມື້ນີ້ຮ້ອນຫຼາຍ ! ໄປຊອກເອົາລົມຢູ່ແປພູຫນ້າວັດ ນໍາມາດູ "

ເນນນ້ອຍຈັບໄດ້ຖົງຄະລິງບັກໃຫຍ່ ແລ້ວກໍ່ອອກເດີນທາງໄປສູ່ພູ່ຫນ່ວຍດັ່ງກ່າວ. ໄປຕາມທາງເນນຮູ້ສຶກອິດເໝື່ອຍຫຼາຍຈຶ່ງ ຢາກພັກຜ່ອນເອົາແຮງ. ພໍເນນລົ້ມຫົວລົງກໍຫຼັບທັນທີ ແລະພໍຕື່ນຂຶ້ນມາຟ້າກໍໃກ້ຈິມືດແລ້ວເນນນ້ອຍບໍ່ຮູ້ຈັກວ່າຈະແກ້ບັນຫາໄດ້ແນວໃດ ເພື່ອຈະໄດ້ລົມໄປໃຫ້ສາທຸໃຫຍ່. ຄັນຖ້າບໍ່ໄດ້ລົມນັ້ນໄປໃຫ້ເພິ່ນ ແນ່ນອນເພິ່ນຕ້ອງຂຮກຫນັກ. ເນນຄິດໄປຄິດມາ ຄາວຫນຶ່ງຫົວຄິດກໍອອກ. ເຂົາໄຂປາກຖົງເຂົາອອກ ແລ້ວກໍຕົດໃສ່ ຕົດໃສ່ແລ້ວ ຕົດໃສ່ເລົ່າ

ຈົນເຕັມຖົງບໍ່ພໍຄາວກໍແບກກັບມາວັດ.

" ເຈົ້າມາຫຼ້າແທ້ເນນ ! ໄດ້ລືມມາບໍ່ ? ໄຂອອກເບິ່ງດູ !

" ໂດຍຂະນ້ອຍ ! " ເວົ້າແລ້ວເນນກໍໄຂຖົງຕົດອອກ ດວຍໜ້າຕາເສີຍ. ພໍສາທຸສູບເອົາກິ່ນອາຍຂອງມັນເຂົ້າໄປໃນປອດສາທຸກໍເລີຍອຸທານອອກມາໂລດວາ :

" ອາ.... ລືມສະໄໝນີ້ ສັງມາກິ່ນບໍ່ດີກະດໍ້ ? "

ແລ້ວເນນນ້ອຍໜ້າເສີຍ ເລີຍຕອບໄປວ່າ :

" ມັນຍ້ອນວ່າຮ້ອນນີ້ແຫຼະ ! ລືມກໍຈົ່ງມີກິ່ນອັບກິ່ນບູດ "



# ສາທຸວັດໂງ່ງ່າວ
# ແລະ ທ່ານໝໍຕັ້ງຕິດໂປະ

ແຕ່ກີ້ແຕ່ກ່ອນ ຢູ່ແຫ່ງໃດແຫ່ງໜຶ່ງໃນປະເທດຍີ່ປຸ່ນ ຍັງມີສາທຸວັດໂງ່ງ່າວອົງໜຶ່ງແລະທ່ານໝໍຕັ້ງຕິດໂປະຜູ້ໜຶ່ງ. ມື້ໜຶ່ງສາທຸວັດໄດ້ຮັບຈົດໝາຍຈາກທ່ານໝໍວ່າ : " ໃຫ້ສາທຸມາດ່ວນມີວຽກ " ສາທຸວັດຄິດວ່າຕ້ອງແມ່ນຄົນຕາຍຄົກ ຈຶ່ງຫາງຫາເອົາກຳພີກາເພື່ອຈະໄປສູດ. ເພິ່ນໄດ້ມຸ່ງໜ້າໄປທີ່ເຮືອນຂອງທ່ານໝໍ. ພໍທ່ານໝໍເຫັນໜ້າ ກໍເລີຍເວົ້າຂຶ້ນໂລດວ່າ : " ຂະນ້ອຍມີບັນຫາໜຶ່ງ ຄືວ່າຈະຕ້ອງປັນທີ່ດິນໃຫ້ລູກ 3 ຄົນ ແລະທີ່ດິນນັ້ນມີຢູ່ 99,17 ໄລ່. ຊ່ວຍຂະນ້ອຍແດ່ ! " ສາທຸວັດຕອບ : " ອາຕະມາ ບໍ່ແມ່ນຊາວນາ ບໍ່ຮູ້ຫຍັງເລີຍນຳເລື່ອງດິນເລື່ອງດອນ ເປັນຫຍັງຈຶ່ງຮຽກອາຕະມາ ມາວຽກແນວນີ້ " ທ່ານໝໍຕອບອີກ : " ບໍ່ນາ ! ສາທຸ ສາມາດຊ່ວຍຂະນ້ອຍໄດ້ນາ ເພາະວ່າ ໃຜໆກໍ່ຮູ້ຈັກດີວ່າ ສາທຸເປັນຕາວະເກ ( ສາທຸໂງ່ງ່າວ ) " ສາທຸໃຈຮ້າຍຂຶ້ນ ແລ້ວກໍ່ເວົ້າໄປວ່າ

" ໂອ້ແມ່ນບໍ່ ! ທຸກສິ່ງທຸກຢ່າງກໍມີຂອບເຂດດີ. ມາດ່າ ຖາກໜ້າຖາກຕາແບບນີ້ ແມ່ນຈອງຫອງແລະດື້ດ້ານເກີນໄປແລ້ວ" ແລ້ວສາທຸກໍລົງເຮືອນກັບວັດກົ້ນໆ.

ວັນໜ້າມາ ທ່ານໝໍຕັງຕິດໂປະ ເລີຍໄດ້ຮັບຈົດໝາຍ ຈາກສາທຸວັດບອກວ່າ : " ໃຫ້ມາດ່ວນ ເພາະມີກົດທຸລະຟ້າວຟັ່ງ " ທ່ານໝໍຄິດວ່າມີຄົນເຈັບຈະເອົາເງິນມາໃຫ້ກໍເລີຍມາ ແລະ ພໍມາຮອດ ສາທຸວັດເລີຍເວົ້າວ່າ :" ດີຫຼາຍທີ່ຮີບມາໄວ ! ຂ້ອຍ ມີຕົ້ນຕັງຕົ້ນໜຶ່ງຫັກ ຈະເຮັດແນວໃດ ? " ທ່ານໝໍຕອບວ່າ " ຂ້ອຍແມ່ນທ່ານໝໍ ບໍ່ໄດ້ກ່ຽວຂ້ອງກັບກົກຕັງແນວໃດເລີຍ. ເປັນຫຍັງຈຶ່ງເອີ້ນຂ້ອຍມາ " ສາທຸຕອບ : " ອາວ ! ມັນຈະແຈ້ງພໍແຮງແລ້ວດ່ວາເຈົ້າຮູ້ເລື່ອງຕັງດີ ເພາະເຈົ້າແມ່ນນາຍໝໍຕັງຕິດໂປະ " ແລ້ວທ່ານໝໍໃຈຮ້າຍເລີຍຮີບໜີໄປກົ້ນໆ.



# ສ່ວພໍ່ລຸນ

ແຕ່ກ່ອນຍັງມີແມ່ເຖົ້າຄົນໜຶ່ງ ເປັນຄົນໃຈດີມີສິນທຳເປັນແບບຢ່າງເພິ່ນທັງເປັນຄົນດຸໝັ່ນໃນວຽກໄຮ່ການນາ ບ້ານຂອງ ແມ່ເຖົ້າຕັ້ງຢູ່ເຂດພູດອຍ ແຕ່ລະມື້ແມ່ເຖົ້າຕື່ນແຕ່ເດິກ ອອກໄປເຮັດໄຮ່ ແຕ່ເຊົ້າຈົນຄ່ຳຈຶ່ງກັບບ້ານ ເຖິງປານນັ້ນແມ່ເຖົ້າກໍ່ຍັງທຸກຍາກຢູ່ເໝືອນເດີມ. ມາມື້ໜຶ່ງ ເວລາແມ່ເຖົ້າກັບຈາກໄຮ່ມາ ເລີຍພໍ້ ນົກຈອກນ້ອຍໂຕໜຶ່ງບາດເຈັບ ຢ່າຊ້າແມ່ເຖົ້າເລີຍຮີບຄ່ອຍໆໂຊມ ເອົານົກຈອກມາປະຄອງໄວ້ ແລ້ວກໍ່ຮີບຍ່າງມາເຮືອນ. ເມື່ອມາຮອດເຮືອນແລ້ວແມ່ເຖົ້າເລີຍໃຫ້ການປິ່ນປົວບົວລະບັດ ແກ່ນົກດັ່ງກ່າວຈົນຫາຍດີມີແຮງພາຍໃນເຈັດວັນ. ຈາກນັ້ນແມ່ເຖົ້າກໍ່ເອົາໄປປ່ອຍໃຫ້ເປັນອິດສະຫຼະ. ຕົກມອບເຊົ້າມາ ແມ່ເຖົ້າເລີຍໄດ້ຍິນສຽງຮ້ອງ ຈອກຈອກຢູ່ເທິງບ້ານປ່ອງຢ້ຽມເຮືອນ ແມ່ເຖົ້າຮີບໄປໄຂປະຕູ ເຫັນ ນົກຈອກໂຕເກົ່ານັ້ນ ຄາບແກ່ນໝາກແຕງກວາແກ່ນໜຶ່ງໃນປາກຂອງຕົນມາ

ໃຫ້. ແມ່ເຖົ້າຈັບເອົາແກ່ນໝາກແຕງ ແລ້ວນົກກໍເລີຍບິນໄປ. ແມ່ເຖົ້າໄດ້ເອົາແກ່ນໝາກແຕງແກ່ນນັ້ນໄປປູກ ຄາວເຫິງໜຶ່ງ ກໍເລີຍເປັນເຄືອ ເປັນດອກ ແລະເປັນໝາກໜ່ວຍໃຫຍ່. ແມ່ເຖົ້າ ເອົາໝາກແຕງໜ່ວຍນັ້ນມາຜ່າ ກໍເລີຍມີເມັດເຂົ້າໄຫຼອອກມາ ບໍ່ຂາດ ແມ່ເຖົ້າໄດ້ເຂົ້າຕົ້ມແດ່. ເຖົ້າຈັດການຫຸງຕົ້ມຂົນຫຼາຍໝໍ້ ຫຼາຍໄຫ ແລ້ວກໍວານໄທບ້ານມາກິນ. ຊາວບ້ານໃຜໆກໍເຫັນວ່າແມ່ນເຂົ້າຫອມແຊບອິຫຼີ.

ຂະນະນັ້ນຍັງມີຍິງເຖົ້າອີກຜູ້ໜຶ່ງເປັນຄົນຮັ່ງມີ ໃຈໂຫດ ແລະໂລບມາກ. ເມື່ອເຖົ້າເຫັນວ່າເຖົ້າຂີ້ໄຮ້ນັ້ນກັບກາຍເປັນຜູ້ມີ ດີໄດ້ ນາງກໍຢາກຈະໃຫ້ມີຫຼາຍກວ່າເກົ່າ ຈຶ່ງໄປຊອກຈັບນົກຈອກແລະມາຕີໃຫ້ມັນບາດເຈັບ ຈາກນັ້ນກໍຕາງຕີປິ້ນປົວປະຄັບປະຄອງມັນ ແລ້ວກໍເອົາມັນໄປປ່ອຍ. ຕໍ່ມານົກຈອກໂຕນັ້ນກໍຄາບແກ່ນໝາກແຕງ ມາໃຫ້ແທ້ ແລະເຖົ້າກໍເອົາໄປປູກເປັນເຄືອຍເປັນໝາກໃຫຍ່ງາມເຖົ້າໄດ້ເອົາໝາກແຕງໜ່ວຍນັ້ນມາຜ່າ ຫວັງວ່າຈະເຫັນເຂົ້າໄຫຼ ອອກມາ ພັດແມ່ນງູ້ງຽວຂ້ຽວກະປອມ ແມງງອດແມງເງົາທັງນອນ.

# ການຜິດຖຽງກັນ
# ລະຫວ່າງມັນດ້າງ ແລະ ເຕົ້າຮູ້

ແຕ່ກີ້ແຕ່ກ່ອນ ທີ່ເຮືອນຄົວຂອງຊາຍຄົນໜຶ່ງ ມີຫິ້ງໄວ້ຂອງກິນຫຼາຍເບື້ອງດ້ວຍກັນ ຄື : ຊັ້ນເທິງໄວ້ມັນດ້າງ ຊັ້ນລຸ່ມໄວ້ຈານເຕົ້າຮູ້ ແລະຖ້ານລຸ່ມລົງມາອີກກໍມີຫົວກາລົດແລະອື່ນໆ.

ເມື່ອເຖິງຍາມນອນມາຜູ້ເປັນເຈົ້າຂອງກໍເຂົ້ານອນ. ມັນດ້າງເຕົ້າຮູ້ ຫົວກາລົດ ກະທຸ່ງນ້ຳສະອັ້ວ ກໍນອນເຊັ່ນກັນ. ຕອນເດິກມາໜູນ້ອຍເຈົ້າເວນ ໄດ້ປີນເປາະເລາະໄຕ່ຄ່ວາຫາອາຫານຂອງມັນ. ພໍດີປີນໄປຖືກມັນດ້າງ ມັນດ້າງເລີຍກິ້ງຕົກລົງມາໃສ່ຈານເຕົ້າຮູ້ເຕົ້າຮູ້ຊວາດຕື່ນທັງຫຼັບທັງຝັນ.

" ຊາດຊົ່ວ ! ມຶງມາເຮັດໃຫ້ຫູກູຫວັ້ນແລ້ວ ຕາຍຄັກ ຈິເຮັດແນັ້ວໃດ ບາດນີ້ ? ມອນກູວ່າຈະທຳຊົງໃຫ້ງາມໆທີ່ສຸດ ແລ້ວເຂົ້າຢູ່ໃນຈານອາຫານຂອງຍ່າແມ. ກູບໍ່ພໍໃຈ ມຶງຈົ່ງເອົາຫູກູຄືນມາ ! "

ມັນດ້າງເວົ້າຕອບວ່າ :

" ມັນບໍ່ແມ່ນຄວາມຜິດຂອງກູ ມັນແມ່ນຄວາມຜິດຂອງໜູ ພຸ້ນ ໜູຫາກມາຢັ້ນກູ ກູກໍເລີຍຕົກໃສ່ມຶງ ກູຂໍໂທດນຳມຶງແດ່ "

" ບໍ່ມີຂໍໂທດດອກ ! ເອົາຫູເກົ່າກູຄືນມາ "

ການຜິດກັນຂອງເຂົາທັງສອງຮຸນແຮງຂຶ້ນ ຈົນເຮັດໃຫ້ຫົວຜັກກາດຕື່ນຂຶ້ນມາ. ຫົວຜັກກາດອອກມາເປັນຈ່າສານໃຫ້. ທັງສອງ ໂຈດແລະຈຳເລີຍ ໃຜກໍເວົ້າເຫດຜົນຂອງໃຜຂອງມັນອອກມາ. ແຕ່ຄວາມຜິດຖຽງກັນກໍຍິ່ງດັງຂຶ້ນ ຈົນຫົວຜັກກາດເວົ້າວ່າບໍ່ຟັງ. ໃນທີ່ສຸດ ຫົວຜັກກາດເລີຍໃຈຮ້າຍ ຍຸ້ເຂົາທັງສອງຕຳໃສ່ກັນເຮັດໃຫ້ເກີດມີສຽງ ດັງມະລີງຕີງຕັງຂຶ້ນ. ກະທຸ່ງນ້ຳສະອວຜູ້ທີ່ນອນຢູ່ຢ່າງ ສະຫງົບງຽບກໍເລີຍຕື່ນຂຶ້ນມາ.

" ຮວາຍສູ ! ສູເປັນຫຍັງຈຶ່ງມະລີງຕີງຕັງແທ້ ? "

ສຽງຂອງນ້ຳສະອວດັງລັ່ນຂຶ້ນບັກແຮງຈົນເຮັດໃຫ້ຄູ່ວິວາດກັນ ຢຸດສະງັກ.

" ເອີ ! ຄັນຖ້າສູຫາກຜິດກັນຕໍ່ ແລະບໍ່ຢ່າບໍ່ເຊົາກັນເນື້ອນ ກູຈະປະຕິເສດບໍ່ເຂົ້າຢູ່ໃນຈານອາຫານນຳພວກສູເລີຍ "

ເມື່ອໄດ້ຄ້ຳນ ເຂົາທັງສອງເລີຍເຊົາຖຽງກັນ.

( ທີ່ປະເທດຍີ່ປຸ່ນນັ້ນ ນ້ຳສະອວເປັນປະທານໃນອາຫານເພາະເຂົ້າກັບທຸກປະເພດອາຫານໄດ້ ).

# ກິຮາຊີ
# ຕຶກເປັດເອົາດອນ

ໜອຍຢາຊິ ແຫ່ງແຄ້ວນໄອຊູກະຊິຕະ ຍັງມີນັກຕຶກເບັດ ໜຶ່ງຊື່ ສັງຜູ້ໜຶ່ງຊື່ ກິຫາຊິ. ທາງທິດຕາເວັນອອກຂອງໝູ່ບ້ານ ດັ່ງກ່າວ ມີວັດຮ້າງແຫ່ງໜຶ່ງເຊິ່ງບໍ່ມີໃຜກ້າຈະອາໃສຢູ່ໄດ້. ຢູ່ໃກ້ວັດນັ້ນກໍ່ມີ ບຶງໃຫຍ່ ເຊິ່ງບໍ່ມີໃຜສາມາດມາໃກ້ມັນໄດ້ ນອກຈາກວັນສິນວັນທານ ເທົ່ານັ້ນ ແຕ່ນັ້ນຍັງມີແຕ່ກິຫາຊິ ຜູ້ໜຶ່ງຜູ້ດຽວເທົ່ານັ້ນ ທີ່ກ້າເຂົ້າໃກ້ ມັນ ແລະຕຶກເບັດເອົາປານາງຊະນິດໃນໜອງດັ່ງກ່າວ ຊາວບ້ານຮູ້ຂ່າວ ນີ້ ກໍ່ຕັກເຕືອນຫຼາຍເທື່ອ ແຕ່ລາວກໍ່ບໍ່ຟັງ. ມື້ໜຶ່ງຂະນະຕຶກປາຢູ່ ກໍ່ ມີປາມາດຶງເບັດ. ເຂົາແຍັກຕົ້ນແຮງ ເບັດເລີຍເກາະ. ເຂົາຕັດ ສິນໃຈດຶງ. ຄາວໜຶ່ງເຂົາເລີຍເຫັນດອນນ້ອຍໜຶ່ງຟູ້ຂຶ້ນຢູ່ປາຍເບັດ ຂອງເຂົາ. ເຂົາດຶງເບັດຂຶ້ນມາ ປະກົດວ່າດອນໜ້ອຍນັ້ນ ກໍ່ເຂົ້າ

ມານຳ. ກິທາຈິ ປະຫຼາດໃຈເມື່ອເຫັນວ່າຄອນນັ້ນຕິງແລະ ເຄື່ອນເຂົ້າມາຫາເຂົາ. ຄາວໜຶ່ງເຂົາກໍແນມເຫັນພົມສຸ້ກສຸຍ ແລະ ປາກຂອງມັນອ້າຂຶ້ນບັກໃຫຍ່ ພ້ອມທີ່ຈະສວາບເອົາໂຕເຂົາເຂົ້າໄປ ໃນທ້ອງ.

ກິທາຈິຮູ້ວ່າແມ່ນຜີ ຈຶ່ງຣີບຖິ້ມຄັນເບັດແລ້ວກໍແລ່ນໜີ ຄືນມາບ້ານ.



# ຊາໃໝ່

ແຕ່ປາງກີ້ປາງກ່ອນຍັງມີນາຍຊ່າງຜູ້ໜຶ່ງຂາດງຽວ ມື້ໜຶ່ງລາວໄປເຮັດວຽກທາງໄກ ເມື່ອຕົກແລງມາລາວກໍ່ຮີບຂຽວກັບເພື່ອຈະໃຫ້ຮອດບ້ານເຖິງເຮືອນກ່ອນຄ່ຳ ແຕ່ໂຊກບໍ່ໃຫ້ເພາະວ່າແຂ່ງບໍ່ຊ່າຂາບໍ່ເກິ່ງ ເຫຼືອແຮງທີ່ຕ້ອງປີກກະເດັກມາ. ໃນທີ່ສຸດຟ້າກໍ່ຄ່ຳເຂົ້າມາຊັກໃຈ ຈະຫາບ່ອນຊຸ່ມບ່ອນພັກແຮມຄືນກໍ່ບໍ່ມີນອກຈາກແຕ່ໂບດຮ້າງຂອງສີມິໂດະ ເຊິ່ງເປັນຄາດຕະສະຖານ ( ບ່ອນສັງຫານຄົນ ) ເຂົາເລີຍເຂົ້າພັກອາໄສນອນແຮມຫັ້ນ. ພໍດຶກສະຫງັດມາ ເຂົາໄດ້ຍິນສຽງບາດຕີນດັງມາແຊະແຊະ ເຮັດໃຫ້ໃຈຫາຍ ເຂົາມີນຕາຂຶ້ນເລີຍເຫັນຜີຫ່າແດງໂຕໜຶ່ງໜ້ວນໜຸ້ນ ຢືນຢູ່ຢ່າງບໍ່ເໜັງບໍ່ຕີງ. ອີກຄາວນ້ອຍໜຶ່ງ ກໍ່ມີສຽງລາກແກ່ອັນໃດອັນໜຶ່ງດັງມາຊາດ-ຊາດ. ຄາວນີ້ເຂົາເຫັນຜີໜ້າຂຽວເປັນຜູ້ແກ່ເຂົ້າມາ ເມື່ອມາຮອດຜີຫ່າ ແດງແລ້ວ ເຂົາທັງສອງກໍ່ເລີຍເລີ່ມຖຽງກັນຂຶ້ນ.

" ຊາກສົບຂອງກູ " ໂຕໜຶ່ງເວົ້າ.

" ບໍ່ ! ແມ່ນຂອງກູ " ອີກໂຕໜຶ່ງຄ້ານ.

" ຄັນຊັ້ນລອງຖາມບັກໜຸ່ມນອນລີ້ຢູ່ເທິງຕົ້ນເບິ່ງດູ ! ມັນຈະວ່າແມ່ນຂອງໃຜ ? "

ນາຍຊ່າງໜ້າຮາດໄປເພາະຄວາມຢ້ານກົວ ແຕ່ກໍ່ອົດສາ ລົງມາຫາພວກຜີເຫຼົ່ານັ້ນ :

" ສູ່ເຈົ້າປັ້ນໃຫ້ເປັນສອງພູດທໍ່ກັນ "

" ເອີ ! ມຶງມີເຫດຜົນ. ຖືກແລ້ວ ! "

ແລ້ວຜີກໍ່ເລີຍຕົກລົງແບ່ງຊາກຄົນຕາຍເປັນສອງພູດເທົ່າກັນແຕ່ພໍເຫັນເພັນຜູ້ນາຍຊ່າງຢືນສັ່ນຢູ່ດ້ວຍຄວາມຢ້ານຜີເລີຍເວົ້າຂຶ້ນວ່າ :

" ມຶງເປັນຄົນສັດຊື່ ເຮັດໃຫ້ພວກກູສິ້ງສາງໝົງ ທີ່ແຄງບໍ່ຊາຂາບໍ່ເກີງ. ມຶງຈົ່ງເອົາອັນນີ້ສາ"

ເວົ້າແລ້ວຜີເລີຍຈົກເອົາຂາຂອງຊາກຄົນຕາຍມາຕາບ ໃສ່ໃຫ້ເບື້ອງໜຶ່ງຂາຂອງນາຍຊ່າງຜູ້ນັ້ນ. ຄືນນັ້ນເຂົານອນບໍ່ຫຼັບທັງຄືນ ຕົກເຊົ້າມາເຂົາກໍ່ເລີຍຮີບອອກຈາກໂບດຮ້າງດັ່ງກ່າວແລ່ນໜີໄວ່ໆແຕ່ກໍ່ພົບຄວາມລຳບາກທີ່ສຸດເພາະຂາທີ່ຕໍ່ໃສ່ໃໝ່ນັ້ນບໍ່ແຂງແຮງ ດີປານໃດ ເປັນອຸ້ນປຸ້ນ ອັ້ນປັ້ນແນວໃດແນວໜຶ່ງ ເພາະມັນແມ່ນ ຂາຂອງແມ່ຍິງ.

# ຈີ່ໂກະ ແລະ ກະປູ

ແຕ່ຄັ້ງກ່ອນຂະນະທີ່ຈີ່ໂກະນອນຕາກແດດຢູ່ດິງ ກະປູໂຕ ຫນຶ່ງ ເລີຍຄານຂຶ້ນມາທ້າທາຍແລ່ນແຂ່ງກັນ. ເມື່ອຈີ່ໂກະໄດ້ຍິນ ດັ່ງນັ້ນ ເລີຍຫົວຂວັນຂຶ້ນທັນທີ.

" ມຶງນ໋ວາ ຈິມາທ້າແຂ່ງແລ່ນກັບກູ ? ມຶງຂວາງຂ້າງໝຶງໄປ ກໍພໍຕາຍແລ້ວ ຈິມາທ້າກູໄດ້ຈັ່ງໃດ ? "

ກະປູບໍ່ຍອມ ໃນທີ່ສຸດຈີ່ໂກະກໍຍອມຮັບ.

" ຫນຶ່ງ ! ສອງ ! ສາມ " ການແຂ່ງຂັນເລີ່ມຕົ້ນ ພໍຮອດ ສາມ ກະປູເລີຍຮີບຄວາດີຫນີບເອົາຫາງຈິໂກະ ພໍຈິໂກະ ໃກ້ຈິຮອດ ຫຼັກໄຊ ກະປູເລີຍຫນີບຫາງຈິໂກະເຂົ້າແຮງ ຈົນຈິໂກະຟຶດຫາງຮັດ ໃຫ້ກະປູ ຕົກໄປທາງຫນ້າເຂົ້າເສັ້ນຫຼັກໄຊກ່ອນ ຈຶ່ງເປັນອັນວ່າກະປູ ຊະນະ. ຈາກນັ້ນກະປູກໍເລີຍຫົວຂວັນຂຶ້ນດ້ວຍຄວາມຊື່ນໃຈ ແລ້ວກໍ ຄານກັບລົງໄປຫານໍ້າບ່ອນທີ່ມັນຂຶ້ນມາ.

# ທາງເອົາເມຍ

ແຕ່ກີ້ແຕ່ກ່ອນ ຍັງມີຍິງຜູ້ໜຶ່ງນັ່ງເອົານົມໃຫ້ລູກກິນ ຢູ່ຕໍ່ໜ້າບ້ານຂອງເຂົາ ຂະນະນັ້ນຍັງມີຂຽດໂຕໜຶ່ງຖືກງູໄລ່ຕົ້ນມາ. ບໍ່ພໍຄາວງູກໍຈັບຂຽດໂຕນັ້ນໄດ້ ຂຽດຮ້ອງ ແອ໋ວ ແອ໋ວ ສະແດງ ເຖິງຄວາມບໍ່ຢາກຕາຍ.

ເມື່ອເຫັນດັ່ງນັ້ນ ຍິງຄົນນັ້ນຈຶ່ງອ້ອນວອນຂໍໃຫ້ງູປ່ອຍຂຽດ ໄປສາ ງູກໍລົງປ່ອຍຂຽດໃຫ້ເປັນອິດສະຫຼະ ແຕ່ຕ້ອງມີເງື່ອນໄຂວ່າ : ເມື່ອແອ່ອອນທີ່ກິນນົມຢູ່ນັ້ນ ໃຫຍ່ຂຶ້ນມາແລ້ວ ຕ້ອງຍົກໃຫ້ ເປັນເມັຽມັນ. ຜູ້ເປັນແມ່ເດັກນ້ອຍຮັບເອົາເງື່ອນໄຂນີ້.

ຫຼາຍປີຜ່ານໄປ ເດັກນ້ອຍຜູ້ນັ້ນກໍໃຫຍ່ເປັນສາວມາ. ເວລານັ້ນງູກໍເລີຍກັບມາຫາ ເພື່ອທວງເອົານາງສາວນັ້ນເປັນເມັຽ ຜູ້ເປັນແມ່ໄດ້ເອົາລູກໄປເຊື່ອງໄວ້ໃນປຸ່ມ. ງູຮູ້ສົ້ນຂອງຜູ້ເປັນແມ່ເລີຍເລືອເຂົ້າໄປໂຄ້ງໂຕອ້ອມຮອບປຸ່ມຫວັງຈະຮັດໃຫ້ແຕກທະລາຍ. ຂະນະ

ນັ້ນຂຽດເລີຍປະກົດໂຕອອກມາຢູ່ຕໍ່ໜ້າງູ ພ້ອມທັງຄາບແມ໊ງລົນໜາ ໄວ້ໃນສົບ. ເມື່ອງູເຫັນດັ່ງນັ້ນຈຶ່ງຮີບປີບຕາຍກັບຄືນເມືອຢູ່ຖ້ຳ ເລີກເຫວຊັນຂອງມັນໄວ້ ເພາະວ່າຕາມສັນດານຂອງມັນແລ້ວ ງູຢ້ານແມ໊ງລົນໜາ.



# ກົບໂອສະກະ
# ກັບ ກົບກຽວໂຕ

ແຕ່ກ່ອນຕົກາງ ທີ່ນະຄອນ ໂອສະກະ ດິນຟ້າອາກາດ ປະສົບຄວາມແຫ້ງແລ້ງ ອາກາດຮ້ອນເອົາຫານ້ຳຈະໃຊ້ຈະກິນກໍຍາກ ໂດຍສະເພາະສັດຈຳພວກກົບ ຫາກຂາດນ້ຳແລ້ວ ກໍ່ບໍ່ສາມາດ ຈະດຳລົງຊີວິດຢູ່ໄດ້ເລີຍ ດັ່ງນັ້ນກົບຢູ່ໃນນະຄອນດັ່ງກ່າວ ຈຶ່ງຕັດສິນໃຈ ໜີຈາກຖິ່ນຖານບ້ານເດີມຂອງຕົນໄປຫາທີ່ອື່ນຢູ່.

" ໄປຢູ່ກຽວໂຕ ຈະດີກວ່າ ເພາະວ່າຢ່າງນ້ອຍຢູ່ພຸ້ນຍັງມີນ້ຳ ແລະມີທຳມະຊາດທີ່ສວຍງາມ "

ຂະນະດຽວກັນນັ້ນນະຄອນກຽວໂຕ ກໍປະສົບຄວາມ ແຫ້ງແລ້ງເໝືອນນະຄອນໂອສະກະ ແລະບັນດາກົບຂອງນະຄອນກຽວໂຕກໍພາກັນໜີຈາກຖິ່ນຖານ ເພື່ອໄປຊອກຫາຖິ່ນຢູ່ອາໄສທີ່ດີກວ່າ.

" ໄປຢູ່ໂອສະກະຈະດີກວ່າ ເພາະວ່າຢ່າງນ້ອຍຢູ່ພຸ້ນຍັງມີນ້ຳ ແລະມີທຳມະຊາດທີ່ສວຍສົດງົດງາມ "

ກົບທັງສອງຖິ່ນ ພາກັນເດີນທາງອອກຈາກບ້ານເກີດ ເມືອງນອນຂອງຕົນ ຈຳພວກຫນຶ່ງມຸ່ງຫນ້າໄປສູ່ໂອສະກະ ແລະ ຈຳພວກຫນຶ່ງມຸ່ງຫນ້າໄປສູ່ກຽວໂຕ. ທັງສອງຈຳພວກໄປພໍ້ກັນຢູ່ຈອມພູ ແຫ່ງຫນຶ່ງ ຈຶ່ງຖາມຂ່າວຄາວ ແລະເຫດຜົນການໄປມາຂອງກັນ ແລະກັນ ເມື່ອຮູ້ວ່າທັງສອງຝ່າຍ ພາກັນຍ້າຍຄອບຄົວມາຍ້ອນເຫດຜົນອັນດຽວກັນ ຈຶ່ງຕົກລົງເບັງໂຕ ຕຶ່ງຕາຂຶ້ນໃຫຍ່ໆ ເພື່ອຫມົ້ງເບິ່ງເມືອງ ທັງສອງບ່ອນທີ່ຕົນຈະໄປ. ແຕ່ຄວາມຈິງແລ້ວກົບໂອສະກະ ແນມເຫັນເມືອງໂອສະກະຂອງໂຕເອງ ກົບກຽວໂຕກໍແນມເຫັນເມືອງກຽວໂຕຂອງຕົນເອງ ແລ້ວກໍພາກັນອຸທານດ້ວຍຄວາມໂມໂຫຂຶ້ນວ່າ :

" ກຽວໂຕກໍບໍ່ຕ່າງຫຍັງກັບໂອສະກະເລີຍ" ກົບໂອສະກະເວົ້າ

" ໂອສະກະກໍບໍ່ຕ່າງຫຍັງກັບກຽວໂຕເລີຍ" ກົບກຽວໂຕເວົ້າ

ກົບທັງສອງຈຳພວກໄດ້ຕົກລົງກັບຄືນໄປຖິ່ນເກົ່າຖິ່ນເດີມ ຂອງໃຜຂອງມັນ.



# ພະຍີ່ໂຊະປົວເດັກ

ຢູ່ບ້ານຕາມູລະຄຸມນັ້ນຜູ້ຄົນໃຫ້ຄວາມເຄົາລົບຕໍ່ພະພຸດທະຮູບ ຍີ່-ໂຊະ ອັນເປັນພະເຈົ້າຜູ້ປົກປ້ອງເອົາເດັກນ້ອຍ ກົກເຄົ້າຂອງຄວາມເຊື່ອຖືມ ມີເລື່ອງເລົ່າກັນມາດັ່ງນີ້ :

ແຕ່ກີ້ແຕ່ກ່ອນ ພະພຸດທະຮູບອົງໜຶ່ງຖືກວາງຢູ່ຕາມແຄມຫົນທາງ ເດັກນ້ອຍ 5 ຄົນມາພົບ ເລີຍພາກັນເອົາໄປຫລິ້ນ. ຂະນະນັ້ນຍັງມີຍິງແກ່ຜູ້ໜຶ່ງຍ່າງກາຍມາທາງນີ້ ເລີຍຫ້າມບໍ່ໃຫ້ເດັກນ້ອຍຫລິ້ນພ້ອມກັນນັ້ນນາງກໍເອົາໄປຕັ້ງໄວ້ເທິງແທ່ນ ແລ້ວກໍເອົາເຂົ້າຕອກດອກໄມ້ບູຊາ.

ເດັກນ້ອຍ ຮູ້ສຶກເສັຽດາຍເພາະວ່າສັງຫາກໍເລີ່ມແປ້ນຫລິ້ນ ທີ່ນັ້ນ. ຕົກກາງຄືນມາເດັກນ້ອຍທັງ 5 ເລີຍລົ້ມເຈັບທັນທີ່ຜູ້ເປັນພໍ່ແມ່ມີຄວາມເປັນຫ່ວງເປັນໃຍ ເລີຍຮີບໄປໄຫວ້ພະໃນວັດ ເວລານັ້ນພະຍີ່ໂຊະເລີຍປະກົດຕົວເປັນເງົາອອກມາ ແລ້ວກໍເວົ້າວ່າ :

" ເດັກນ້ອຍພວກນັ້ນ ຫລິ້ນນຳອາຕະມາດິງ ພັດເອົາ ອາຕະມາມາຕັ້ງໄວ້ກັບທີ່ ບໍ່ໃຫ້ຫລິ້ນກັບພວກເຂົາ "

ພວກພໍ່ແມ່ຂອງເດັກນ້ອຍຮູ້ເລື່ອງແລ້ວ ກໍ່ຮີບພາກັນເອົາ ພະພຸດທະຮູບຍີໂຈະ ມາໃຫ້ເດັກນ້ອຍຫລິ້ນ ແລ້ວເດັກນ້ອຍ ເລີຍຫາຍປ່ວຍ. ເລີ່ມຕັ້ງແຕ່ນັ້ນມາ ພະຍີໂຈະເລີຍລົງມາຫລິ້ນ ໝາກລີ້ ກັບເດັກນ້ອຍ ຊ່ອຍຊູແລະຮັກສາສຸຂະພາບໃຫ້ເດັກນ້ອຍ. ຜູ້ຄົນຮູ້ ຈັກເລື່ອງນີ້ເລີຍພາກັນເຮັດພະພຸດທະຮູບຍີໂຈະຂຶ້ນອີກຈຳນວນຫລາຍ ຄື 5 ຫລັງເຮືອນໃດ ຫນຶ່ງອົງ. ເມື່ອຮອດວັນທີ 28 ຂອງແຕ່ລະເດືອນ ເຜີ່ນກໍ່ຈັດພິທີເອົາພະຍີໂຈະລົງຂັດສີ ແລ້ວກໍ່ເອົາເຂົ້າໄວ້ທາງໄວ້ແທ່ນຄືນ. ຜູ້ຄົນເວົ້າກັນວ່າໃນຄືນຂອງວັນທີ 28 ນັ້ນ ພະຍີໂຈະຫລິ້ນກັບເດັກນ້ອຍຢ່າງມ່ວນຊື່ນສະໜຸກສະໜານ.



# ຂີ້ກະເດືອນຕ່ຳເສື່ອ

ແຕ່ກ່ອນຍັງມີຂີ້ກະເດືອນແລະຄັນຄາກເປັນສ່ຽວກັນ. ທັງສອງຕົກລົງຈະຕ່ຳເສື່ອປູ່ງຄົນລະຜືນ. ຂີ້ກະເດືອນຈະເລືອກເອົາ ເສັ້ນໄໝແລບໆຕ່ຳເສື່ອຈົ່ງງາມ. ສ່ວນຄັນຄາກນັ້ນຈະເລືອກເອົາ ຝ້າຍເສັ້ນໃຫຍ່ ເພື່ອຈະຕ່ຳງ່າຍດາຍກວ່າ ບໍ່ກີດຂອງຫຍັງ. ແລ້ວຂີ້ກະເດືອນກໍ່ກາງພັນເອົາເສັ້ນໄໝໂດຍກົງ ເຊິ່ງປັດຈຸບັນເພິ່ນຍັງ ເຫັນຮອຍເສັ້ນໄໝອ້ອມໂຕແລະຄໍຂອງມັນຢູ່.

24/VIII
ຫ້າມຈຳໜ່າຍ

# ກອງເກົ່າ

ແຕ່ກີ້ແຕ່ກ່ອນ ຍັງມີຄົນເດີນທາງໜຸ່ມຜູ້ໜຶ່ງ ເດີນທາງໄປຄົນດຽວ ເມື່ອລາວໄປຮອດບ້ານແຫ່ງໜຶ່ງກໍ່ພໍດີຕາເວັນຕົກດິນ ຈຳເປັນເລີຍຊອກຫາບ່ອນພັກແຮມ. ແຕ່ຂໍພັກນຳໃຜກໍ່ບໍ່ໃຫ້ພັກ ທ້າວຈຶ່ງ ຕັດສິນໃຈໄປພັກໃນວັດຮ້າງຫລັງໜຶ່ງຢູ່ນອກບ້ານ.

ປະຊາຊົນຊາວບ້ານບອກວ່າ ຢ່າເຊົາວັດດັ່ງກ່າວ ເພາະ ມີຜີຫລອກຮ້າຍແຮງ ແຕ່ທ້າວກໍ່ບໍ່ຢ້ານແລະບໍ່ຟັງເພາະຈົນໃຈ. ຕອນເດິກມາເມື່ອທ້າວກຳລັງຈະຫລັບ ກໍ່ເລີຍມີສຽງດັງຟົດສະໜັ່ນ ຫວັ່ນໄຫວຂຶ້ນມາ ກອງກໍ່ດັງເປັນຈັງຫວະ ເຄື່ອງເສບເຄື່ອງຊໍເລີຍ ສະຫລັບພ້ອມຄົບຂັນ. ຖ້ວຍບ່ວງໝໍ້ແຫກແຕກໂປະ ພາກັນມາຟ້ອນ ອ້ອນໂຕເຂົາ. ເຂົາແນມເບິ່ງການສະແດງດົນຕີອັນແປກປະຫລາດ ດັ່ງກ່າວແລ້ວເຂົາກໍ່ເລີຍຮ້ອງເພັງຂຶ້ນໃຫ້ຖືກຕາມຈັງຫວະ :

" ໂອລະນໍ ກອງຂາດ ຊໍ້ຮາງອີແມ່ກູເຮີຍ ຫຍັງຊ່າງ ອຸບປະ

ໂຫຼກເຕັ້ນ ພໍຣຽມຈົນສະເໝີ່ນ ເຫັນຖ້ວຍບ່ວງເປາະປື່ອງຟ້ອນນອນ
ລ້າພັດບໍ່ເປັນ "

ເວລາຂອງກາງຄືນຄ່ອຍໆເລື່ອນຜ່ານໄປ ແລ້ວແສງສະຫວ່າງຄ່ອຍຍັບເຂົ້າມາແທນທີ່ ຕົກຣຸ່ງເຊົ້າມາ ຊາວບ້ານຣິບພາກັນມາພິສູດເບິ່ງວ່າ ຊະຕາກຳຂອງທ້າວນັກເດີນທາງຈະເປັນແນວໃດ. ລາວກໍ່ປອດໄພດີທຸກປະການ.



# ນົກຕ່າງຕີນ

ເພິ່ນເວົ້າໃຫ້ຟັງວ່າ ແຕ່ກ່ອນນົກ ໂຕກຸໂບ ອ່ອນໂຕໜຶ່ງເຊິ່ງຖືວ່າເປັນນົກພັນທີ່ມີຈະລິຍາທຳສູງ, ໄດ້ໄປກິນໝາກໄມ້ແກ່ນ ໜຶ່ງຄາຄໍເຮັດແນວໃດກໍ່ບໍ່ອອກ, ນົກໃກ້ຄຽງຈຶ່ງຮີບໄປບອກຜູ້ເປັນພໍ່ແມ່ທີ່ກຳລັງເຮັດວຽກຢູ່ຂ້າງນອກ. ພໍ່ແມ່ຮູ້ຂ່າວກໍ່ຮີບຟ້າວມາຫາ ແຕ່ກໍ່ບໍ່ທັນສາແລ້ວ ລູກຕາຍກ່ອນ. ເລີ່ມແຕ່ນັ້ນມາເມື່ອຮອດລະດູເກັບກ່ຽວມາ ນົກດັ່ງກ່າວຈຶ່ງຮ້ອງ ໂຕກຸໂບ ໂຕກຸໂບ. ນົກດັ່ງກ່າວ ມີຂົນຫຸ້ມຕີນເບື້ອງດຽວ.

# ຜົວຂອງຜີຢ່າຮ້າງ

ແຕ່ກີ້ແຕ່ກ່ອນ ຍັງມີຜີຢ່າຮ້າງໂຕໜຶ່ງ ຄິດຢາກໄດ້ໃຜ ຜູ້ໜຶ່ງມາເປັນຜົວ. ຄັນຄິດຈັ່ງຊັ້ນແລ້ວມັນເລີຍລົງຈາກເຮືອນຮັງຂອງມັນທີ່ຢູ່ເທິງພູ ແລ້ວກໍ່ມຸ່ງໜ້າໄປສູ່ບ້ານແຫ່ງໜຶ່ງ ເຊິ່ງມີຊາຍໂສດ ເຖົ້າຄົນໜຶ່ງ. ຜີຢ່າຮ້າງເວົ້າກັບຊາຍເຖົ້າຄົນນັ້ນວ່າ :

" ເອົາຂ້ອຍເຮັດເມັຽສ໋າ "

ຊາຍເຖົ້າຜູ້ນັ້ນບໍ່ຢາກເອົາເລີຍ ແຕ່ຄວາມຢ້ານໄດ້ມາ ບັງຄັບໃຫ້ລາວຕ້ອງເອົາ. ເມື່ອເອົາກັນໄປແລ້ວ ໃນເບື້ອງຕົ້ນ ຜີຢ່າຮ້າງກໍທຳທ່າປະຈົບປະແຈງໜຶ້ງເຂົ້າເປົ່າໄຟ ຄົວເຂົ້າຄົວນ້ຳ ສູ່ຜົວກິນ. ແຕ່ຢູ່ມາບໍ່ພໍທໍ່ໃດ ຜີຢ່າຮ້າງຢາມັນບ່າ ເລີຍເວົ້າກັບຜົວວ່າ :

" ເຂົ້າໝົດແລ້ວ "

ຜູ້ເປັນຜົວຮີບອອກຕະເວນ ເພື່ອໄປຊອກເຂົ້າສູ່ເມັຽກິນ. ຢູ່ຕໍ່ມາບໍ່ຮອດພໍທໍ່ໃດ ຜູ້ເປັນເມັຽເລີຍເວົ້າອີກວ່າ :

" ເຂົ້າໜຶກແລ້ວ "

ຄາວນີ້ຜູ້ເປັນຜົວຮູ້ສຶກບໍ່ອຸ່ນອ່ຽນໃຈປານໃດ ເພາະເຂົ້າ ຊຸນ້ຳຕັ້ງຫຼາຍ ເປັນຫຍັງຈຶ່ງໜຶກໄວ້ເອົາແທ້ເອົາວ່າ. ເຊົ້າມື້ໜຶ່ງຜູ້ເປັນຜົວຕ່າງກໍອອກໄປໄຖນາ ແຕ່ພໍອອກໄປວິດຕາເມັຽເລີຍເຂົ້າໄປ ລີ້ຢູ່ເລົ້າເຂົ້າເພື່ອຕິດຕາມເບິ່ງອາການຂອງເມັຽ ຜູ້ເປັນເມັຽເອົາເຂົ້າປະມານກະໂລ່ງໜຶ່ງໄປຫຸງໃສ່ໝໍ້ກະທະບັກໃຫຍ່ ເມື່ອຫຸງສຸກ ແລ້ວມັນກໍ່ຍົກໝໍ້ຂຶ້ນສູງເທິງຫົວເພື່ອຖອກເຂົ້າລົງແລ້ວກະໂຫຼກຫົວຂອງມັນເລີຍຍະອ້າກວ້າງອອກ ເປັນປາກບັກໃຫຍ່ ຮັບເອົາເຂົ້າກ້ອນ ບັກໃຫຍ່ດັ່ງກ່າວ. ເມື່ອເຕັມກັບຕາດັ່ງນັ້ນແລ້ວ ຊາຍເຖົ້າເລີຍຮີບຫາຍໜ້າໄປທີ່ອື່ນ ເພື່ອຈະກັບຄືນມາໃນຕອນແລງ. ເມື່ອກັບມາ ຮອດເຮືອນແລ້ວ ຜົວເລີຍຖອດຮູ່ຍອອກມາ :

" ໂອຍ ! ເໝື່ອຍ ! "

ຜູ້ເປັນເມັຽອອກມາຕ້ອນຮັບຜົວ ແລ້ວຜູ້ເປັນຜົວເລີຍເວົ້າກັບເມັຽວ່າ

" ເຈົ້າກິນຫຼາຍໂພດ ກັບຄືນໄປຢູ່ເທິງພູຂອງເຈົ້າຄືນສາ "

" ຕົກລົງ ແຕ່ວ່າເອົາກະຖັງໃຫ້ຂ້ອຍໜ່ວຍໜຶ່ງເພື່ອຈະເອົາໄວ້ຫຸງເຂົ້າ "

ຜູ້ເປັນຜົວຕົກລົງໄປຊອກຊື້ກະຖັງໃນເມືອງມາໃຫ້ ພໍດີມາຮອດເຮືອນແລ້ວ ພີ່ຍາຮ້າງເລີຍຈັບເອົາຊາຍເຖົ້າຍັດໃສ່ກະຖັງ ດັ່ງກ່າວ

ແລ້ວກໍອັດແຈບໆ ແລ້ວກໍແບກເອົາກະຖັງນົມຂຶ້ນໄປເທິງພູ ເມື່ອຮອດ
ກາງທາງພິ່ຍາຮ້າງເລີຍເຊົາເໝື່ອຍເອົາແຮງຢູ່ຕີນກົກໄຮໃຫຍ່ ມີ
ຮາກເຕົ້າລຸງລັງ. ຊາຍເຖົ້າຜູ້ເປັນຜົວສວຍເອົາໂອກາດນີ້ ຄ່ອຍໆ
ໄຂຝາກະຖັງອອກ ແລ້ວກໍຄານຄ່ອຍຂຶ້ນໄປລີ້ຢູ່ປາຍຕົ້ນໄຮ ໃຫຍ່ຕົ້ນ
ນັ້ນ. ເມື່ອພິ່ຍາຮ້າງເຊົາເໝື່ອຍເອົາແຮງແລ້ວ ຈຶ່ງແບກເອົາ ກະ
ຖັງນົມເດີນທາງຕໍ່ຈົນຮອດເຮືອນຮັງຂອງຕົນ ພໍຮອດເຮືອນແລ້ວພິ່ຍາ
ຮ້າງກໍປ່າວເອົາພວກລູກຫຼານມາ :

" ນາງ ! ສູມາ ! ກູໄດ້ເຂົ້າໜົມມາໃຫ້ສູຊິມ "

ພວກພິນ້ອຍທັງຫຼາຍພາກັນມາໄຂກະຖັງອອກ ແຕ່ບໍ່ເຫັນຫຍັງ ຈຶ່ງພາ
ກັນນຳຫາ. ຂະນະນັ້ນຊາຍເຖົ້າກຳລັງຈະລົງຈາກຕົ້ນໄມ້ ເລີຍເຫັນ
ພິ່ຍາຮ້າງແລ່ນມາຕາມ ຈຶ່ງຮີບຂຶ້ນເມືອຢູ່ປາຍໄມ້ຄືນ ພິ່ຍາຮ້າງມາບ
ເຫັນຜູ້ເປັນຜົວຢູ່ປາຍໄມ້ ຈຶ່ງແກ້ນົມອອກ ທັນໃດນັ້ນນົມເລີຍ ກາຍ
ເປັນກຽວ ບັກທື້ນກົກໄມ້ນັ້ນ. ຊາຍເຖົ້າເຫັນດັ່ງນັ້ນຈຶ່ງຫວງວອນວ່າ

" ກ່ຽວນົມເຮີຍ ! ຢ່າບັກໄມ້ເລີຍ ຈົ່ງບັກໂຕເອງເທີດ "

ກ່ຽວເລີຍບັກຕົນເອງ ເຮັດໃຫ້ພິ່ຍາຮ້າງອາບດ້ວຍເລືອດຈຶ່ງຮີບແລ່ນ
ກັບໄປເຮືອນຮັງຂອງມັນຢູ່ເທິງພູຄືນ.

# ນົກເຂົາຊາຍ ແລະ
# ນົກກາງແກປັນຄຳກັນ

ຍັງມີນົກເຂົາຊາຍໂຕໜຶ່ງ ຍ່າງຂຶ້ນພູເນີອດ້ວຍຄວາມ ອິດເໜື່ອຍພໍດີເຖິງເຫງົ້າໃຫຍ່ຂອງຕົ້ນກົກຕົ້ນໜຶ່ງ ເລີຍພົບເງິນ ຮ້ອຍອັດ ຈຶ່ງຮ້ອງຂຶ້ນດ້ວຍຄວາມດີໃຈວ່າ :

" ກູໄດ້ເງິນ "

ຂະນະນັ້ນນົກກາງແກທີ່ຈັບຢູ່ເທິງງ່າໄມ້ເລີຍໄດ້ຍິນ ຈຶ່ງຮ້ອງ ລົງມາໃສ່ນົກເຂົາຊາຍວ່າ :

" ຢ່າໄດ້ ! ເງິນນີ້ກູເຫັນກ່ອນແລ້ວໄດ້ ! "

ນົກເຂົາຊາຍຖຽງຄືນ.

" ກູເປັນຜູ້ເກັບ ກູເປັນຜູ້ເຫັນກ່ອນ ຄັນມຶງເຫັນກ່ອນມຶງຫຍັງບໍ່ເກັບ " ທັງສອງຖຽງກັນໄປໄຖກັນມາ ເລີຍຮ້ອນຮອດໝູ່ມົດງາມທີ່ຢູ່ໃນເຮືອນຮັງຂອງມັນທີ່ໂກນເຫງົ້າໄມ້ກໍ່.

" ສູເຈົ້າມີຄວາມຂັດຂ້ອງໝອງໃຈກັນຫຍັງເດ ຖ້າບໍ່ລັງກຽດ

ຂ້ອຍຂໍໃຫ້ຄວາມຊ່ອຍເຫຼືອແກ່ພວກເຈົ້າເທາະ ! "

ນົກທັງສອງຕ່າງກໍລາຍງານເຫດການຕ່າງໆຕໍ່ນົກ ເຊິງ ຄອຍໂອກາດຢູ່. ເມື່ອໄດ້ຈັງຫວະ ນົກເລີຍຄວາໄປໃສ່ກອງເງິນ :

" ນົກກາງແກເອົາ 8 ອັດ ນົກເຂົາຊາຍເອົາ 4 ອັດ ເຫຼືອນັ້ນແມ່ນຄ່າກູເປັນຜູ້ຕັດສິນ ! "

ເວົ້າແລ້ວນົກກໍຫຼອບເອົາເງິນທີ່ຍັງເຫຼືອນັ້ນແລ່ນລົງຮັງ ປະໃຫ້ນົກທັງສອງນອງເບິງຫນ້າກັນລວາມລົ້ມຢ່າງປາກບໍ່ໄດ້.

( ນິທານລາວເຮົາກໍມີແບບດຽວກັນນເຊັ່ນຜູ້ໄທປັ້ນອ້ນ )



# ລື້ຢ້ານເກີດເປັນຄີ

ແຕ່ປາງກ່ອນ ຍັງມີຊາຍຄົນໜຶ່ງເປັນຄົນຂີ້ຢ້ານອີຫຼີ ສ່ວນເມັຽຂອງລາວພັດເປັນຄົນກິນໄດ້. ແລງໜຶ່ງ ພາຍຫຼັງທີ່ລາວກັບມາ ແຕ່ຍ່າງຫຼິ້ນແລ້ວ ເລີຍຮູ້ສຶກວ່າເປັນ ທີ່ງ່ອນກົ້ນຂອງຕົນ ຈຶ່ງຮີບເອີ້ນໂວຍວາຍຫາເມັຽມາຊ່ອຍ.

" ກາກະ ! ກາກະ ( ເມັຽ-ເມັຽ ) ຜີເຜດມາຈັບຄໍ້ຂ້ອຍຊ່ອຍແດ່ "

" ກະໂພດດອກ ! ອາຍຸຜ້ານນີ້ແລ້ວຍັງເຊື່ອຜີຢູ່, ບໍ່ມີຜີສາງຫຍັງດອກ " ເມັຽເວົ້າແລ້ວກໍນັ່ງກິນຫຍັງຕໍ່ຫຍັງຕໍ່.

" ຮວາຍ ! ແມ່ນແທ້ລະບໍ່. ມີເປັນງຂອງມັນຈັບ ງ່ອນກົ້ນຂ້ອຍຢູ່ນີ້ມາ "

ຜູ້ເປັນເມັຽຍ່າງໄປເບິ່ງ :

" ມັນແມ່ນຢອດນ້ຳຕົກຈາກເຕົ້າ ຖືກງ່ອນເຈົ້າຊື່ໆ "

ຜູ້ເປັນຜົວຮູ້ສຶກສະບາຍແລະລົ້ງໃຈ.

" ເອີ ! ໄຄແດ່ ! ຜີເຜດທັງຫຼາຍນັ້ນ ພຽງແຕ່ແມ່ນ ເມັດນ້ຳປອດລົ້ງມາຊື່ງ "

" ກໍແມ່ນຫັ້ນແລ້ວ ເພື່ອນຍາກແຫ່ງຊີວິດຂອງຂ້ອຍເອີຍ ! "

" ເອີ ! ຖ້າແນວນັ້ນ ຕັ້ງແຕ່ນີ້ຕໍ່ໄປຂ້ອຍຈະບໍ່ຢ້ານຜີອີກເລີຍ"

ເວລາຕໍ່ມາບໍ່ພໍທໍ່ໃດ ກໍມີຂ່າວເລົ່າລືກັນໄປບອກວ່າຜີເຜດ ມາອາລະວາດບ້ານຊ່ອງ ຜູ້ຄົນຊາວບ້ານຊາວເມືອງຕ່າງກໍພາກັນ ຫົດຫູ່ປ່ຢ້າວຢູ່ເຮືອນ ບໍ່ກ້າຈະອອກມາເລາະບ້ານເລາະຂວງຍັງມີແຕ່ຊາຍຂີ້ຢ້ານຄົນນັ້ນທີ່ເວົ້າໃນໃຈຕົນວ່າ : " ຜີເຜດພຽງແຕ່ແມ່ນປອດນ້ຳໝົ້ນ ຈະໄປຢ້ານມັນຫຍັງ " ເວົ້າແລ້ວລາວເລີຍຈັບເອົາສາວຕາກເຄື່ອງໄປລຳໜຶ່ງ ແລ້ວກໍເລາະໄປຕາມບ້ານຕາມຊ່ອງເຊິ່ງບໍ່ມີຜູ້ໃດຈະປະກົດຕົວອອກມາເລີຍ. ຄວາມຈິງແລ້ວຄາວນັ້ນແມ່ນເຜດອື່ນໆທີ່ມາອາລະວາດ. ເຜດດັ່ງກ່າວໂຕໃຫຍ່ມະຫາ ຂາຈ່ອຍໆ ເບິ່ງແລ້ວ ຄືກະປູໂຄກ. ເຜດໂຕນັ້ນເວົ້າກັບຄົນຂີ້ຢ້ານວ່າ :

" ກູຈະຈັບມຶງ ! ກູຈະເອົາມຶງໄປ "

ແຕ່ຄົນຂີ້ຢ້ານຕອບໄປວ່າ :

" ເອີ ! ເຊີນມຶງມາເບິ່ງ ຖ້າມຶງກ້າ " ເວົ້າແລ້ວລາວກໍຈໍ່ປາຍສາວໃສ່ຜີແລ້ວໄລ່ຕີຜີ ເມື່ອໄປຮອດຂົວແຫ່ງໜຶ່ງເຂົາເລີຍເອົາ

ສ້າວງັດພິຕຶກຫ້ວຍ ແລ້ວຍັງລົງໄປໄລ່ຈະຊ້ຳມັນອີກ. ແຕ່ພໍດີ ຄົນຂີ້ຢ້ານລົງໄປຮອດນ້ຳກໍເລີຍຕົບໄຫແຕກມິຕ່ອນຄ່ຳຊະປູ່ຖາມນັ້ນ ຄາວໜຶ່ງກໍ່ມີສຽງດັງອອກມາວ່າ :

" ປູ່ໄດ້ທົດລອງຫາຄົນກ້າຫານມາຫາປູ່ ແຕ່ທຸກຄົນໃຜງ ກໍ່ຂີ້ຢ້ານ ມີແຕ່ຫຼານຄົນດຽວທີ່ກ້າຫານແທ້ ດັ່ງນັ້ນເຈົ້າຈຶ່ງເປັນຜູ້ຄອງສົມບັດທີ່ປູ່ມອບໃຫ້ "



ພິມທີ່ ໂຮງພິມແຫ່ງລັດ